# ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງ ໃນຕົວເມືອງປາກເຊ ແຂວງຈຳປາສັກ

# State Investment Study The Construction Of Road In Pakse District Champasak Province

ໂດຍ: ທ້າວ ໄພວັນ ຊຸນພາລາ

ວິທະຍານິພົນລະດັບປະລິນຍາໂທ
ຫຼັກສູດປະລິນຍາໂທນິຕິສາດ
ສາຂາ ກົດໝາຍທຸລະກິດ
ມະຫາວິທະຍາໄລແຫ່ງຊາດ

2018

# ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງ
# ໃນຕົວເມືອງປາກເຊ ແຂວງຈຳປາສັກ

## State Investment Study The Construction Of Road
## In Pakse District Champasak Province

ວິທະຍານິພົນນີ້ດຳເນີນຕາມຫລັກສູດປະລິນຍາໂທນິຕິສາດ

ສາຂາກົດໝາຍທຸລະກິດ ຄະນະນິຕິສາດ ແລະ ລັດຖະສາດ

ມະຫາວິທະຍາໄລແຫ່ງຊາດ

ໄດ້ຜ່ານການປ້ອງກັນ, ຄັ້ງວັນທີ 20 ມັງກອນ 2018


ໂດຍ: ທ້າວ ໄພວັນ ຂຸນມາລາ

**Mr. Phaivanh KHOUNMALA**

**ລະຫັດນັກສຶກສາ: MFLA0033/16**


ວິທະຍານິພົນນີ້ເປັນສ່ວນໜຶ່ງຂອງຫຼັກສູດ

ການສຶກສາປະລິນຍາໂທນິຕິສາດສາຂາກົດໝາຍທຸລະກິດ

ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

**2018**

ບົດວິທະຍານິພົນນີ້ຮັບຮອງໂດຍ:

1. ທ່ານ ຮສ ໄພມະນີ ໄຊວົງສາ — ອາຈານທີ່ປຶກສາ....................

ຄະນະກຳມະການປ້ອງກັນບົດ:

1. ທ່ານ ສຈ ເກດ ກຽດຕິສັກ — ປະທານ..................................
2. ທ່ານ ຮສ ວຽງວິໄລ ທ່ຽງຈັນໄຊ — ກຳມະການ..............................
3. ທ່ານ ຮສ ບຸນທ່ຽງ ພົມມະຈັນ — ກຳມະການ.............................
4. ທ່ານ ປອ ສົມເດດ ແກ້ວວົງສັກ — ກຳມະການ.............................
5. ທ່ານ ປທ ສຸລິຍັນ ລຸນຈັນທາ — ກຳມະການ.............................

ຄະນະບໍດີ

ວັນທີ 0 5 FEB 2018 ........................................................

ຄະນະ ນິຕິສາດແລະ ລັດຖະສາດ

ລາຍເຊັນ........................................................

ຮສ ແສງເພັດ ອຸໄທ

# ຄຳຂອບໃຈ

ໃນການຂຽນວິທະຍານິພົນເລື່ອງ ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຈະປະສົບຜົນສຳເລັດໄດ້ກໍ່ຍ້ອນມີການຮ່ວມມື ແລະ ຊ່ວຍເຫຼືອຈາກບັນດາທ່ານທີ່ມີພະຄຸນຢ່າງໃຫຍ່ຫຼວງຫຼາຍທ່ານ. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຖືໂອກາດນີ້ຂໍຂອບໃຈມາຍັງ:

ຮອງສາດສະດາຈານ ໄພມະນີ ໄຊວົງສາ ອາຈານຊີ້ນຳ ໂດຍທ່ານໄດ້ເສຍສະຫຼະເວລາອັນມີຄຸນຄ່າຂອງທ່ານສຸມທຸກເຮືອແຮງ ແລະ ສະຕິປັນຍາຂອງທ່ານໃຫ້ຄຳປຶກສາ, ແນະນຳ, ຊ່ວຍເຫຼືອທາງດ້ານຕ່າງໆເຊັ່ນ ແນະນຳຫຼັກການ, ການເກັບຂໍ້ມູນ, ວິທີການສຳພາດ, ກວດແກ້ວິທະຍານິພົນສະບັບນີ້ຈົນສຳເລັດ.

ຄະນະກຳມະການປ້ອງກັນບົດວິທະຍານິພົນທຸກທ່ານ ທີ່ໄດ້ເສຍສະຫຼະເວລາອັນມີຄຸນຄ່າຂອງທ່ານມາເປັນກຳມະການປ້ອງກັນບົດວິທະຍານິພົນໃນຄັ້ງນີ້ ໂດຍທ່ານໄດ້ແນະນຳເຕັກນິກ ແລະ ເນື້ອໃນຂອງບົດ ເຮັດໃຫ້ບົດມີເນື້ອໃນອຸດົມສົມບູນຍິ່ງຂຶ້ນ.

ຄະນະນຳຄະນະນິຕິສາດ ແລະ ລັດຖະສາດ, ຄູອາຈານສອນທຸກທ່ານ ແລະ ພະນັກງານພະແນກສຶກສາຫຼັງປະລິນຍາຕີທີ່ໄດ້ຖ່າຍທອດຄວາມຮູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ຂ້າພະເຈົ້າທຸກປະການໃນການສຶກສາຮ່ຳຮຽນ ແລະ ສຳເລັດການສຶກສາຄັ້ງນີ້.

ພະນັກງານປະຈຳສະຖານທີ່ທີ່ສະໜອງຂໍ້ມູນຕ່າງໆເຊັ່ນ ກະຊວງແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ, ພະແນກການເງິນແຂວງຈຳປາສັກ, ບໍລິສັດຮັບເໝົາກໍ່ສ້າງ, ຫ້ອງສະໝຸດຄະນະນິຕິສາດ ແລະ ລັດຖະສາດ, ຫ້ອງສະໝຸດຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ທີ່ໄດ້ສະໜອງຂໍ້ມູນ, ຕອບແບບສອບຖາມ ແລະ ຕອບຄຳຖາມສຳພາດຕ່າງໆ ເພື່ອປະກອບສ່ວນໃນການສຶກສາຄົ້ນຄວ້າໃນຄັ້ງນີ້ຈົນສຳເລັດຜົນ.

ພໍ່ແມ່, ໝູ່ເພື່ອນ ແລະ ການຈັດຕັ້ງ ທຸກຄົນ ທີ່ສະໜັບສະໜູນດ້ານທຶນຮອນໄດ້ອຳນວຍຄວາມສະດວກ ແລະ ໃຫ້ຄວາມອົບອຸ່ນໃຫ້ທຶນຮອນໃນການສຶກສາຄັ້ງນີ້ຈົນສຳເລັດຜົນຢ່າງຈົບງາມ.

ໄພວັນ ຊຸນມາລາ
ນັກສຶກສາປະລິນຍາໂທນິຕິສາດ
ສາຂາກົດໝາຍທຸລະກິດ ຮຸ່ນທີ I

# ບົດຄັດຫຍໍ້

ບົດວິທະຍານິພົນເລື່ອງ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ແມ່ນມີຈຸດປະສົງສຶກສາກ່ຽວກັບຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ, ສຶກສາບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ ແລະ ສຶກສາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນ.

ບົດວິທະຍານິພົນສະບັບນີ້ແມ່ນສຶກສາແບບປະລິມານ ແລະ ແບບຄຸນນະພາບຊຶ່ງມີກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ມີຈຳນວນ 166 ຄົນ ໂດຍການຢາຍແບບສອບຖາມ ແລະ ແບບສຳພາດ 5 ຊຸດ ຊຶ່ງຜົນຂອງການສຶກສາຄົ້ນຄວ້າເຫັນວ່າ ຄວາມຄິດເຫັນຕໍ່ກັບການປັບປຸງກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກແມ່ນເຫັນດີໃນລະດັບຫຼາຍ ($\bar{X}$ =3.86, SD=.816) ເພາະຫຼັກການທີ່ກ່ຽວຂ້ອງເຫັນວ່າມີຈຳນວນພຽງພໍໃນລະດັບຫຼາຍ ( $\bar{X}$ =3.80, SD=.847).

ຄວາມຄິດເຫັນກ່ຽວກັບບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດບັນຫາສ່ວນຫຼາຍແມ່ນເກີດຢູ່ຂັ້ນຕອນການປະມູນ ແລະ ຂັ້ນຕອນການຕິດຕາມກວດກາໂຄງການລົງທຶນ ຊຶ່ງການວິເຄາະຂໍ້ມູນພົບວ່າ ຖ້າເຈົ້າຂອງໂຄງການໄດ້ມີການປະມູນແບບເປີດກວ້າງກໍ່ຈະເປັນການທີ່ເໝາະສົມຫຼາຍໃນການປະມູນຫາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ($\bar{X}$ =4.04, SD=1.050), ຜູ້ຕອບແບບບສອບຖາມເຫັນວ່າການຕິດຕາມກວດກາໄລຍະເລີ່ມຕົ້ນໂຄງການມີຄວາມສຳຄັນຫຼາຍເພາະເປັນການຕິດຕາມກວດກາກ່ອນການດຳເນີນການກໍ່ສ້າງ ($\bar{X}$ =4.07, SD=.935) ແລະ  ເຫັນວ່າໄລຍະເວລາຜ່ານມາການຕິດຕາມກວດກາໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແມ່ນຍັງປະຕິບັດຍັງບໍ່ໄດ້ທົ່ວເຖິງ ($\bar{X}$ =3.52, SD=1.099) ສ່ວນຂັ້ນຕອນອື່ນຜູ້ຕອບແບບສອບຖາມມີຄວາມເຫັນດີຕໍ່ສະພາບການຈັດຕັ້ງປະຕິບັດໃນປັດຈຸບັນ ແລະ ເຫັນວ່າຂັ້ນຕອນດັ່ງກ່າວເປັນສາເຫດພຽງສ່ວນໜ້ອຍທີ່ພາໃຫ້ການກໍ່ສ້າງເສັ້ນທາງບໍ່ໄດ້ຮັບປະສິດພາບ.

ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ ຊຶ່ງຜົນການວິເຄາະຂໍ້ມູນພົບວ່າ ທັດສະນະຂອງຜູ້ຕອບແບບສອບຖາມເຫັນວ່າປະຊາຊົນໃຫ້ການຮ່ວມມືຢູ່ໃນລະດັບຫຼາຍ ($\bar{X}$ =3.94, SD=.799), ສຳລັບຂໍ້ຫຍຸ້ງຍາກເຫັນວ່າການປະສານງານລະຫວ່າງຂະແໜງການດ້ວຍກັນຍັງຂາດການປະສານງານທີ່ລະອຽດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍ ($\bar{X}$ =3.52, SD=.945), ຜູ້ຕອບແບບສອບຖາມມີທັດສະນະຕໍ່

ດ້ານວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກເຫັນດີໃນລະດັບຫຼາຍສຸດຄວນເພີ່ມທະວີວຽກງານຕິດຕາມກວດກາໃຫ້ສູງຂຶ້ນເປັນວິທີແກ້ໄຂບັນຫາທີ່ດີ ($\bar{X}$ =4.45, SD=.694) ເພາະການຕິດຕາມກວດກາເປັນວິທີທີ່ດີທີ່ສຸດເພື່ອເຮັດໃຫ້ການລົງທຶນຂອງລັດໄດ້ຮັບປະສິດທິພາບ ແລະ ໂປ່ງໃສ, ທຸກໂຄງການລົງທຶນຂອງລັດຄວນໄດ້ຮັບການຕິດຕາມກວດກາແຕ່ຫົວທີເປັນວິທີແກ້ໄຂບັນຫາທີ່ດີ ນອກຈາກນັ້ນຜູ້ຕອບແບບສອບຖາມມີຄວາມຄິດເຫັນໃນລະດັບຫຼາຍວ່າກ່ອນການປະມູນຄວນປະກາດເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂເຂົ້າມາຈັດຕັ້ງປະຕິບັດໂຄງການ ເພື່ອຫຼີກລ່ຽງບັນຫາທີ່ເກີດຂຶ້ນເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ($\bar{X}$ =4.78, SD=1.033) ສະນັ້ນວິທີແກ້ໄຂບັນຫາທີ່ເກີດຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຜູ້ຕອບແບບສອບຖາມເຫັນວ່າຄວນແກ້ໄຂບັນຫາຢູ່ຂັ້ນຕອນການປະມູນຄວນໃຫ້ຖືກຕ້ອງຕາມລະບຽບການ ແລະໃຫ້ເພີ່ມທະວີວຽກງານຕິດຕາມກວດກາການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃຫ້ສູງຂຶ້ນຮັບປະກັນໃຫ້ໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃຫ້ໄດ້ຮັບປະສິດທິພາບສູງຮັບປະກັນໄດ້ເຖິງຄວາມໂປ່ງໃສ ແລະ ຖືກຕ້ອງ.

# ABSTRACT

This thesis is involved with the investment of the government and purposed on the road construction in Pakse, Champasak Province, Lao PDR. This thesis is constructed under the relevant principles and the investment's regulations of the government and within the road construction in Pakse, Champasak Province, only and The objective of this study is to analyze the problems which occurred within the constructions periods and find out the opportunities, threatens and the solutions for the issues of this construction project.

This thesis is Qualitative Research and Quantitative Research. A questionnaire is used as the tools in this research and 5 sets of interview. The samplings for this study were the 166 people. The results were found that the recommend on legal reform of investment of the government for the road construction was strongly agreed by the samplings ($\bar{x}$ =3.86, SD=.816) because of the existing principles is matched with the needed in high level ($\bar{x}$ =4.80, SD=847).

The recommendation about the occurred issues with the procedure of investment, almost of samplings are pointed out that an auction processing and monitoring were the main problems as the result from data analysis was shown that if the owner of the project set an auction in wide scale; it must be easier to find out the standard companies for this road construction by sore ($\bar{x}$=4.04, SD=1.050), Moreover, the samplings were recommend that the monitoring since the beginning of project was the most important point due to it was the pre-monitoring before the project will starting by score($\bar{x}$= 507. SD=.935) and found that the monitoring procedure of the government was not cover all areas as it should be ($\bar{x}$ =3.52, SD= 1.09). Apart from these procedures, the samples were agreed to the organization status and saw that this part was a small effect factor for ineffective construction.

The research reveals that the opportunities, threatens and the solutions for the occurred problems from the investment of the government for the road constructions; people are good corporate in a high level ($\bar{x}$=3.94, SD=.799), the threaten was the confliction between each division which caused this construct met with the difficulties as the result shown that the samplings was agreed on this with a high score ($\bar{x}$=3.52, SD =945). The best solution to make more efficiency in road construction in Pakse was increasing and pay more attention in monitoring work because of the samplings were very strong agreed on this by high score($\bar{x}$=4.45, SD=.694) as the monitoring work is the best way to make an efficiency investment of the government and apparent. Any of investment projects of the government should be monitored since the beginning. Furthermore, the sampling were recommend that the owner of the project should did more advertising to find the standard companies for the auction and avoid any issues ($\bar{x}$=4.78, SD=1.033). The samplings were agreed with the auction processing adjustment and increase monitoring work of the government's investment to guarantee the quality, apparent and correctly.

# ສາລະບານ

**ໜ້າ**


**ຄຳຂອບໃຈ ........................................................................................ i**

**ບົດຄັດຫຍໍ້ພາສາລາວ ........................................................................... ii**

**ບົດຄັດຫຍໍ້ພາສາອັງກິດ ........................................................................ iv**

**ສາລະບານ ........................................................................................ vi**

**ພາກທີ I ພາກສະເໜີ.............................................................................1**

1. ຄວາມເປັນມາຂອງບັນຫາການຄົ້ນຄວ້າ..................................................1
2. ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ ..................................................3
3. ຈຸດປະສົງຂອງການຄົ້ນຄວ້າ..................................................................4
4. ຄຳຖາມຄົ້ນຄວ້າ ..................................................................................4
5. ສົມມຸດຕິຖານຂອງການຄົ້ນຄວ້າ..............................................................5
6. ຄາດຄະເນຜົນໄດ້ຮັບຈາກການຄົ້ນຄວ້າ.....................................................5
7. ອະທິບາຍຄຳສັບທີ່ໃຊ້ໃນການຄົ້ນຄວ້າ .....................................................5

**ພາກທີ II ທົບທວນເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ.......................................7**

1. ທົບທວນເອກະສານ ແລະ ຫຼັກການທີ່ກ່ຽວຂ້ອງ ..........................................7
   - 1.1 ທົບທວນເອກະສານທີ່ກ່ຽວຂ້ອງ ......................................................7
     - 1.1.1 ແນວທາງຂອງພັກຕໍ່ກັບການລົງທຶນຂອງລັດ...................................7
     - 1.1.2 ນະໂຍບາຍຂອງລັດຕໍ່ກັບການລົງທຶນຂອງລັດ..................................8
     - 1.1.3 ຄາດໝາຍສູ້ຊົນແຜນການລົງທຶນຂອງລັດ 5ປີ ຄັ້ງທີ VIII (2016-2020) ........................................................................8
     - 1.1.4 ຄາດໝາຍສູ້ຊົນແຜນການລົງທຶນຂອງລັດຢູ່ແຂວງຈຳປາສັກ 5ປີ ຄັ້ງທີ VIII (2016-2020)...........................................................9
   - 1.2 ຫຼັກການທີ່ກ່ຽວຂ້ອງ.........................................................................10
     - 1.2.1 ຫຼັກການກ່ຽວກັບການລົງທຶນຂອງລັດ ...........................................10
     - 1.2.2 ຫຼັກການກ່ຽວກັບວຽກງານທາງຫຼວງ...............................................10
   - 1.3 ຄວາມຮັບຮູ້ທົ່ວໄປກ່ຽວກັບການລົງທຶນຂອງລັດ..........................................11
     - 1.3.1 ຄວາມໝາຍກ່ຽວກັບການລົງທຶນຂອງລັດ ........................................11
     - 1.3.2 ປະເພດການລົງທຶນຂອງລັດ.........................................................12
     - 1.3.3 ຂັ້ນຕອນການດຳເນີນການລົງທຶນຂອງລັດ ......................................13

1.3.4 ອົງການຄຸ້ມຄອງການລົງທຶນຂອງລັດ...........................................19
1.4 ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊ
ແຂວງຈຳປາສັກ......................................................................................22
1.4.1 ສະພາບຈຸດພິເສດຂອງແຂວງຈຳປາສັກ......................................22
1.4.2 ມາດຕະຖານເຕັກນິກໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊ
ແຂວງຈຳປສັກ ........................................................................23
1.4.3 ອົງການທີ່ຮັບຜິດຊອບປະຕິບັດໂຄງການລົງທຶນຂອງລັດກ່ຽວກັບການ
ກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ....................24
1.4.4 ຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກ
ເຊແຂວງຈຳປາສັກ ...................................................................28
2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ ..............................................................................41
**ພາກທີ III ວິທີ ແລະ ເຄື່ອງມືໃນການຄົ້ນຄວ້າ ...........................................................43**
1. ວິທີການສຶກສາ.......................................................................................43
2. ຂອບເຂດດ້ານເນື້ອໃນ, ສະຖານທີ່ ແລະ ເວລາ..............................................43
3. ປະຊາກອນ ແລະ ກຸ່ມຕົວຢ່າງ.....................................................................43
4. ວິທີ ແລະ ເຄື່ອງມືເກັບກຳຂໍ້ມູນ...................................................................45
5. ວິທີການວິເຄາະຂໍ້ມູນ ແລະ ແປຜົນ..............................................................45
**ພາກທີ IV ຜົນການຄົ້ນຄວ້າ ..................................................................................... 47**
1 ຜົນຂອງການຄົ້ນຄວ້າ...................................................................................47
1.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ...............................................47
1.2 ຜົນການວິເຄາະກ່ຽວກັບການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນ
ຕົວເມືອງປາກເຊແຂວງຈຳປາສັກ ...................................................50
1.3 ສັງລວມຄຳເຫັນຈາກການສຳພາດ......................................................63
2 ການວິເຄາະຜົນຂອງການສຶກສາ..............................................................65
**ພາກທີ V ສະຫຼຸບ ແລະ ຂໍ້ສະເໜີ ........................................................................... 71**
1 ສະຫຼຸບ.....................................................................................................71
2 ຂໍ້ສະເໜີ....................................................................................................74
**ເອກະສານອ້າງອີງ**
**ເອກະສານຊ້ອນທ້າຍ**
**ປະຫວັດຫຍໍ້ຜູ້ສຶກສາ**

# ພາກທີ I
# ພາກສະເໜີ

## 1. ຄວາມເປັນມາຂອງບັນຫາຄົ້ນຄວ້າ

ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍເປັນຕົ້ນມາ ສປປ ລາວກໍ່ໄດ້ມີການປົວແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນເປັນກ້າວໆ. ໄລຍະຕໍ່ມາ ສປປ ລາວ ກໍ່ໄດ້ມີການເຊື່ອມໂຍງກັບບັນດາປະເທດໃນພາກພື້ນອາຊີ ແລະ ໃນໂລກນັບມື້ນັບເພີ່ມຂຶ້ນ ພັກ-ລັດເຮົາກໍ່ໄດ້ມີແຜນທີ່ຈະພັດທະນາປະເທດຊາດໃນການກໍ່ສ້າງພື້ນຖານໂຄງລ່າງກໍ່ຄືການກໍ່ສ້າງເສັ້ນທາງໃນຂອບເຂດທົ່ວປະເທດໃຫ້ນັບມື້ນັບເພີ່ມຂຶ້ນ ເພື່ອເປັນສິ່ງອຳນວຍຄວາມສະດວກສະບາຍ ແລະ ເປັນການເຊື່ອມຕໍ່ໄປມາຫາສູ່ກັນດ້ວຍຄວາມສະດວກສະບາຍລະຫວ່າງເມືອງນ້ອຍກັບຕົວເມືອງໃຫຍ່ຕະຫຼອດຮອດຕົວເມືອງໃຫຍ່ກັບບັນດາປະເທດອ້ອມຂ້າງທີ່ມີຊາຍແດນຕິດຈອດກັນ.

ມາຮອດປີ 2009 ເສດຖະກິດມີການຂະຫຍາຍຕົວ ການຮ່ວມມືຮອບດ້ານກັບສາກົນນັບມື້ນັບຫຼາຍຂຶ້ນ ການຫຼັ່ງໄຫຼເຂົ້າມາຂອງທຶນການຊ່ວຍເຫຼືອທາງການເພື່ອການພັດທະນາຂອງສາກົນນັບມື້ນັບເພີ່ມຂຶ້ນ, ພັກ-ລັດຈິ່ງໄດ້ສ້າງກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບທຳອິດຂຶ້ນ, ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບນີ້ ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງຕິດຕາມກວດກາການລົງ ທຶນຂອງລັດ ເພື່ອຮັບປະກັນໃຫ້ການລົງທຶນຂອງລັດສອດຄ່ອງກັບທິດທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ໃນການປະກາດໃຊ້ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປີ 2009 ໄດ້ເປັນຂີດໝາຍເຮັດໃຫ້ການລົງທຶນຂອງລັດຢູ່ໃນຂອບເຂດທົ່ວປະເທດນັບມື້ນັບເພີ່ມຂຶ້ນເປັນຕົ້ນແມ່ນການກໍ່ສ້າງຖະໜົນຫົນທາງຂຶ້ນຫຼາຍສາຍ ເມື່ອມີການລົງທຶນຂອງລັດເພີ່ມຂຶ້ນຢ່າງຫຼວງຫຼາຍຈຶ່ງເຮັດໃຫ້ກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບປີ 2009 ບໍ່ສອດຄ່ອງກັບສະພາບປະຈຸບັນ. ສະນັ້ນລັດຖະບານຈຶ່ງໄດ້ມີການປັງປຸງກົດໝາຍວ່າດ້ວຍການລົງທຶນຂອງລັດຂຶ້ນໃນປີ 2015 ໃນການປັບປຸງຄັ້ງນີ້ໄດ້ມີການກຳນົດລະບຽບການລົງທຶນຂອງລັດໄວ້ຢ່າງເຄັ່ງຄັດ ແລະ ຮັດກຸມຂຶ້ນຕື່ມເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນປັດຈຸບັນ ແລະ ເປັນການຄຸ້ມຄອງເພື່ອບໍ່ໃຫ້ມີໂຄງການນອກແຜນເກີດຂຶ້ນໃນຂອບເຂດທົ່ວປະເທດ ແລະ ເຮັດໃຫ້ການລົງທຶນຂອງລັດຖືກຕ້ອງຕາມລະບຽບກົດໝາຍທີ່ລັດວາງອອກຢ່າງເຂັ້ມງວດ.

ໃນເມື່ອລະບຽບການມີຄວາມຮັດກຸມຂຶ້ນການລົງທຶນຂອງລັດກໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ແຂວງຈຳປາສັກກໍ່ເປັນແຂວງໜຶ່ງທີ່ພັກ ແລະ ລັດຖະບານໄດ້ສຸມໃສ່ການລົງທຶນຂອງ

ລັດໃນການກໍ່ສ້າງເສັ້ນທາງ ເພື່ອເປັນການອຳນວຍຄວາມສະດວກໃນການໄປມາຫາສູ່ຊຶ່ງກັນ ແລະ ກັນ ແລະ ເປັນການສ້າງສິ່ງອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າອອກສູ່ປະເທດທີສາມໃນຖານະເປັນປະເທດທາງຜ່ານ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງປະເທດໃຫ້ນັບມື້ນັບມີຄວາມໝັ້ນທ່ຽງ. ສະນັ້ນການລົງທຶນຂອງລັດຢູ່ແຂວງຈຳປາສັກ ຈຶ່ງໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຊຶ່ງເຫັນໄດ້ ສົກປີ 2014-2015 ມູນຄ່າການລົງ ທຶນຂອງລັດຢູ່ແຂວງຈຳປາສັກ 90,2 ຕື້ກີບ ກວມເອົາ 3,85% ຂອງມູນຄ່າການລົງທຶນທັງໝົດ[1]. ຕະຫຼອດໄລຍະການຈັດຕັ້ງແຜນພັດທະນາເສດຖະກິດສັງຄົມ 5ປີ ຄັ້ງທີ VII ພັກ ແລະ ລັດ ເວົ້າລວມ ເວົ້າສະເພາະກໍ່ຄືແຂວງຈຳປາສັກໄດ້ສຸມທຸກກຳລັງແຮງໃນການກໍ່ສ້າງພື້ນຖານໂຄງລ່າງໂດຍສະເພາະແມ່ນການກໍ່ສ້າງເສັ້ນທາງເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ໄດ້ກໍ່ສ້າງເສັ້ນທາງເຊື່ອມຕໍ່ລະຫວ່າງແຂວງຫາເມືອງ, ເມືອງຫາບ້ານ ແລະ ຫາເຂດຈຸດສຸມພັດທະນາ. ຮອດທ້າຍປີ 2015 ທົ່ວແຂວງຈຳປາສັກມີເສັ້ນທາງຍາວທັງໝົດ 4.216,87 ກິໂລແມັດ, ຖ້າທຽບໃສ່ປີ 2010 (3.474 ກິໂລແມັດ) ເພີ່ມຂຶ້ນ 742ກິໂລແມັດ ໃນນັ້ນເສັ້ນທາງເບຕົງທີ່ສ້າງອ້ອມຮອບໃນຕົວເມືອງປາກເຊ 40,34 ກິໂລແມັດ, ເສັ້ນທາງອັດສະຟານ 40,1 ກິໂລແມັດ, ເສັ້ນທາງປູຢາງ 698,12 ກິໂລແມັດ, ເສັ້ນທາງປູແຮ່ 1.556,6 ກິໂລແມັດ ແລະ ເສັ້ນທາງດິນທຳມະຊາດ 1.881,71 ກິໂລແມັດ ບ້ານທີ່ມີເສັ້ນ ທາງທຽວໄດ້ສອງລະດູ 639 ບ້ານ ກວມ 97% ຂອງຈຳນວນບ້ານທັງໝົດ, ອັນທີ່ພົ້ນເດັ່ນແມ່ນສຳເລັດການກໍ່ສ້າງຂົວເບຕົງຂ້າມນ້ຳຂອງຈຸດບ້ານຫາດ-ບ້ານຫ້ວຍ 718 ແມັດ, ສຳເລັດກໍ່ສ້າງຂົວເບຕົງຂ້າມນ້ຳເຊໂດນຈຸດບ້ານດອນແຊເມືອງຊະນະສົມບູນ, ສຳເລັດກໍ່ສ້າງທາງເບຕົງ 9 ເໜືອ ຫາ 9 ໃຕ້ ແລະ ໂຄງການກໍ່ສ້າງເສັ້ນທາງອື່ນໆອີກ[2].

ຈາກການທີ່ລັດຖະບານໄດ້ໃຫ້ງົບປະມານການລົງທຶນຂອງລັດໃຫ້ແຂວງຈຳປາສັກເປັນຈຳນວນຫຼວງຫຼາຍມັນຈຶ່ງເຮັດໃຫ້ແຂວງຈຳປາສັກມີບັນດາຈຳນວນໂຄງການລົງທຶນຂອງລັດເພີ່ມຂຶ້ນໃນແຕ່ລະປີຊຶ່ງເຫັນໄດ້ຊັດເຈນຊຶ່ງມັນໄດ້ເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງບໍ່ໄດ້ຮັບປະສິດທິພາບຍ້ອນຄວາມສາມາດໃນການຈັດຕັ້ງປະຕິບັດຍັງບໍ່ທັນໄດ້ດີ ແລະ ຄວາມເຂົ້າໃຈແຈ້ງຂອງບັນດາຂະແໜງການທີ່ກ່ຽວຂ້ອງ ໃນການປະຕິບັດກົດໝາຍວ່າດ້ວຍລົງທຶນຂອງລັດຍັງບໍ່ທັນເລິກຊຶ້ງ, ການສ້າງໂຄງການລົງທຶນບໍ່ໄດ້ຄຳນຶງເຖິງທ່າແຮງດ້ານສະພາບຄວາມຄ່ອງຕົວທາງການເງິນຂອງແຂວງເຮັດໃຫ້ເກີດໜີ້ສິນທີ່ບໍ່ສາມາດຊຳລະໄດ້ຕາມສັນຍາ ແລະ ແກ່ຍາວຫຼາຍປີ, ການສ້າງແຜນໂຄງການຍັງບໍ່ຮັດກຸມບໍ່ອີງໃສ່ໂຄງການບຸລິມະສິດ ແລະ ບໍ່ອີງໃສ່ລະບຽບກົດໝາຍທີ່ກ່ຽວຂ້ອງເປັນຕົ້ນແມ່ນກົດໝາຍວ່າດ້ວຍລົງທຶນຂອງລັດ ນອກຈາກນັ້ນການນຳສະເໜີໂຄງການເຂົ້າແຜນເຫັນວ່າຍັງບໍ່ທັນໄປຕາມກອບ

---

[1]ແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງທີ VIII ຂອງແຂວງຈຳປາສັກ ປີ 2016-2020, ໜ້າ 6.

[2]ທາກໍອ້າງ, ໜ້າ 19.

ແຜນການໂຄງການບູລິມະສິດ 5 ປີ, ການສຳຫຼວດອອກແບບໂຄງການຍັງບໍ່ໄດ້ເປີດກວ້າງການປະມູນເຂົ້າຮ່ວມຂອງຫຼາຍບໍລິສັດ ແລະ ບາງໂຄງການເປີດກວ້າງແຕ່ບໍລິສັດທີ່ມີເງື່ອນໄຂຈະຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງຂອງແຂວງຍັງມີນ້ອຍ[3].

ຈາກບັນຫາທີ່ກ່າວມາຂ້າງເທິງ ຂ້າພະເຈົ້າຈຶ່ງມີຄວາມສົນໃຈຢາກສຶກສາກ່ຽວກັບການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ເພາະເຫັນວ່າວຽກງານດັ່ງກ່າວເປັນວຽກງານທີ່ສຳຄັນ ເພາະເປັນຂີດໝາຍແຫ່ງການພັດທະນາປະເທດກໍ່ຄືແຂວງຈຳປາສັກ ເພື່ອເຮັດໃຫ້ວຽກງານການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃຫ້ເປັນໄປຕາມລະບຽບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ຖືກຕ້ອງເພື່ອເຮັດໃຫ້ປະເທດຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາໃນປີ 2020 ແລະ ວິໄສທັດປີ 2030 ສ້າງປະເທດໃຫ້ເປັນປະເທດທີ່ມີລາຍຮັບປານກາງສູງ.

## 2. ເຫດຜົນ ແລະ ຄວາມສຳຄັນຂອງບັນຫາ

ແຂວງຈຳປາສັກ ກໍ່ເປັນແຂວງໜຶ່ງທີ່ມີທ່າອ່ຽງການຂະຫຍາຍຕົວຂອງເສດຖະກິດຢ່າງກ້າວກະໂດດ ດັ່ງນັ້ນລັດຖະ ບານຈຶ່ງຈັດແບ່ງງົບປະມານລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃຫ້ແຂວງຈຳປາສັກເປັນຈຳນວນຫຼວງຫຼາຍໃນແຕ່ລະສົກປີ ເພື່ອເຮັດໃຫ້ແຂວງຈຳປາສັກເປັນຈຸດຍຸດທະສາດໃນການພັດທະນາເສດຖະກິດ ແລະ ເປັນຈຸດເຊື່ອມຕໍ່ກັບພາກພື້ນ ແລະ ສາກົນ.

ໃນການສຶກສາຄົ້ນຄວ້າກ່ຽວກັບການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໃນຄັ້ງນີ້ເຫັນວ່າວຽກງານດັ່ງກ່າວເປັນວຽກງານທີ່ຫຼໍ່ແຫຼມ ແລະ ທ້າທາຍ ທັງນີ້ເນື່ອງຈາກວ່າໃນປັດຈຸບັນວຽກງານການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໄດ້ເປັນວຽກງານທີ່ສຳຄັນທີ່ສຸດໃນການພັດທະນາເສດຖະກິດຂອງປະເທດ ປັດຈຸບັນລັດໄດ້ສຸມໃສ່ການລົງທຶນເຂົ້າໃນຫຼາຍຂົງເຂດການລົງທຶນໂດຍສະເພາະການກໍ່ສ້າງພື້ນຖານໂຄງລ່າງເປັນຕົ້ນການກໍ່ສ້າງເສັ້ນທາງ. ໃນການສຶກສາກ່ຽວກັບການລົງທຶນຂອງລັດໃນຄັ້ງນີ້ເປັນວຽກງານທີ່ສຳຄັນຫຼາຍເພາະມັນເປັນການສຶກສາວິທີການລົງທຶນຂອງລັດ ແລະ ຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງເພື່ອເຮັດໃຫ້ການລົງທຶນຂອງລັດມີປະສິດທິຜົນສູງໂດຍສະເພາະແມ່ນຕ້ອງຮັບປະກັນບໍ່ໃຫ້ມີໂຄງການນອກແຜນ ແລະ ໂຄງການລົງທຶນກ່ອນຂອງເອກະຊົນ ແລະ ການລົງທຶນຂອງລັດຍັງເປັນການຄົ້ນຄວ້າຂັ້ນຕອນການຄຸ້ມຄອງ, ການບໍລິຫານການລົງທຶນຂອງລັດ ແລະ ຊອກວິທີການແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນ

[3]ບົດສະຫຼຸບການຈັດຕັ້ງປະຕິບັດການລົງທຶນຂອງລັດສົກປີ 2015-2016 ແລະ ທິດທາງແຜນການໃນປີ 2017, ໜ້າ 3.

ຂອງລັດໃນການກໍ່ສ້າງເສັ້ນທາງຢ່າງເໝາະສົມໃຫ້ຖືກຕ້ອງຕາມລະບຽບກົດໝາຍຕໍ່ກັບບັນດາໂຄງການລົງທຶນຂອງລັດທີ່ໄດ້ອະນຸມັດ ແລະໂຄງການທີ່ເອົາເຂົ້າແຜນ ໃຫ້ສາມາດເຄື່ອນໄຫວຢ່າງມີປະສິດທິຜົນ ແລະ ເຮັດໃຫ້ການນຳໃຊ້ງົບຂອງລັດໃຫ້ຖືກເປົ້າໝາຍໂດຍຜ່ານການກວດກາຢ່າງລະອຽດ ແລະປະເມີນຜົນແຕ່ຫົວທີກ່ອນການເອົາເຂົ້າແຜນ ແລະ ພາຍຫຼັງໂຄງການສຳເລັດ.

ດັ່ງນັ້ນ, ການສຶກສາຄົ້ນຄວ້າໃນຫົວຂໍ້ດັ່ງກ່າວແມ່ນຄົ້ນຄວ້າກ່ຽວກັບວິທີການ, ຂັ້ນຕອນ ແລະ ນຳສະເໜີວິທີໃນການແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ແຂວງຈຳປາສັກໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ເພື່ອປ້ອງກັນບໍ່ໃຫ້ພະນັກງານລັດ ແລະ ຜູ້ຮັບເໝົາໂຄງການລະເມີດລະບຽບກົດໝາຍ ແລະ ມີພຶດຕິກຳອື່ນທີ່ເປັນການສໍ້ລາດບັງຫຼວງ ແນ່ໃສ່ເຮັດໃຫ້ການລົງທຶນຂອງລັດໄດ້ຮັບການປະຕິບັດດ້ວຍຄວາມໂປ່ງໃສ, ປະຢັດ ແລະ ມີປະສິດທິພາບສູງ.

## 3. ຈຸດປະສົງຂອງການຄົ້ນຄວ້າ

ໃນການສຶກສາຄົ້ນຄວ້າ ຜູ້ສຶກສາຄົ້ນຄວ້າມີຈຸດປະສົງສຶກສາ:

- ເພື່ອສຶກສາຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ
- ເພື່ອສຶກສາບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ.
- ເພື່ອສຶກສາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ.

## 4. ຄຳຖາມຄົ້ນຄວ້າ

ຄຳຖາມຄົ້ນຄວ້າໃນການສຶກສາຄັ້ງນີ້ປະກອບມີ:

- ຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກປະກອບມີອັນໃດແດ່?
- ບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກມີບັນຫາຄືແນວໃດ?
- ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຫຍັງແນ່?

## 5. ສົມມຸດຕິຖານ

ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ແຂວງຈຳປາສັກຍັງເຮັດບໍ່ທັນໄດ້ດີເນື່ອງຈາກນິຕິກຳບໍ່ທັນຮັດກຸມເຮັດໃຫ້ຜູ້ປະຕິບັດໂຄງການຍັງບໍ່ທັນເຂົ້າໃຈເລິກຊຶ້ງຖ້າຫາກມີນິຕິກຳທີ່ກ່ຽວຂ້ອງຮັດກຸມຈະເຮັດໃຫ້ການຈັດຕັ້ງປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງມີປະສິດທິຜົນ, ການປະຕິບັດລະບຽບການປະມູນ ແລະ ການກວດກາຍັງບໍ່ທັນແທດເໝາະກັບສະພາບຄວາມເປັນຈິງ.

## 6. ຄາດຄະເນຜົນຈະໄດ້ຮັບຈາກການສຶກສາ

ໃນການສຶກສາຄົ້ນຄວ້າຄັ້ງນີ້ ຜູ້ສຶກສາຄາດວ່າຈະໄດ້ຮັບຮູ້:

- ສາມາດຮູ້ໄດ້ເຖິງຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ
- ສາມາດຮູ້ໄດ້ເຖິງບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ.
- ສາມາດຮູ້ໄດ້ເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ.

## 7. ອະທິບາຍຄຳສັບເພື່ອການຄົ້ນຄວ້າ

**ແຜນການລົງທຶນຂອງລັດ** ໝາຍເຖິງແຜນການນຳໃຊ້ ແລະ ຈັດສັນທຶນງົບປະມານແຫ່ງລັດລວມມີແຫຼ່ງທຶນພາຍໃນ, ຊັບພະຍາກອນທຳມະຊາດ, ຊັບສິນ, ຊັບສິນທາງປັນຍາຂອງລັດ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ແຫຼ່ງທຶນອື່ນໆ ເຂົ້າໃນການບັນລຸເປົ້າໝາຍຕາມແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ

**ໂຄງການລົງທຶນນອກແຜນ** ໝາຍເຖິງໂຄງການທີ່ບໍ່ນອນຢູ່ໃນແຜນການລົງທຶນຂອງລັດປະຈຳປີ ແລະ ຫ້າປີ ທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນແຂວງໄດ້ຮັບຮອງເອົາ

**ການປະເມີນໂຄງການ** ໝາຍເຖິງການຕີລາຄາທາງດ້ານຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິພາບ, ຜົນກະທົບ ແລະ ຄວາມຍືນຍົງຂອງໂຄງການກ່ອນການພິຈາລະນາບັນໂຄງການ ເຂົ້າໃນແຜນການລົງທຶນຂອງລັດ

**ການປະເມີນຜົນໂຄງການ** ໝາຍເຖິງການຕີລາຄາໝາກຜົນການປະຕິບັດໂຄງການ, ການທົບທວນຄືນຜົນການນຳໃຊ້ໂຄງການ ໂດຍພິຈາລະນາໃນດ້ານຄວາມສອດຄ່ອງ, ປະສິດທິຜົນ, ປະສິດທິພາບ, ຜົນກະທົບ ແລະ ຄວາມຍືນຍົງຂອງໂຄງການ ເພື່ອໃຫ້ຄຳແນະນຳໃນການປັບປຸງ ແລະ ຖອດຖອນບົດຮຽນ

**ເຈົ້າຂອງໂຄງການ** ໝາຍເຖິງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ໄດ້ຮັບງົບປະມານການລົງທຶນຂອງລັດ

**ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ** ໝາຍເຖິງທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມໃນເງື່ອນໄຂດອກເບ້ຍຜ່ອນຜັນຈາກຕ່າງປະເທດ ເພື່ອປະຕິບັດໂຄງການລົງທຶນຂອງລັດ;

**ການກວດກາລັດ** ແມ່ນການຕິດຕາມ, ເກັບກຳຂໍ້ມູນ, ຫຼັກຖານກ່ຽວກັບການຈັດຕັ້ງຜະຕິບັດນະໂຍບາຍ, ລະບຽບກົດໝາຍ, ໜ້າທີ່, ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ບຸກຄົນ ຢູ່ໃນອົງການບໍລິຫານລັດ ເພື່ອພິຈາລະນາ, ຕີລາຄາ, ປະເມີນຜົນ ການຈັດຕັ້ງວຽກງານດັ່ງກ່າວພ້ອມທັງສະເໜີວິທີການ ແລະ ມາດຕະການໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນຂອງການກວດກາຕາມລະບຽບກົດໝາຍ

**ການກວດສອບແຫ່ງລັດ** ແມ່ນຂະບວນການເຄື່ອນໄຫວເກັບກຳຂໍ້ມູນ ແລະ ຫຼັກຖານຕົວຈິງກ່ຽວກັບເປົ້າໝາຍຖືກກວດສອບ ຊຶ່ງດຳເນີນໂດຍອົງການກວດສອບ ແນໃສ່ຢັ້ງຢືນຄວາມຖືກຕ້ອງຂອງເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານລະບຽບກົດໝາຍ, ປະສິດທິຜົນໃນການຄຸ້ມຄອງ, ການນຳໃຊ້ທຶນຮອນຂອງຫົວໜ່ວຍງົບປະມານ, ຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ

**ໂຄງການກໍ່ສ້າງທາງຫຼວງທີ່ມີຄຸນນະພາບ** ແມ່ນໂຄງການກໍ່ສ້າງທາງຫຼວງທີ່ປະຕິບັດຖືກຕ້ອງຕາມກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ທີ່ໄດ້ຖືກຮັບຮອງໂດຍສະພາມາດຕະຖານເຕັກນິກແຫ່ງຊາດ

**Official Development Assistance (ODA)** ມີຄວາມໝາຍໃນພາສາລາວວ່າ ຄວາມຊ່ວຍເຫຼືອທາງການເພື່ອການພັດທະນາ ຫຼື ຊ.ກ.ພ

**ມາດຕະຖານເຕັກນິກ** ແມ່ນກຳນົດໝາຍທາງດ້ານເຕັກນິກ ຫຼື ວິສາວະກຳແບບດຽວກັນທີ່ສ້າງຂຶ້ນຢ່າງເປັນລະບົບໃນການກຳນົ ດ ຫຼັກເກນທາງດ້ານເຕັກນິກ, ວິທີການ, ຂະບວນການ ແລະ ການປະຕິບັດຕົວຈິງ

**ລາຄາຫົວໜ່ວຍ** ແມ່ນມູນຄ່າຕໍ່ໜ້າວຽກໃດໜຶ່ງ ຫຼື ກິດຈະການກໍ່ສ້າງໃດໜຶ່ງຊຶ່ງຄິດໄລ່ຕາມຫົວໜ່ວຍວັດແທກເປັນຕົ້ນ ຕາແມັດ, ແມັດກ້ອນ, ແມັດຍາວ, ກິໂລແມັດ ແລະ ຫົວໜ່ວຍວັດແທກອື່ນໆ.

**ໂຄງການກໍ່ສ້າງ** ແມ່ນການກໍ່ສ້າງທາງຫຼວງປະເພດຕ່າງໆ ໂດຍມີຂອບເຂດ, ເປົ້າໝາຍ ແລະ ເງື່ອນໄຂສະເພາະ, ມີການກຳນົດຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ, ທີ່ປຶກສາ ແລະ ຜູ້ຮັບເໝົາພ້ອມທັງງົບປະມານ, ແຮງງານ, ພາຫະນະກົນຈັກ, ແຜນດຳເນີນງານ, ເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດ.

# ພາກທີ II
# ທົບທວນເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

## 1. ທົບທວນເອກະສານ ແລະ ຫຼັກການທີ່ກ່ຽວຂ້ອງ

### 1.1 ທົບທວນເອກະສານທີ່ກ່ຽວຂ້ອງ

#### 1.1.1 ແນວທາງຂອງພັກຕໍ່ກັບການລົງທຶນຂອງລັດ

ຕະຫຼອດໄລຍະແຫ່ງການສ້າງສາ ແລະ ພັດທະນາປະເທດ ພັກໄດ້ວາງແນວທາງນະໂຍບາຍຫຼາຍດ້ານເພື່ອເຮັດໃຫ້ປະເທດຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ ດັ່ງນັ້ນມາຮອດສະໄໝທີ X ພັກກໍ່ໄດ້ສືບຕໍ່ວາງນະໂຍບາຍກ່ຽວກັບການລົງທຶນຂອງລັດດັ່ງນີ້:

- ວິໄສທັດຮອດປີ 2030: ຮອດປີ 2030 ສປປ ລາວ ສ້າງໄດ້ບາດລ້ຽວໃໝ່ໃນການພັດທະນາໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງຕາມທິດເສດຖະກິດພູມປັນຍາ, ສີຂຽວ ແລະ ຍືນຍົງ, ມີອຸດສາຫະກຳເປັນເສົາຄໍ້າ ແລະ ໂຄງລ່າງພື້ນຖານເສດຖະກິດທີ່ເຂັ້ມແຂງສຳລັບການຫັນເປັນອຸດສະຫະກຳ ແລະ ທັນສະໄໝ, ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ, ສັງຄົມມີຄວາມສະຫງົບສຸກ, ມີປະຊາທິປະໄຕ, ສີວິໄລ ແລະ ຍຸຕິທຳ, ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ຊັບພະຍາກອນທຳມະຊາດໄດ້ຮັບການຄຸ້ມຄອງ ແລະ ນຳໃຊ້ຢ່າງມີປະສິດທິຜົນ ແລະ ຍືນຍົງ ມີຄວາມເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ[4].

- ຮັບປະກັນຄວາມສອດຄ່ອງ ແລະ ກົມກຽວລະຫວ່າງຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ. ການພັດທະນາ ແລະ ການສະໜອງທຶນຕ້ອງມີຄວາມສອດຄ່ອງ, ກົມກຽວກັນຄື ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຕ່ລະຂະແໜງການ, ທ້ອງຖິ່ນ ແລະ ເຂດແຄວ້ນຕ້ອງໃຫ້ສອດຄ່ອງກັບຄວາມສາມາດດ້ານທຶນຮອນທີ່ມີ; ພ້ອມນັ້ນກໍ່ຕ້ອງລະດົມທຶນເພື່ອຕອບສະໜອງຄວາມຕ້ອງການໃນການພັດທະນາທີ່ຈຳເປັນໃນແຕ່ລະໄລຍະ. ການສ້າງແຜນການລົງທຶນຂອງລັດຕ້ອງຄຳນຶງເຖິງຄວາມສາມາດຂອງແຫຼ່ງທຶນເພື່ອຫຼີກເວັ້ນການສ້າງໜີ້ສິນຄຸມເຄືອ[5].

- ພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດຸນອີງໃສ່ທ່າແຮງ, ຂໍ້ໄດ້ປຽບ ແລະ ຈຸດພິເສດຂອງແຕ່ລະພາກ, ແຕ່ລະທ້ອງຖິ່ນ ເພື່ອສ້າງສຳພັນເສດຖະກິດລະຫວ່າງບ້ານ, ເມືອງ, ແຂວງ ແລະ ພາກຕ່າງໆຢ່າງມີຈຸດສຸມ ແລະ ມີປະສິດທິຜົນ; ຈັດສັນ ແລະ ສ້າງເຂດພັດທະນາທີ່ເປັນຕົວແບບ, ເຂດເສດຖະກິດພິເສດ

---

[4] ເອກະສານກອງປະຊຸມໃຫຍ່ຄັ້ງທີ X ພັກປະຊາຊົນປະຕິວັດລາວ, ສະບັບປີ 2016, ໜ້າ 84.

[5] ທາກໍອ້າງ, ໜ້າ 96.

ແລະ ເຂດເສກຖະກິດສະເພາະ ແລະ ການຂະຫຍາຍເຂດເຊື່ອມຕໍ່ພາຍໃນປະເທດ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ. ຫັນປ່ຽນໂຄງປະກອບເສດຖະກິດຂອງແຕ່ລະເຂດແຄວ້ນຕາມທິດເພີ່ມອັດຕາສ່ວນຂະແໜງການທີ່ມີທ່າແຮງໄດ້ປຽບ, ສົ່ງເສີມການນໍາໃຊ້ກົນຈັກ ແລະ ຜົນສໍາເລັດໃໝ່ຂອງວິທະຍາສາດ-ເຕັກໂນໂລຊີເຂົ້າໃສ່ການກະສິກໍາໃຫ້ແຜ່ຫຼາຍ, ຫັນແຮງງານທີ່ເຮດວຽກກະສິກໍາຢູ່ຊົນນະບົດ ໄປເຮັດວຽກໃນຂະແໜງອຸດສະຫະກໍາ ແລະ ບໍລິການໃຫ້ຫຼາຍຂື້ນ. ເພີ່ມທະວີການປະສານງານ ແລະ ແລກປ່ຽນບົດຮຽນຂອງການພັດທະນາລະຫວ່າງເຂດແຄວ້ນ ແລະ ບັນດາແຂວງພາຍໃນພາກໃຫ້ຫຼາຍຂື້ນ[6].

- ແຫຼ່ງທຶນເພື່ອການພັດທະນາ ເພື່ອເຮັດໃຫ້ເສດຖະກິດມີການຂະຫຍາຍຕົວລະດັບ 7,5 ຂື້ນໄປ ໃນໄລຍະ 5ປີ 2016-2020 ແມ່ນມີຄວາມຕ້ອງການລົງທຶນຂອງລັດທັງໝົດປະມານ 223 ພັນຕື້ກີບ ຫຼື ປະມານ 27 ຕື້ໂດລາສະຫາລັດ, ກວມ 30% ຂອງລວມຍອດມູນຄ່າຜະລິດຕະພັນພາຍໃນ ໃນນີ້ການລົງທຶນຂອງລັດຈາກງົບປະມານພາຍໃນກວມ 9-11% ຂອງການລົງທຶນລວມ ການລົງທຶນຈາກທຶນທາງການເພື່ອການພັດທະນາ ກວມ 12-16% ຂອງການລົງທຶນລວມ[7].

### 1.1.2 ນະໂຍບາຍຂອງລັດຕໍ່ກັບການລົງທຶນຂອງລັດ

ລັດລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ, ວັດຖຸເຕັກນິກ, ການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກ, ການພັດທະນາຊັບພະຍາກອນມະນຸດ, ການປົກປັກຮັກສາສິ່ງແວດລ້ອມຕາມທິດຍືນຍົງ, ການສົ່ງເສີມວິຊາການ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງມີປະສິດທິພາບ, ປະສິດທິຜົນ ປະຢັດ, ໂປ່ງໃສສາມາດກວດສອບໄດ້.

ລັດ ຊຸກຍູ້ສົ່ງເສີມບຸກຄົນ ແລະ ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນທຶນຮອນຂອງຕົນເຂົ້າໃນແຜນການ ຫຼື ໂຄງການລົງທຶນຂອງລັດ ຕາມລະບຽບການດ້ວຍການປະຕິບັດນະໂຍບາຍຕອບແທນຂອງລັດຢ່າງເໝາະສົມ[8].

### 1.1.3 ຄາດໝາຍສູ້ຊົນແຜນການລົງທຶນຂອງລັດ 5ປີ ຄັ້ງທີ VIII (2016-2020)

ເພື່ອເປັນການຜັນຂະຫຍາຍນະໂຍບາຍຂອງພັກ ສະນັ້ນຈິ່ງໄດ້ວາງຄາດໝາຍສູ້ຊົນເພື່ອເຮັດໃຫ້ນະໂຍບາຍຂອງພັກໃຫ້ປະກົດຜົນເປັນຈິງ ດັ່ງນັ້ນ, ການກໍ່ສ້າງພື້ນຖານໂຄງລ່າງແມ່ນສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທີ່ຈໍາເປັນໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບເປັນຕົ້ນແມ່ນ:

[6]ເອກະສານກອງປະຊຸມໃຫຍ່ຄັ້ງທີ X ພັກປະຊາຊົນປະຕິວັດລາວ, ສະບັບປີ 2016, ໜ້າ 96.

[7]ທາກໍາອ້າງ, ໜ້າ 94.

[8]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 4.

- ຍົກລະດັບບັນດາເສັ້ນທາງເຊື່ອມຕໍ່ກັບບັນດາປະເທດໃກ້ຄຽງເປັນຕົ້ນ ແລວທາງອະນຸພາກພື້ນແມ່ນ້ຳຂອງ (GMS), ເສັ້ນທາງດ່ວນອາຊຽນ (Asian Highway), ແລວເສດຖະກິດຕາເວັນອອກ-ຕົກ (East West Corridor), ແລວເສດຖະກິດເໜືອໃຕ້ (North-South Economic Corridor)

- ຍົກລະດັບບັນດາເສັ້ນທາງຕາມແຜນຍຸດທະສາດດ້ານໂລຈິດສະຕິກໃຫ້ສາມາດຮັບນ້ຳໜັກຂົນສົ່ງໄດ້ 11ໂຕນ/ເພົາເພື່ອຮອງຮັບການຫັນເປັນອຸດສະຫາກຳ ແລະ ທັນສະໄໝ[9].

- ການລົງທຶນຈາກງົບປະມານລັດ ກວມປະມານ 9-11%ຂອງການລົງ ທຶນລວມ

- ການລົງທຶນຈາກງົບປະມານລັດຕ້ອງສຸມໃສ່ປັບປຸງ ແລະ ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມທີ່ເປັນພື້ນຖານເປັນຕົ້ນ ຖະໜົນຫົນທາງ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ນ້ຳລິນ, ສູນຄົ້ນຄວ້າເຕັກນິກກະສິກຳ, ຊຸກຍູ້ສົ່ງເສີມດ້ານເຕັກ ນິກວິຊາການ, ການພັດທະນາເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ[10].

### 1.1.4 ຄາດໝາຍສູ້ຊົນແຜນການລົງທຶນຂອງລັດຢູ່ແຂວງຈຳປາສັກ 5ປີ ຄັ້ງທີ VIII (2016-2020)

ໃນຊຸມປີຕໍ່ໜ້າແຂວງຈຳປາສັກຕ້ອງສຸມທຸກສະຕິປັນຍາເຫື່ອແຮງ ເພື່ອຊອກຫາທຶນ ຮອນມາໃສ່ການພັດທະນາເສດຖະກິດ-ສັງຄົມ ຕາມຍຸດທະສາດທີ່ກຳນົດໄວ້ ໃຫ້ປະສົບຜົນ ສຳເລັດດ້ວຍຫຼາຍວິທີ ໃນນີ້ໃຫ້ຖືເອົາການລົງທຶນຂອງລັດເປັນບັນຫາຕົ້ນຕໍເອົາການຊ່ວຍເຫຼືອທາງການເພື່ອການພັດທະນາ ມີຄວາມຕ້ອງການທຶນເພື່ອການພັດທະນາ ໃນໄລຍະ 2016-2020 ທັງໝົດປະມານ 25.497 ຕື້ກີບ ກວມ 31,73% ຂອງ GDP, ໃນນັ້ນຈະມີ:

- ທຶນຈາກພາກລັດ 515 ຕື້ກີບ ກວມ 2,02% ຂອງທຶນທັງໝົດ
- ທຶນກູ້ຢືມ-ຊ່ວຍເຫຼືອລ້າ 4.600 ຕື້ກີບ ກວມ 18,04%ຂອງທຶນທັງໝົດ

ການລົງທຶນດ້ວຍງົບປະມານຂອງລັດກວມສະເລ່ຍຕໍ່ປີແມ່ນ 2,02% ຂອງການລົງທຶນທັງໝົດ ຫຼື ປະມານ 103 ຕື້ກີບ, ການລົງທຶນຂອງລັດຕ້ອງສຸມໃສ່ພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ, ໂຄງການບູລິມະສິດຂອງລັດຖະບານ, ສົມທົບທຶນເພື່ອຈັດຕັ້ງໂຄງການຊ່ວຍ ເຫຼືອ ຫຼື ກູ້ຢືມ, ພັດທະນາສາທາລະນຸປະໂຫຍດຂັ້ນພື້ນຖານ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ພ້ອມກັນນັ້ນກໍ່ຕ້ອງເພີ່ມທະວີເອົາໃຈໃສ່ຄຸ້ມຄອງການລົງທຶນຂອງລັດໃຫ້ເປັນໄປຕາມລະບຽບກົດໝາຍ, ຢຸດຕິການສ້າງໂຄງການນອກແຜນ ແລະ ໂຄງການລົງທຶນກ່ອນ ສຳລັບການຈັດສັນແຫຼ່ງທຶນໃນໂຄງປພກອບການລົງທຶນຂອງລັດຕ້ອງ

[9] ແຜນພັດທະນາເສດຖະກິດສັງຄົມ 5ປີ ຄັ້ງທີ VIII (2016-2020), ໜ້າ 85.

[10] ທາກຳອ້າງ, ໜ້າ 93-94.

ປະຕິບັດຕາມແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານຕາມລະບຍບການທີ່ສະພາແຫ່ງຊາດຮັບຮອງ ແລະ ຕົກລົງດັ່ງນີ້:

- ການລົງທຶນຂອງລັດໃນຂົງເຂດເສດຖະກິດກວມເອົາປະມານ 30% ຂອງມູນຄ່າການລົງທຶນ

- ການລົງທຶນຂອງລັດໃນຂົງເຂດວັດທະນະທຳ-ສັງຄົມ ກວມເອົາປະມານ 35% ຂອງມູນຄ່າການລົງທຶນ ໃນນັ້ນ ສຶກສາ 17% ແລະ ສາທາ 9%

- ການລົງທຶນຂອງລັດໃນຂົງເຂດກໍ່ສ້າງໂຄງລ່າງພື້ນຖານ ກວມປະມານ 35% ຂອງມູນຄ່າການລົງທຶນ[11].

## 1.2 ຫຼັກການທີ່ກ່ຽວຂ້ອງ

### 1.2.1 ຫຼັກການກ່ຽວກັບການລົງທຶນຂອງລັດ

ເພື່ອຮັບປະກັນເຮັດໃຫ້ການລົງທຶນຂອງລັດໄດ້ຮັບໝາກຜົນຢ່າງແທ້ຈິງ ແລະ ຍັງເປັນການຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດນະໂຍບາຍຂອງພັກ-ລັດໃຫ້ປະກົດຜົນເປັນຈິງ ລັດຈຶ່ງໄດ້ກຳນົດຫຼັກການການລົງທຶນລັດເອົາໄວ້ດັ່ງນີ້:

- ສອດຄ່ອງກັບວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຄວາມສາມາດຕອບສະໜອງທາງດ້ານງົບປະມານແຫ່ງລັດ

- ປະຢັດ, ມີຈຸດສຸມ, ມີຄວາມຍຸຕິທຳ, ມີຄວາມສົມສ່ວນລະຫວ່າງເຂດແຄວ້ນ ແລະ ຂົງເຂດວຽກງານ

- ປະຕິບັດຕາມແຜນງານ, ໂຄງການທີ່ຢູ່ໃນແຜນການລົງທຶນຂອງລັດ ແລະ ເປັນໂຄງການທີ່ມີຄວາມຈຳເປັນ ຊຶ່ງພາກສ່ວນເສດຖະກິດອື່ນບໍ່ລົງທຶນ ຫຼື ບໍ່ມີເງື່ອນໄຂ

- ຄຸ້ມຄອງການລົງທຶນຂອງລັດຢ່າງເປັນເອກະພາບ, ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນ

- ຕິດຕາມ, ກວດກາ ແລະ ປະເມີນຜົນການລົງທຶນຂອງລັດຈາກພາກສ່ວນທີ່ກ່ຽວຂ້ອງ

- ມີສ່ວນຮ່ວມຂອງປະຊາຊົນ[12].

### 1.2.2 ຫຼັກການກ່ຽວກັບວຽກງານທາງຫຼວງ

ທາງຫຼວງ ແມ່ນຂອບເຂດພື້ນທີ່ສາທາລະນະຊຶ່ງໄດ້ກໍ່ສ້າງຂຶ້ນເພື່ອຮັບໃຊ້ການສັນຈອນຈາກຈຸດໜຶ່ງໄປຫາອີກຈຸດໜຶ່ງ ແລະ ລັດຍັງໄດ້ຊຸກຍູ້ ແລະ ສົ່ງເສີມກິດຈະການທາງ

---

[11] ແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງທີ VIII (2016-2020) ຂອງແຂວງຈຳປາສັກ, ໜ້າ 27.

[12] ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 5.

ທາງໃຫ້ດຳເນີນໄປຖືກຕ້ອງຕາມລະບຽບກົດໝາຍ ແລະ ປະຕິບັດຕາມຫຼັກການດັ່ງນີ້:

- ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນຜັງຕົວເມືອງ ແລະ ແຜນຍຸດທະສາດພັດທະນາຂອງຂະແໜງການອື່ນ.

- ຖືກຕ້ອງຕາມແຜນຜັງໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍທີ່ໄດ້ຕົກລົງກັນ.

- ມີຄຸນະພາບ, ຄວາມປອດໄພ, ບໍ່ສົ່ງຜົນກະທົບທາງລົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຕໍ່ພື້ນຖານໂຄງລ່າງທາງດ້ານເຕັກນິກ, ບູຮານສະຖານ, ທິວທັດທຳມະຊາດ ແລະ ສິ່ງແວດລ້ອມ.

- ມີຄວາມເປີດເຜີຍ, ໂປ່ງໃສ, ຍືນຍົງ ແລະ ຜົນຕອບແທນສູງສຸດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ສາມາດກວດສອບໄດ້.

- ຮັບປະກັນການມີສ່ວນຮ່ວມຂອງອົງການປົກຄອງທ້ອງຖິ່ນ, ນັກວິຊາການທີ່ກ່ຽວຂ້ອງ ແລະ ປະຊາຊົນ[13].

## 1.3 ຄວາມຮັບຮູ້ທົ່ວໄປກ່ຽວກັບການລົງທຶນຂອງລັດ

### 1.3.1 ຄວາມໝາຍກ່ຽວກັບການລົງທຶນຂອງລັດ

ການລົງທຶນຂອງລັດແມ່ນການນຳໃຊ້ງົບປະມານແຫ່ງລັດ, ຊັບພະຍາກອນທຳມະຊາດ, ຊັບສິນ, ລິຂະສິດຂອງລັດ ແລະ ທຶນຊ່ວຍເຫຼືອທາງການເພື່ອການພັດທະນາທີ່ຜ່ານລະບົບງົບປະມານເຂົ້າໃສ່ໂຄງການກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ສາທາລະນະປະໂຫຍດ, ສະໜອງອຸປະກອນ ແລະ ສົ່ງເສີມວິຊາການ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ[14].

ທຶນທີ່ໃຊ້ເຂົ້າໃນການລົງທຶນຂອງລັດໄດ້ມາຈາກແຫຼ່ງທຶນພາຍໃນ, ທຶນກູ້ຢືມ ແລະ ທຶນຊ່ວຍເຫຼືອລ້າຈາກຕ່າງປະເທດ ເຂົ້າໃນການກະກຽມ ແລະ ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດຕາມແຜນພັດທະນາເສດຖະກິດສັງຄົມທີ່ໄດ້ຖືກຮັບຮອງເອົາໃນແຕ່ລະໄລຍະ[15]. ສຳລັບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ປະກອບດ້ວຍສອງປະເພດຄືການຊ່ວຍເຫຼືອຫຼ້າ ແລະ ການກູ້ຢືມເງິນໃນເງື່ອນໄຂດອກເບ້ຍຜ່ອນຜັນທີ່ ສປປ ລາວ ໄດ້ຮັບຈາກຕ່າງປະເທດເຊັ່ນ ລັດຖະບານ, ສະຖາບັນການເງິນສາກົນ, ອົງການຈັດຕັ້ງສາກົນ, ອົງ

---

[13]ກົດໝາຍວ່າດ້ວຍທາງຫຼວງ (ສະບັບປັບປຸງ), ປີ 2016, ມາດຕາ 5.

[14]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 2.

[15]ສາລະບານບັນຊີ-ງົບປະມານແຫ່ງລັດ, ສະບັບປີ 2013, ພາກ 17.

ການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານລວມທັງກອງທຶນ, ມູນນິທິ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ[16].

### 1.3.2 ປະເພດການລົງທຶນຂອງລັດ

ການລົງທຶນຂອງລັດໃນປັດຈຸບັນແມ່ນມີການສຸມໃສ່ຫຼາຍວຽກງານທີ່ກ່ຽວຂ້ອງກັບການພັດທະນາ ແລະ ສ້າງສາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ການລົງທຶນຂອງລັດໄດ້ມີການລົງທຶນຫຼາຍຂະແໜງການຍ່ອຍ ແລະ ສາມາດຈັດເປັນສາມປະເພດໃຫຍ່ດັ່ງນີ້:

- ລັດລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ
- ລັດລົງທຶນໃສ່ການສະໜອງວັດຖຸອຸປະກອນ
- ລັດລົງທຶນໃສ່ການສົ່ງເສີມວິຊາການ[17].

1 ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ

ການລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງປະກອບດ້ວຍ ການກໍ່ສ້າງໃໝ່ ແລະ ການບູລະນະສ້ອມແປງໃຫຍ່, ພື້ນຖານໂຄງລ່າງສາທາລະນຸປະໂພກໄດ້ແກ່ ເສັ້ນທາງຄົມມະນາຄົມ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ສຳນັກງານຫ້ອງການ ແລະ ບັນດາພື້ນຖານວັດຖຸເຕັກນິກ[18].

2 ການລົງທຶນໃສ່ການສະໜອງວັດຖຸອຸປະກອນ

ການສະໜອງວັດຖຸອຸປະກອນປະກອບດ້ວຍຊັບສິນ, ພາຫະນະ ແລະ ອຸປະກອນຮັບໃຊ້ການຜະລິດ, ອຸປະກອນເຕັກນິກ-ວິຊາການ, ອຸປະກອນຮັບໃຊ້ວິຊາການ ແລະ ເຄື່ອງເຟີນີເຈີທີ່ຈຳເປັນ ທີ່ຕິດພັນໂດຍກົງກັບໂຄງການກໍ່ສ້າງໃໝ່[19].

3 ການລົງທຶນໃສ່ການສົ່ງເສີມວິຊາການ

ການລົງທຶນໃສ່ການສົ່ງເສີມວິຊາການປະກອບດ້ວຍການເກັບກຳ, ວິເຄາະ, ວິໄຈຂໍ້ມູນ, ສ້າງບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ການສຳຫຼວດ-ອອກແບບໂຄງການການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ, ເວນຄືນທີ່ດິນ ແລະ ຄ່າຊົດເຊີຍສິ່ງກີດຂວາງ, ຄ່າຄຸ້ມຄອງໂຄງການ, ຄ່າຈ້າງທີ່ປຶກສາໂຄງການ, ຄ່າຕິດຕາມກວດກາການຈັດຕັ້ງປະຕິບັດ

---

[16]ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ, ສະບັບເລກທີ 75/ນຍ ລົງວັນທີ 20 ມີນາ 2009, ມາດຕາ 1.

[17]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 8.

[18]ທາກໍອ້າງ, ມາດຕາ 9.

[19]ທາກໍອ້າງ, ມາດຕາ 10.

ໂຄງການລົງທຶນຂອງລັດ, ການຝຶກອົບຮົມ, ການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ, ການສົ່ງເສີມການຜະລິດ ແລະ ການສ້າງແຜນແມ່ບົດພັດທະນາເສດຖະກິດສັງຄົມ[20].

### 1.3.3 ຂັ້ນຕອນການດຳເນີນການລົງທຶນຂອງລັດ

ເພື່ອເຮັດໃຫ້ການລົງທຶນຂອງລັດໃຫ້ເປັນເອກະພາບໃນທົ່ວປະເທດ ແລະ ຮັບປະກັນໃຫ້ການລົງທຶນຂອງລັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ສອດຄ່ອງກັບນະໂຍບາຍຂອງພັກ-ລັດ ໃນແຕ່ລະໄລຍະ ສະນັ້ນ, ຂັ້ນຕອນການດຳເນີນການລົງທຶນຂອງລັດໄດ້ປະກອບດ້ວຍ6ຂັ້ນຕອນຄື:

- ຂັ້ນຕອນການກະກຽມເອກະສານໃນການລົງທຶນຂອງລັດ
- ອົງການທີ່ຮັບຜິດຊອບໃນການສ້າງແຜນການລົງທຶນຂອງລັດ
- ອົງການທີ່ຮັບຜິດຊອບການປະເມີນ ແລະ ການພິຈາລະນາແຜນການລົງທອນຂອງລັດ
- ອົງການທີ່ມີສິດອຳນາດໃນການຮັບຮອງເອົາແຜນການລົງທຶນຂອງລັດ
- ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ
- ການຕິດຕາມ, ກວດກາ ແລະ ປະເມີນຜົນໂຄງການລົງທຶນຂອງລັດ

ລາຍລະອຽດແຕ່ລະຂັ້ນຕອນການດຳເນີນການລົງທຶນຂອງລັດມີດັ່ງນີ້:

**ກ. ຂັ້ນຕອນກະກຽມເອກະສານໃນການລົງທຶນຂອງລັດ**

ເອກະສານໃນການລົງທຶນຂອງລັດປະກອບມີດັ່ງນີ້:

1 ໂຄງການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງປະກອບມີ:

- ບົດສະເໜີໂຄງການ
- ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ
- ບົດລາຍງານການສຳຫຼວດອອກແບບ
- ໃບຢັ້ງຢືນແບບ ແລະ ມູນຄ່າໂຄງການຂອງຂະແໜງການທີ່ກ່ຽວຂ້ອງ
- ໃບຢັ້ງຢືນການປະເມີນໂຄງການ
- ໃບໂອນສິດນຳໃຊ້ທີ່ດິນ ເພື່ອສາທາລະນະປະໂຫຍດໃນກໍລະນີມີການນຳໃຊ້ທີ່ດິນຂອງປະຊາຊົນ

ສຳລັບໂຄງການລົງທຶນຂອງລັດປະເພດ I, II, ແລະ III ທີ່ນຳໃຊ້ເຕັກນິກສູງຕ້ອງປະກອບເອກະສານອີກເພີ່ມຕື່ມດັ່ງນີ້:

- ບົດພັດທະນາໂຄງການ ຫຼື ບົດວິພາກເສດຖະກິດເຕັກນິກ

---

[20] ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັງປຸງ), ປີ 2015, ມາດຕາ 11.

- ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ.

2 ໂຄງການສະໜອງວັດຖຸອຸປະກອນ

- ບົດສະເໜີໂຄງການ
- ໃບປະເມີນລາຄາ
- ໃບກຳນົດຂໍ້ມູນສະເພາະຂອງວັດຖຸອຸປະກອນ
- ໃບຢັ້ງຢືນການປະເມີນໂຄງການ.

3 ໂຄງການສົ່ງເສີມວິຊາການ

- ບົດສະເໜີໂຄງການ
- ແຜນດຳເນີນງານ
- ໃບປະເມີນມູນຄ່າໂຄງການ
- ໃບຢັ້ງຢືນການປະເມີນໂຄງການ[21].

**ຂ. ອົງການທີ່ຮັບຜິດຊອບໃນການສ້າງແຜນການລົງທຶນຂອງລັດ**

ໃນການສ້າງແຜນການລົງທຶນຂອງລັດຈະປະກອບມີອົງການຈັດຕັ້ງລັດ, ກະຊວງ ແລະ ອົງການທຽບເທົ່າກະຊວງ ເພື່ອສ້າງແຜນການລົງທຶນຂອງລັດໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບຫຼັກການທີ່ກ່ຽວຂ້ອງ ດັ່ງນັ້ນອົງການທີ່ຮັບຜິດຊອບໃນການສ້າງແຜນການລົງທຶນຂອງລັດປະກອບມີ:

- ລັດຖະບານ
- ກະຊວງແຜນການ ແລະ ການລົງທຶນ
- ກະຊວງ, ອົງການທຽບເທົ່າກະຊວງ
- ອົງການປົກຄອງແຂວງ, ນະຄອນຫຼວງ
- ອົງການປົກຄອງເມືອງ, ເທດສະບານ, ນະຄອນ[22].

ລາຍລະອຽດຄວາມຮັບຜິດຊອບຂອງແຕ່ລະອົງການໃນການລົງທຶນຂອງລັດມີດັ່ງນີ້:

1 ລັດຖະບານ

ລັດຖະບານເປັນຜູ້ກຳນົດທິດທາງ, ຄາດໝາຍລວມໃນການສ້າງແຜນການລົງທຶນຂອງລັດ ບົນພື້ນຖານການຄົ້ນຄວ້າ ຂອງກະຊວງ ແຜນການ ແລະ ການລົງທຶນ ກ່ຽວກັບປັດໃຈຕ່າງໆເປັນຕົ້ນແຫຼ່ງທຶນ ແລະ ການດຸນດ່ຽງມະຫາພາກ[23].

2 ກະຊວງແຜນການ ແລະ ການລົງທຶນ

---

[21]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 22.

[22]ຫາກໍອ້າງ, ມາດຕາ 28.

[23]ຫາກໍອ້າງ, ມາດຕາ 29.

ກະຊວງແຜນການ ແລະ ການລົງທຶນເປັນໃຈກາງປະສານງານກັບບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຄົ້ນຄວ້າສ້າງ, ຜັນຂະຫຍາຍທິດທາງ ແລະ ຄາດໝາຍລວມຂອງລັດຖະບານ ແລ້ວນຳສະເໜີດ້ານວິຊາການກ່ຽວກັບການສ້າງແຜນການໃຫ້ຂະແໜງການ ແລະ ທ້ອງຖິ່ນ. ຈາກນັ້ນຈຶ່ງຄົ້ນຄວ້າສັງລວມແຜນການລົງທຶນຂອງກະຊວງ, ອົງການທຽບເທົ່າກະຊວງ ແລະ ທ້ອງຖິ່ນ ເພື່ອສ້າງແຜນການລົງທຶນຂອງລັດໃນທົ່ວປະເທດ[24].

3 ກະຊວງ, ອົງການທຽບເທົ່າກະຊວງ

ກະຊວງ, ອົງການທຽບເທົ່າກະຊວງຊີ້ນຳພາກສ່ວນຕ່າງໆທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນສ້າງແຜນກາານລົງທຶນຂອງລັດໃນຂັ້ນຂອງຕົນ ເພື່ອນຳສະເໜີຕໍ່ກະຊວງແຜນການ ແລະ ການລົງທຶນ[25].

4 ອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນມີຄວາມຮັບຜິດຊອບດັ່ງນີ້:

- ຂັ້ນແຂວງ ເປັນເຈົ້າການໃນການຄົ້ນຄວ້າສ້າງ, ຜັນຂະຫຍາຍແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດຫ້າປີ ແລະ ປະຈຳປີຂອງຕົນ

- ຂັ້ນເມືອງ ເປັນເຈົ້າການໃນການຄົ້ນຄວ້າສ້າງ, ຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດຫ້າປີ ແລະ ປະຈຳປີຂອງຕົນ[26].

**ຄ. ອົງການທີ່ຮັບຜິດຊອບການປະເມີນ ແລະ ພິຈາລະນາແຜນການລົງທຶນຂອງລັດ**

ການປະເມີນການລົງທຶນຂອງລັດ ຕ້ອງໃຫ້ຖືກຕ້ອງຕາມຫຼັກການວິຊາການ ແລະ ນຳໃຊ້ເຄື່ອງມືການປະເມີນໂຄງການທີ່ກະຊວງແຜນການ ແລະ ການລົງທຶນວາງອອກ.

ອົງການປະເມີນການລົງທຶນຂອງລັດປະກອບດ້ວຍ:

- ກະຊວງແຜນການ ແລະ ການລົງທຶນ ປະເມີນໂຄງການລົງທຶນຂອງລັດຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ຂອງແຂວງ ແລະ ນະຄອນຫຼວງຊຶ່ງປະກອບມີ:

ໂຄງການລົງທຶນປະເພດI: ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າ 400.00 0.000.000 ກີບຂຶ້ນໄປ, ໄລຍະການປະຕິບັດໂຄງການແມ່ນ 7ປີ. ມີໄລຍະການຊຳລະບໍ່ເກີນ 10ປີ

ໂຄງການລົງທຶນປະເພດII: ແມ່ນໂຄງການທີ່ມີມູນຄ່າຫຼາຍກວ່າ 200.000.0 00.000 ກີບ ຫາ 400.000.000.000 ກີບ, ໄລຍະປະຕິບັດໂຄງການບໍ່ເກີນ 6ປີ. ໄລຍະການຊຳລະບໍ່ເກີນ 9ປີ

---

[24]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັງປຸງ), ປີ 2015, ມາດຕາ 30.

[25]ຫາກໍອ້າງ, ມາດຕາ 31.

[26]ຫາກໍອ້າງ, ມາດຕາ 32.

ໂຄງການລົງທຶນປະເພດIII: ແມ່ນໂຄງການທີ່ມີມູນຄ່າ100.000.000.000ກີບ ຫາ 200.000.000.000 ກີບ, ໄລຍະການປະຕິບັດໂຄງການແມ່ນບໍ່ເກີນ 5ປີ. ໄລຍະການຊຳລະແມ່ນບໍ່ເກີນ 7ປີ.

ໂຄງການລົງທຶນປະເພດIV: ແມ່ນໂຄງການທີ່ມີມູນຄ່າ ຫຼາຍກວ່າ 20.000 .000.000 ກີບ ຫາ 100.000.000.000 ກີບ, ໄລຍະການປະຕິບັດໂຄງການແມ່ນບໍ່ເກີນ 4ປີ. ມີໄລຍະການຊຳລະບໍ່ເກີນ 6ປີ.

- ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ປະເມີນການລົງທຶນຂອງລັດປະເພດ V ຂອງຕົນ ຊຶ່ງໂຄງການດັ່ງກ່າວ: ແມ່ນມີມູນຄ່າ 20.000.000.000 ກີບລົງມາ ໄລຍະການປະຕິບັດໂຄງການແມ່ນບໍ່ເກີນ 3ປີ. ໄລຍະການຊຳລະແມ່ນບໍ່ເກີນ 5ປີ.

ໃນການພິຈາລະນາໂຄງການລົງທຶນຂອງລັດ ລັດຖະບານຈະເປັນຜູ້ພິຈາລະນາໂຄງການລົງທຶນລະດັບຊາດ, ໂຄງການລົງທຶນຂອງລັດປະເພດ I, II ແລະ ປະເພດ III ເຂົ້າໃນແຜນການລົງທຶນຂອງລັດ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າ, ພິຈາລະນາ ໂຄງການລົງທຶນຂອງລັດປະເພດ IV ແລະ ປະເພດ V ຂອງກະຊວງ, ອົງການທຽບເທົ່າກະຊວງ ແລະ ໂຄງການລົງທຶນປະເພດ V ຂອງແຂວງ, ນະຄອນຫຼວງ ເຂົ້າໃນແຜນການລົງທຶນຂອງລັດຕາມການສະເໜີຂອງລັດຖະມົນຕີກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ແລະ ນອກຈາກນັ້ນ ແຂວງ, ນະຄອນຫຼວງຄົ້ນຄວ້າ, ພິຈາລະນາໂຄງການລົງທຶນຂອງລັດປະເພດ V ຂອງຕົນເຂົ້າໃນແຜນການລົງທຶນຂອງລັດຕາມການສະເໜີຂອງພະແນກແຜນການ ແລະ ການລົງທຶນ.

**໑. ອົງການທີ່ມີສິດອຳນາດໃນການຮັບຮອງເອົາແຜນການລົງທຶນຂອງລັດ**

- ສະພາແຫ່ງຊາດຮັງຮອງເອົາວິໄສ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຫ້າປີ ແລະ ປະຈຳປີ, ແຜນຈັດສັນງົບປະມານການລົງທຶນຂອງລັດ ຫ້າປີ, ໂຄງການລົງທຶນລະດັບຊາດປະຈຳປີ, ແຜນການລົງທຶນຂອງລັດປະຈຳປີ, ໂຄງການລົງທຶນຂອງລັດປະເພດ I ແລະ ແຜນຈັດສັນງົບປະມານໂຄງການລົງທຶນຂອງລັດ ປະເພດ II, III, IV ຂອງກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ, ແຜນຈັດສັນງົບປະມານການລົງທຶນຂອງລັດ, ໂຄງການລົງທຶນຂອງລັດປະເພດ V ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ຮ່າງເອກະສານດັ່ງກ່າວຕ້ອງສົ່ງເຖິງສະພາແຫ່ງຊາດຢ່າງຊ້າ 15 ວັນລັດຖະການ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ[27].

---

[27]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ2015, ມາດຕາ 38.

- ສະພາປະຊາຊົນຂັ້ນແຂວງພິຈາລະນາຮັບຮອງເອົາຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຫ້າປີ ແລະ ປະຈໍາປີ ຂັ້ນແຂວງ, ແຜນການລົງທຶນຂອງລັດ ຫ້າປີ, ແຜນການລົງທຶນຂອງລັດປະຈໍາປີ, ໂຄງການລົງທຶນຂອງລັດປະເພດ V ຂອງແຂວງ, ນະຄອນຫຼວງຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ແຕ່ກ່ອນຈະນໍາສະເໜີສະພາປະຊາຊົນຂັ້ນແຂວງຮັບຮອງເອົາ ຕ້ອງສົ່ງຮ່າງແຜນການລົງທຶນໃຫ້ ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າມີຄໍາເຫັນກ່ຽວກັບຄວາມສອດຄ່ອງດ້ານນະໂຍບາຍການພັດທະນາ ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ. ຮ່າງເອກະສານດັ່ງກ່າວຕ້ອງສົ່ງເຖິງສະພາປະຊາຊົນຂັ້ນແຂວງຢ່າງຊ້າ 15ວັນ ລັດຖະການ ກ່ອນວັນເປີດກອງປະຊຸມສະພາປະຊາຊົນຂັ້ນແຂວງ. ພາຍຫຼັງສະພາປະຊາຊົນຂັ້ນແຂວງຮັບຮອງເອົາແລ້ວກໍ່ສາມາດຈັດຕັ້ງປະຕິບັດໄດ້[28].

**ຈ. ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ**

ພາຍຫຼັງທີ່ສະພາແຫ່ງຊາດຮັບຮອງເອົາແຜນການລົງທຶນຂອງລັດປະຈໍາປີ ແລະ ປະຈໍາຫ້າປີ ລັດຖະບານຕ້ອງອອກດໍາລັດຈັດຕັ້ງປະຕິບັດແຜນດັ່ງກ່າວພາຍໃນກໍານົດເວລາ ສິບຫ້າວັນລັດຖະການ ແລະ ກະຊວງແຜນການ ແລະ ການລົງທຶນຕ້ອງອອກຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດປະຈໍາປີ ພາຍໃນສິບຫ້າວັນລັດຖະການພາຍຫຼັງທີ່ລັດຖະບານໄດ້ອອກດໍາລັດວ່າດ້ວຍການຈັດຕັ້ງປະຕິບັດແຜນການດັ່ງກ່າວ.

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ມີການປະກອບສ່ວນຂອງທຶນປະຊາຊົນຊຶ່ງໃນນັ້ນທຶນຂອງລັດກວມເອົາສາມສິບສ່ວນຮ້ອຍຂອງທຶນທັງໝົດຂຶ້ນໄປໃຫ້ປະຕິບັດຂັ້ນຕອນການລົງທຶນຕາມກົດໝາຍວ່າດ້ວຍການລົງທຶນຂອງ ສະບັບປີ 2015, ຖ້າວ່າທຶນຂອງລັດຖະບານຫາກຕໍ່າກວ່າສາມສິບສ່ວນຮ້ອຍຂອງທຶນທັງໝົດໃຫ້ປະຕິບັດຕາມການຕົກລົງລະຫວ່າງເຈົ້າຂອງໂຄງການກັບປະຊາຊົນ[29].

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ນໍາໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ປະຕິບັດຕາມທີ່ກົດໝາຍວ່າດ້ວຍການລົງທຶນຂອງລັດ ຫຼື ກົດໝາຍ, ລະບຽບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດທີ່ນໍາໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ຫຼື ກົດໝາຍ, ລະບຽບການອື່ນທີ່ກ່ຽວຂ້ອງ ຫຼື ສັນຍາ ແລະ ອະນຸສັນຍາ ລະຫວ່າງລັດຖະບານກັບຜູ້ໃຫ້ທຶນ[30].

ໂຄງການລົງທຶນຂອງລັດໃຫ້ຈັດຕັ້ງປະຕິບັດຕາມຂັ້ນຕອນດັ່ງນີ້:

1) ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ

[28]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັງປຸງ), ປີ 2015, ມາດຕາ 39.

[29]ທາກໍອ້າງ, ມາດຕາ 51.

[30]ທາກໍອ້າງ, ມາດຕາ 52.

ພາຍຫຼັງແຜນການລົງທຶນຂອງລັດປະຈຳປີຖືກຮັບຮອງ ແລະ ຮອດໄລຍະເລີ່ມຈັດຕັ້ງປະຕິບັດປີງົບປະມານ ເຈົ້າຂອງໂຄງການຕ້ອງແຕ່ງຕັ້ງຄະນະຮັບຜິດຊອບໂຄງການ. ຄະນະຮັບຜິດຊອບໂຄງການປະກອບດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງເຈົ້າຂອງໂຄງການ, ຜູ້ຕາງໜ້າຈາກຂະແໜງການເງິນ, ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງເຂົ້າຮ່ວມນຳ ເພື່ອດຳເນີນການຄຸ້ມຄອງໂຄງການໃຫ້ສອດຄ່ອງກັບເປົ້າໝາຍ, ແຜນດຳເນີນງານ ແລະ ທັນກັບກຳນົດເວລາ[31].

2) ການຈັດຕັ້ງປະມູນໂຄງການລົງທຶນ

ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຕ້ອງມີການປະມູນ. ການຈັດຕັ້ງການປະມູນຕ້ອງປະຕິບັດຕາມນິຕິກຳທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ຮັບປະກັນການເປີດກວ້າງ, ໃຫ້ມີຄວາມໂປ່ງໃສ ສາມາດກວດສອບໄດ້, ມີຄວາມສະເໝີພາບ ແລະ ຍຸຕິທຳ.

ການປະມູນໂຄງການລົງທຶນຂອງລັດຕ້ອງມີຜູ້ຕ່າງໜ້າຈາກຂະແໜງການເງິນ, ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມນຳ.

ເຈົ້າຂອງໂຄງການເປັນຜູ້ຄົ້ນຄວ້າຕົກລົງສະຖານທີ່ຈັດຕັ້ງການປະມູນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ການປະມູນທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເປັນຕົ້ນການປະມູນແບບຮູບການຖືວ່າເປັນໂມຄະ.

ການປະມູນໂຄງການລົງທຶນຂອງລັດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ[32].

3) ການສ້າງສັນຍາໂຄງການລົງທຶນຂອງລັດ

ເຈົ້າຂອງໂຄງການສ້າງສັນຍາປະຕິບັດໂຄງການລົງທຶນຂອງລັດກັບ ຜູ້ຮັບ ເໝົາ, ຜູ້ສະໜອງ ແລະ ຜູ້ໃຫ້ບໍລິການໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ສ. ການຕິດຕາມ, ກວດກາ ແລະ ປະເມີນຜົນໂຄງການລົງທຶນຂອງລັດ**

ພາຍຫຼັງທີ່ໄດ້ປະຕິບັດໂຄງການລົງທຶນຂອງລັດມາໃນໄລຍະໜຶ່ງແລ້ວຕ້ອງປະຕິບັດດັ່ງນີ້:

- ຕິດຕາມກວດກາ, ກວດການ ການຈັດຕັ້ງປະຕິບັດໂຄງການປົກກະຕິ
- ດຳເນີນການປະເມີນຜົນເປັນແຕ່ລະໄລຍະ ເປັນຕົ້ນປະເມີນຜົນໃນເວລາຈັດຕັ້ງປະຕິບັດໂຄງການ.

ເນື້ອໃນການກວດກາ, ກວດການ ແລະ ປະເມີນຜົນ ຕົ້ນຕໍມີດັ່ງນີ້:

- ຄວາມສອດຄ່ອງກັບແຜນພັດທະນາໂຄງການ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ

---

[31]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັງປຸງ), ປີ 2015, ມາດຕາ 47.

[32]ຫາກຳອ້າງ, ມາດຕາ 48.

- ປະສິດທິພາບຂອງການນຳໃຊ້ງົບປະມານ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ

- ປະສິດທິຜົນໄດ້ບັນລຸຕາມຈຸດປະສົງ, ເປົ້າໝາຍໂຄງການ

- ຜົນກະທົບທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ

- ໝາກຜົນຂອງໂຄງການໄດ້ຮັບການນຳໃຊ້ຢ່າງຖືກຕ້ອງກັບເປົ້າໝາຍຂອງໂຄງການ ແລະ ປະກອບສ່ວນນຳເອົາຜົນປະໂຫຍດມາສູ່ສັງຄົມ.

- ໃນການກວດກາ, ກວດການ ແລະ ປະເມີນຜົນ ຖ້າຫາກພົບເຫັນບັນຫາໃດໜຶ່ງຕ້ອງມີມາດຕະການ ແລະ ວິທີແກ້ໄຂໃຫ້ທັນການ[33].

### 1.3.4 ອົງການຄຸ້ມຄອງການລົງທຶນຂອງລັດ

ເພື່ອເຮັດໃຫ້ວຽກງານການລົງທຶນຂອງລັດໃຫ້ເປັນໄປຕາມລະບຽບກົດໝາຍທີ່ກຳນົດ ແລະ ໄດ້ຮັບໝາກຜົນສູງຈຶ່ງຈຳເປັນຕ້ອງມີອົງການຄຸ້ມຄອງການລົງທຶນຂອງລັດ ໃນການຄຸ້ມຄອງວຽກງານການລົງທຶນຂອງລັດປະກອບດ້ວຍອົງການຕໍ່ໄປນີ້:

- ກະຊວງແຜນການ ແລະ ການລົງທຶນ
- ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ
- ຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ, ນະຄອນ
- ອົງການປົກຄອງບ້ານ.

ລາຍລະອຽດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານການລົງທຶນຂອງລັດມີດັ່ງນີ້:

1 ກະຊວງແຜນການ ແລະ ການລົງທຶນ

ໃນການຄຸ້ມຄອງການລົງທຶນຂອງລັດ ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ດັ່ງນີ້:

- ເປັນເສນາທິການໃຫ້ລັດຖະບານໃນການຜັນຂະຫຍາຍແນວທາງ, ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆ ກ່ຽວກັບການລົງທຶນຂອງລັດໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ສ້າງກົດໝາຍ ແລະ ລະບຽບການ

- ຊີ້ນຳ, ຕິດຕາມ, ກວດກາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານວິຊາສະເພາະຂອງຂະແໜງແຜນການ ແລະ ການລົງທຶນ ເປັນຕົ້ນການສ້າງ ແລະ ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການລົງທຶນຂອງລັດ, ກົດໝາຍ ແລະ ລະບຽບການກ່ຽວກັບການລົງທຶນຂອງລັດ

---

[33]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 53.

- ຄົ້ນຄວ້າ, ວິໄຈຂໍ້ມູນຂ່າວສານ ເພື່ອສະໜອງໃຫ້ແກ່ການຕັດສິນໃຈໃນການລົງທຶນຂອງລັດ

- ບໍ່ພິຈາລະນາໂຄງການລົງທຶນຂອງລັດ ທີ່ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນສະເໜີມາ ທີ່ບໍ່ສອດຄ່ອງກັບກົດໝາຍ

- ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃຫ້ລັດຖະບານຢ່າງເປັນປົກກະຕິ

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງລັດຖະບານ[34].

2 ພະແນກແຜນການ ແລະ ການລົງທຶນແຂວງ ແລະ ນະຄອນຫຼວງ

ໃນການຄຸ້ມຄອງການລົງທຶນຂອງລັດ ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ດັ່ງນີ້:

- ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງ ແລະ ລະບຽບການກ່ຽວກັບການຄຸ້ມຄອງການລົງທຶນຂອງລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນແຜນການ ແລະ ແຜນງານລະອຽດເພື່ອຈັດຕັ້ງປະຕິບັດ

- ໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບການລົງທຶນຂອງລັດ

- ຊີ້ນຳຕິດຕາມກວດກາພະແນກການ ແລະ ທ້ອງຖິ່ນ ກ່ຽວກັບວຽກງານວິຊາສະເພາະຂອງຂະແໜງແຜນການ ແລະ ການລົງທຶນ ເປັນຕົ້ນການສ້າງ ແລະ ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ພ້ອມທັງເຂົ້າຮ່ວມການປະມູນໂຄງການລົງທຶນທີ່ຕັ້ງຢູ່ແຂວງ ແລະ ນະຄອນຫຼວງ

- ບໍ່ພິຈາລະນາໂຄງການລົງທຶນຂອງລັດທີ່ ພະແນກການ, ອົງການລັດທຽບເທົ່າພະແນກ, ເມືອງ, ເທດສະບານ, ນະຄອນ ສະເໜີມາທີ່ບໍ່ສອດຄ່ອງກັບກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປີ 2015

- ເປັນເສນາທິການໃນການຄົ້ນຄວ້າ ມີຄຳເຫັນກ່ຽວກັບການລົງທຶນຂອງລັດໃນໂຄງ ການຕ່າງໆເພື່ອໃຫ້ອົງການປົກຄອງແຂວງ, ນະຄອນຫຼວງ ຫຼື ກະຊວງແຜນການ ແລະ ການລົງ ທຶນ ພິຈາລະນາຕາມແຕ່ລະກໍລະນີ

- ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນແຂວງ, ນະຄອນຫຼວງ ເພື່ອຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການແລະ ຕາມການມອບໝາຍຂອງກະຊວງແຜນການ ແລະ ການລົງທຶນ[35].

---

[34]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 88.

[35]ທາກໍອ້າງ, ມາດຕາ 89.

3 ຫ້ອງການແຜນການ ແລະ ການລົງທຶນເມືອງ, ເທດສະບານ

ໃນການຄຸ້ມຄອງວຽກງານການລົງທຶນຂອງລັດຫ້ອງການແຜນການເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ດັ່ງນີ້:

- ຈັດຕັ້ງປະຕິບັດບັນດາແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການກ່ຽວກັບການລົງທຶນຂອງລັດ

- ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຂອງລັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ

- ຊຸກຍູ້, ຕິດຕາມ ການປະຕິບັດວຽກງານກ່ຽວກັບການລົງທຶນຂອງລັດໃນຂອບເຂດທ້ອງຖິ່ນຂອງຕົນ

- ປຸກລະດົມປະຊາຊົນເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ໂຄງການລົງທຶນຂອງລັດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ

- ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດການລົງທຶນຂອງລັດພາຍໃນເມືອງ, ເທດ ສະບານ, ໃຫ້ພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານຢ່າງເປັນປົກກະຕິ

- ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ[36].

4 ອົງການປົກຄອງບ້ານ

ບ້ານແມ່ນເຂດການປົກຄອງທ້ອງຖິ່ນຂັ້ນຮາກຖານທີ່ຂຶ້ນກັບເມືອງ, ເທດສະບານ, ນະຄອນ. ອົງການປົກຄອງບ້ານແມ່ນການຈັດຕັ້ງບໍລິຫານລັດ ແລະ ປະຊາຊົນຈັດຕັ້ງຂຶ້ນ ເພື່ອຄຸ້ມຄອງບໍລິຫານບ້ານ ຊຶ່ງມີພາລະບົດບາດເປັນຕົວແທນ ແລະ ຮັບຜິດຊອບຕໍ່ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ປະຊາຊົນໃນການຄຸ້ມຄອງບໍລິຫານ, ການພັດທະນາເສດຖະກິດສັງຄົມ, ການປົກປັກຮັກສາຄວາມສະຫງົບ ການອໍານວຍຄວາມສະດວກ ແລະ ໃຫ້ບໍລິການສັງຄົມ ແລະ ປະຊາຊົນ ໃນຂອບເຂດການຄຸ້ມຄອງຂອງຕົນ[37]. ສະນັ້ນໃນການຄຸ້ມຄອງການລົງທຶນຂອງລັດອົງການປົກຄອງບ້ານມີສິດ ແລະ ໜ້າທີ່ດັ່ງນີ້:

- ເຂົ້າຮ່ວມຕິດຕາມ, ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃນຂອບເຂດພື້ນທີ່ຕົນຮັບຜິດຊອບ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງກໍ່ຄື ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ອື່ນໆ.

---

[36]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 90.

[37]ທາກໍອ້າງ, ມາດຕາ 81.

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ[38].

## 1.4 ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ

### 1.4.1 ສະພາບຈຸດພິເສດຂອງແຂວງຈຳປາສັກ

ແຂວງຈຳປາສັກເປັນແຂວງໜຶ່ງທີ່ມີຈຸດພິເສດທາງດ້ານເສດຖະກິດສັງຄົມ ເປັນແຂວງທີ່ມີປະຊາກອນ ຫຼາຍເປັນອັບດັບສາມ ແລະ ມີປະຊາກອນທັງໝົດ 694,023 ຄົນ ຍິງ 347,000 ຄົນ. ທິດຕາເວັນຕົກຕິດກັບລາຊະອານາຈັກໄທ, ທິດໃຕ້ຕິດກັບ ລາຊະອານາຈັກກຳປູເຈຍ, ທິດຕາເວັນອອກຕິດກັບແຂວງເຊກອງ ແລະ ທິດຕາເວັນຕົກສຽງເໜືອຕິດກັບແຂວງສາລະວັນ[39].

ໃນຊຸມປີຜ່ານມາ ອົງຄະນະພັກແຂວງຈຳປາສັກໄດ້ສຸມທຸກກຳລັງ ແລະ ເພີ່ມທະວີການຊີ້ນຳ-ນຳພາ ໃນທຸກຂົງເຂດວຽກງານຢ່າງຕັ້ງໜ້າໃນການພັດທະນາພື້ນຖານໂຄງລ່າງໃຫ້ມີຄວາມພັດທະນາຄຽງຄູ່ກັບການພັດທະນາສັງຄົມຊຶ່ງມັນໄດ້ສະແດງອອກຄື ລວມຍອດຜະລິດຕະພັນພາຍໃນສະເລ່ຍ 10,92%ຕໍ່ປີ ແລະ ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນໄດ້ 2.061$/ຄົນ/ປີ, ການເກັບລາຍຮັບເຂົ້າງົບປະມານປະຕິບັດໄດ້ບັນລຸຕາມຄາດໝາຍ ສ່ວນການຄຸ້ມຄອງລາຍຈ່າຍງົບປະມານສາມາດຮັບປະກັນໄດ້ລາຍຈ່າຍບໍລິຫານເປັນເງິນເດືອນລັດຖະກອນ ແລະ ລາຍຈ່າຍການລົງທຶນຂອງລັດ[40].

ສະພາບເສດຖະກິດໃນປັດຈຸບັນຂອງ ແຂວງຈຳປາສັກ ສ່ວນໃຫຍ່ຍັງມີລັກສະນະເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ, ພາກສ່ວນເສດຖະກິດເອກະເທດ, ເອກະຊົນຍັງກວມເອົາເປັນສ່ວນໃຫຍ່ ການຜະລິດເປັນສິນຄ້າຍັງອ່ອນນ້ອຍ ຈຶ່ງເປັນເຫດໃຫ້ມີຄວາມອ່ອນໄຫວຕໍ່ການປ່ຽນແປງຈາກພາຍນອກ ແລະ ການກະທົບຂອງເສດຖະກິດຕະຫຼາດ, ຄວາມຮູ້, ຄວາມສາມາດຂອງພະນັກງານ ແລະ ຊາວຜູ້ອອກແຮງງານຍັງມີຂອບເຂດຈຳກັດ ການເຂົ້າເຖິງການບໍລິການດ້ານການສຶກສາ, ສາທາລະນະສຸກ, ການຄົມມະນາຄົມຂົນສົ່ງ ແລະ ແຫຼ່ງທຶນຂອງປະຊາຊົນໃນເຂດຊົນນະບົດຫ່າງໄກສອກຫຼີກຍັງມີໜ້ອຍ. ຄວາມຈຳກັດດ້ານຊັບພະຍາກອນມະນຸດ ແລະ ແບບແຜນວິທີເຮັດວຽກຍັງບໍ່ທັນສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງການພັດທະນາຂອງແຂວງກໍ່ຄືປະເທດ ແລະ ການເຊື່ອມໂຍງກັບສາກົນ, ພັນທະຜູກພັນໃນຂະບວນການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນຍັງມີຫຼາຍຢ່າງແຕ່ຄວາມກຽມພ້ອມຍັງຈຳກັດໂດຍສະເພາະແມ່ນທາງດ້ານບຸກຄະລາກອນທັງດ້ານ

---

[38]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 91.

[39]ສູນສະຖິຕິແຫ່ງຊາດ, ປີ 2016.

[40]ແຜນພັດທະນາເສດຖະກິດສັງຄົມ 5ປີ ຄັ້ງທີ VIII (2016-2020) ຂອງແຂວງຈຳປາສັກ, ໜ້າ 55.

ປະລິມານ ແລະ ຄຸນນະພາບ, ດ້ານທຶນຮອນ ແລະ ລະບົບສະຖາບັນທີ່ເຂັ້ມແຂງ, ບັນຫາໜີ້ສິນຄຸມເຄືອມີອັດຕາສ່ວນສູງ ແລະ ຄວາມສາມາດແຂ່ງຂັນກັບສາກົນຍັງຕ່ຳ. ນອກຈາກນັ້ນ, ການນຳໃຊ້ຊັບພະຍາກອນທຳມະຊາດຍັງບໍ່ມີການຄຸ້ມຄອງທີ່ຮັດກຸມ ແລະ ບໍ່ມີປະສິດທິຜົນ ເປັນສາເຫດໃຫ້ເກີດມີຜົນກະທົບຈາກຄວາມບໍ່ແນ່ນອນຂອງການປ່ຽນແປງສະພາບດິນຟ້າອາກາດ ແລະ ສິ່ງແວດລ້ອມ ຊຶ່ງໄດ້ສ້າງຄວາມເສຍຫາຍຫຼາຍໃຫ້ແກ່ຊີວິດ ແລະ ຊັບສິນຂອງປະຊາຊົນເປັນຕົ້ນ ໄພແຫ້ງແລ້ງ, ນ້ຳຖ້ວມ, ລົມພະຍຸ, ພະຍາດລະບາດ ແລະ ອື່ນໆ[41].

**1.4.2 ມາດຕະຖານເຕັກນິກໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

ມາດຕະຖານການປູທາງເບຕົງຊຶ່ງຢູ່ ສປປ ລາວໃນຂອບເຂດທົ່ວປະເທດແມ່ນໄດ້ນຳໃຊ້ມາດຕະຖານຂອງ ກະຊວງໂຍທາທິການ ແລະ ຂົນສົ່ງເປັນຜູ້ວາງອອກອັນໜຶ່ງອັນດຽວໃນຂອບເຂດທົ່ວປະເທດ ແລະ ການອອກແບບກໍ່ສ້າງເສັ້ນທາງຢູ່ແຂວງຈຳປາສັກບໍລິສັດອອກແບບແມ່ນໄດ້ອອກແບບຕາມມາດຕະຖານເຕັກນິຂອງກະຊວງໂຍທາທິການ ແລະ ຂົນສົ່ງຊຶ່ງມາດຕະຖານດັ່ງກ່າວແມ່ນປະກອບມີ:

- ໂດຍທົ່ວໄປແມ່ນນຳໃຊ້ຊີມັງປ໋ອກແລນທຳມະດາ ເຖິງຢ່າງໃດກໍ່ຕາມຍ້ອນບັນຫາເລື່ອງການທົດຕົວ ແລະ ເວລາກໍ່ສ້າງຈຳກັດຈຶ່ງມີການພັດທະນາມາໃຊ້ຊີມັງທີ່ແຂງຕົວຊ້າ (ໃຊ້ຊີມັງເມັດໃຫຍ່ ຫຼື ປະສົມຊີມັງກັບສານລິດ)
- ປະລິມານຂອງຊີມັງທີ່ຕ້ອງການແມ່ນຢູ່ລະຫວ່າງ 3%-4%
- ການປູທາງເບຕົງຕ້ອງປູໃຫ້ໜາ ຄວາມໜາຕ່ຳສຸດແມ່ນ 150 ມມ ແລະ ໂດຍທົ່ວໄປແລ້ວຄວາມໜາຈະຕ້ອງຢູ່ລະຫວ່າງ 200-250 ມມ
- ການປູທາງດ້ວຍເບຕົງ ແມ່ນເໝາະສົມກັບທຸກປະເພດຂອງການສັນຈອນແຕ່ສຳລັບການສັນຈອນຂະໜາດໜັກຈະມີເສດຖະກິດດີກວ່າ
- ການປະສົມປູນຈະຕ້ອງປະສົມຢູ່ໃນໂຮງງານ ແລະ ການປູທາງດ້ວຍເບຕົງຈະຕ້ອງປູດ້ວຍກົນຈັກ
- ການອັດແໜ້ນ ແລະ ການປັບໜ້າທາງຈະຕ້ອງໃຫ້ສຳເລັດພາຍໃນເວລາບໍ່ເກີນ 2 ຊົ່ວໂມງ ພາຍຫຼັງປະສົມປູນສຳເລັດ ແລະ ອັດແໜ້ນຊັ້ນດິນສຳເລັດແລ້ວຕ້ອງໄດ້ປ້ອງກັນການລະເຫີຍຂອງນ້ຳບໍ່ໃຫ້ຊ້າກວ່າ 4ຊົ່ວໂມງພາຍຫຼັງທີ່ອັດແໜ້ນແລ້ວ ການປ້ອງກັນ ແລະ ການບົ່ມຈະຕ້ອງເຮັດດ້ວຍວິທີສີດຢາງກັນຊຶມໂດຍສະເພາະແມ່ນໃຫ້ຊີດຢາງ emulsion, ຫ້າມລົດໜັກແລ່ນຜ່ານ ພາຍໃນ 7 ວັນທຳອິດຫຼັງຈາກນັ້ນກໍ່ນຳໃຊ້ເສັ້ນທາງໄດ້ຢ່າງເປັນປົກກະຕິ[42].

[41] ແຜນພັດທະນາເສດຖະກິດສັງຄົມ 5ປີ ຄັ້ງທີ VIII (2016-2020) ຂອງແຂວງຈຳປາສັກ, ໜ້າ 67.

[42] ຄູ່ມືການອອກແບບເສັ້ນທາງ ກະຊວງໂຍທາທິການ ແລະ ຂົນສົ່ງ, ປີ 1996, ໜ້າ 149.

### 1.4.3 ອົງການທີ່ຮັບຜິດຊອບປະຕິບັດໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ເມື່ອໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໄດ້ຮັບການຮັບຮອງຈາກສະພາແຫ່ງຊາດເພື່ອເອົາເຂົ້າແຜນການລົງທຶນຂອງລັດປະຈຳປີແລ້ວຫຼັງຈາກນັ້ນກໍ່ໄດ້ມີການແບ່ງຄວາມຮັບຜິດຊອບໃຫ້ແກ່ຜູ້ປະຕິບັດໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຊຶ່ງປະກອບມີດັ່ງນີ້:

- ເຈົ້າຂອງໂຄງການໃນການກໍ່ເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ
- ຄະນະຮັບຜິດຊອບໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ
- ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ
- ທີ່ປຶກສາໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ
- ຜູ້ຮັບເໝົາໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ
- ຜູ້ສຳຫຼວດອອກແບໃນການກໍ່ສ້າງເສັ້ນຢູ່ເມືອງປາກເຊແຂວງຈຳປາສັກ

ລາຍລະອຽດຄວາມຮັບຜິດຊອບຜູ້ປະຕິບັດໂຄງການລົງທຶນຂອງລັດມີດັ່ງນີ້:

**1 ເຈົ້າຂອງໂຄງການໃນການກໍ່ເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ**

ເຈົ້າຂອງໂຄງການໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກແມ່ນພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກເປັນເຈົ້າຂອງໂຄງການ ແລະ ໄດ້ມີສິດ ແລະ ໜ້າທີ່ດັ່ງນີ້:

- ຄັດເລືອກ, ຈັດຕັ້ງການປະມູນ ແລະ ເຊັນສັນຍາກັບບໍລິສັດຮັບເໝົາກໍ່ສ້າງເພື່ອດຳເນີນການກໍ່ສ້າງ ແລະ ບໍລິສັດທີ່ປຶກສາເພື່ອຄວບຄຸມການກໍ່ສ້າງ
- ດັດແກ້ແບບແຜນຜັງ ໃນກໍລະນີມີຄວາມຈຳເປັນທາງດ້ານເສດຖະກິດເຕັກນິກ ແລະ ມີມູນຄ່າກໍ່ສ້າງໂຄງການຢ່າງສົມເຫດສົມຜົນ, ປະຢັດຕາມການສະເໜີຂອງບໍລິສັດຮັບເໝົາກໍ່ສ້າງ ແລະ ບໍລິສັດທີ່ປຶກສາ
- ຊຳລະຄ່າກໍ່ສ້າງ ໃຫ້ແກ່ບໍລິສັດຮັບເໝົາກໍ່ສ້າງ ແລະ ຄ່າຄວບຄຸມການກໍ່ສ້າງໃຫ້ແກ່ບໍລິສັດທີ່ປຶກສາຂອງແຕ່ລະໜ້າວຽກ ໂດຍສອດຄ່ອງກັບສັນຍາທີ່ໄດ້ຕົກລົງກັນ
- ຕິດຕາມ, ກວດກາ ການດຳເນີນງານຂອງບໍລິສັດຮັບເໝົາກໍ່ສ້າງ ແລະ ບໍລິສັດທີ່ປຶກສາໃນດ້ານຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ

- ແຈ້ງ, ແນະນຳ, ສັ່ງໂຈະຊົ່ວຄາວ ຫຼື ຢຸດເຊົາໂຄງການກໍ່ສ້າງຢ່າງຖາວອນ ໃນກໍລະນີທີ່ບໍລິສັດຮັບເໝົາກໍ່ສ້າງ ຫຼື ບໍລິສັດທີ່ປຶກສາ ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ ແລະ ຕາມຄຳແນະນຳຂອງຕົນ

- ເກັບມ້ຽນທຸກເອກະສານກ່ຽວກັບບົດວິພາກເສດຖະກິດເຕັກນິກ, ຜົນການວິໄຈດິນວັດສະດຸກໍ່ສ້າງ, ຊິ້ນສ່ວນໂຄງການທີ່ສຳຄັນ, ແຜນຜັງການກໍ່ສ້າງທີ່ໄດ້ຖືກຮັບຮອງກ່ອນການກໍ່ສ້າງ, ແຜນຜັງການກໍ່ສ້າງຕົວຈິງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ[43].

**2 ຄະນະຮັບຜິດຊອບໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ**

**ຄະນະຮັບຜິດຊອບໂຄງການແມ່ນປະກອບມາຈາກເຈົ້າຂອງໂຄງການກໍ່ຄືພະແນກ** ໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ, ຜູ້ຕ່າງໜ້າຈາກຂະແໜງການເງິນ, ຜູ້ຕ່າງໜ້າຈາກຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງຊຶ່ງຄະນະຮັບຜິດຊອບໂຄງການໄດ້ມີມີສິດ ແລະ ໜ້າທີ່ດັ່ງນີ້:

- ນຳໃຊ້ແຫຼ່ງທຶນຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອຈັດຕັ້ງປະຕິບັດໂຄງການໂດຍໄດ້ຮັບການເຫັນດີຈາກເຈົ້າຂອງໂຄງການ

- ປະສານສົມທົບກັບອົງການຈັດຕັ້ງຕ່າງໆຂອງລັດ ແລະ ສະໜອງບັນດາຂໍ້ມູນທີ່ກ່ຽວຂ້ອງໃຫ້ທີ່ປຶກສາ, ຜູ້ຮັບເໝົາ, ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການ

- ດຳເນີນການຕໍ່ສັດເລືອກທີ່ປຶກສາ, ຈັດຕັ້ງການປະມູນ, ເຈລະຈາ ແລະ ເຮັດສັນຍາກັບທີ່ປຶກສາ ແລະ ຜູ້ຮັບເໝົາໂຄງການ

- ຕິດຕາມ, ກວດກາ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນໃນຂະບວນການປະຕິບັດໂຄງການລົງທຶນຂອງລັດ

- ລາຍງານສະພາບການປະຕິບັດໂຄງການແຕ່ລະໄລຍະ ໃຫ້ເຈົ້າຂອງໂຄງການຢ່າງເປັນປະຈຳພ້ອມທັງສະເໜີບັນດາກົນໄກ, ມາດຕະການ ແລະ ວິທີການ ເພື່ອຮັບປະກັນການປະຕິບັດໂຄງງການຕາມກຳນົດເວລາ, ມີຄຸນະພາບ ປະຢັດລາຍຈ່າຍງົບປະມານການລົງທຶນທີ່ໄດ້ຮັບຮອງເອົາ

- ສະເໜີຍົກເລີກສັນຍາກັບທີ່ປຶກສາ ຫຼື ຜູ້ຮັບເໝົາ ໂຄງການໃນກໍລະນີທີ່ປຶກສາ ຫຼື ຜູ້ຮັບເໝົານັ້ນລະເມີດສັນຍາ ຊຶ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜົນປະໂຫຍດຂອງປະ ເທດຊາດ

---

[43] ກົດໝາຍວ່າດ້ວຍການກໍ່ສ້າງ, ສະບັບປີ 2009, ມາດຕາ 38.

- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ[44].

## 3 ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ

ຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງການແມ່ນບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງໂຄງການເພື່ອຄຸ້ມຄອງ, ນຳໃຊ້ ແລະ ບູລະນະຮັກສາໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຊຶ່ງໄດ້ມີສິດ ແລະ ໜ້າທີ່ໃນການບໍລິຫານ, ຄຸ້ມຄອງ ແລະ ນຳໃຊ້ໝາກຜົນຂອງໂຄງການລົງທຶນຂອງລັດ ຕາມການມອບໝາຍຂອງເຈົ້າຂອງໂຄງການ[45].

## 4 ທີ່ປຶກສາໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ

ໃນການລົງທຶນຂອງລັດຕໍ່ກັບການກໍ່ສ້າງເສັ້ນທາງຕ້ອງມີທີ່ປຶກສາໂຄງການ ທີ່ປຶກສາໂຄງການໄດ້ມາຈາກເຈົ້າຂອງໂຄງການ ຫຼື ຄະນະຮັບຜິດຊອບໂຄງການເປັນຜູ້ຈ້າງເພື່ອໃຫ້ຄຳເຫັນ ຫຼື ຄຳແນະນຳທາງດ້ານວິຊາການ ລວມທັງດ້ານບໍລິຫານຕ່າງໆໂດຍຜ່ານຮູບການປະມູນເອົາທີ່ປຶກສາໂຄງການ ແລະ ທີ່ປຶກສາໂຄງການມີສິດ ແລະ ໜ້າທີ່ດັ່ງນີ້:

- ກະກຽມເອກະສານການປະມູນ, ຮ່າງສັນຍາຮັບເໝົາກໍ່ສ້າງ ແລະ ເອກະສານອື່ນເພື່ອຮັບໃຊ້ໃຫ້ແກ່ການກໍ່ສ້າງ
- ກວດກາແຜນການ, ຄວບຄຸມການກໍ່ສ້າງ ແລະ ແນະນຳວິທີໃຫ້ຜູ້ຮັບເໝົາປະຕິບັດຢ່າງຖືກຕ້ອງຕາມແຜນຜັງ, ກຳນົດໝາຍ ແລະ ມາດຕະຖານເຕັກນິກກໍ່ສ້າງ
- ຕິດຕາມ, ກວດກາ ແລະ ສະຫຼຸບບໍລິມາດວຽກລະອຽດໃນແຕ່ລະໄລຍະ ເພື່ອຢັ້ງຢືນຄວາມຖືກຕ້ອງໃຫ້ແກ່ການຊຳລະຄ່າກໍ່ສ້າງ
- ລາຍງານຄວາມຄືບໜ້າຂອງໜ້າວຽກ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາອື່ນຂອງໂຄງການກໍ່ສ້າງໃຫ້ເຈົ້າຂອງໂຄງການເປັນແຕລະໄລຍະ
- ຕົກລົງຮັບຮອງດ້ານເຕັກນິກ ຫຼື ບໍ່ຮັບຮອງເອົາໜ້າວຽກໃດໜຶ່ງທີ່ບໍ່ໄດ້ມາດຕະຖານເຕັກນິກ ແລ້ວລາຍງານໃຫ້ເຈົ້າຂອງໂຄງການ
- ລວບລວມບົດວິພາກເສດຖະກິດ-ເຕັກນິກ, ຜົນການວິໄຈດິນ, ຜົນວິໄຈວັດສະດຸກໍ່ສ້າງ, ຊິ້ນສ່ວນໂຄງສ້າງທີ່ສຳຄັນ, ແຜນຜັງກໍ່ສ້າງ ທີ່ໄດ້ຖືກຮັບຮອງເບື້ອງຕົ້ນ, ແຜນຜັງກໍ່ສ້າງຕົວຈິງ, ສັນຍາຮັບເໝົາກໍ່ສ້າງ, ໃບປະເມີນລາຄາ, ບົດບັນທຶກ, ບົດລາຍງານຄວາມຄືບໜ້າໃນແຕ່ລະໄລຍະນັບແຕ່ມື້ເລີ່ມຕົ້ນຈົນຮອດມື້ສຳເລັດການກໍ່ສ້າງ ແລ້ວມອບໃຫ້ເຈົ້າຂອງໂຄງການ;

---

[44]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 60.

[45]ທາງກໍອ້າງ, ມາດຕາ 61.

- ໄດ້ຮັບຄ່າຄວບຄຸມການກໍ່ສ້າງຕາມມູນຄ່າທີ່ກຳນົດໄວ້ໃນສັນຍາ

- ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ[46].

**5 ຜູ້ຮັບເໝົາໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ**

ຜູ້ຮັບເໝົາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກແມ່ນບໍລິສັດຕັງຈະເລີນຊຶ່ງໄດ້ຊະນະໃນການປະມູນເອົາບໍລິສັດຮັບເໝົາກໍ່ສ້າງ ແລະ ຜູ້ຮັບເໝົາກໍ່ສ້າງມີສິດ ແລະ ພັນທະຕົ້ນຕໍດັ່ງນີ້:

- ສ້າງແຜນດຳເນີນງານນັບແຕ່ມື້ເລີ່ມຕົ້ນຈົນຮອດມື້ສຳເລັດ ແລ້ວສະເໜີຕໍ່ເຈົ້າຂອງໂຄງການ ແລະ ບໍລິສັດທີ່ປຶກສາເພື່ອຮັບຮອງ

- ດຳເນີນການກໍ່ສ້າງໃຫ້ຖືກຕ້ອງຕາມແບບແຜນຜັງ, ມາດຕະຖານເຕັກນິກ, ກຳນົດໝາຍເຕັກນິກ ແລະ ວັດສະດຸກໍ່ສ້າງ ຕາມສັນຍາຮັບເໝົາກໍ່ສ້າງ

- ແຈ້ງໃຫ້ບໍລິສັດທີ່ປຶກສາ ຮູ້ລ່ວງໜ້າກ່ອນລົງມືປະຕິບັດໜ້າວຽກທີ່ສຳຄັນ ເພື່ອຕິດຕາມກວດກາຕົວຈິງ

- ຄຸ້ມຄອງສະໜາມກໍ່ສ້າງ, ປະຕິບັດລະບຽບການ ທີ່ກ່ຽວກັບຄວາມປອດໄພໃຫ້ແທດເໝາະກັບປະເພດ, ຂະໜາດ ແລະ ລັກສະນະຂອງໂຄງການກໍ່ສ້າງ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ບໍ່ໃຫ້ມີຜົນກະທົບຕໍ່ຜູ້ຢູ່ອ້ອມຂ້າງ ແລະ ກໍ່ສ້າງໃນບໍລິເວນພື້ນທີ່ກໍ່ສ້າງ

- ສະໜອງຂໍ້ມູນ ແລະ ເອກະສານທີ່ຈຳເປັນໃຫ້ແກ່ເຈົ້າຂອງໂຄງການ ຫຼື ອົງການກວດ ກາວຽກງານກໍ່ສ້າງຕາມວັນເວລາທີ່ໄດ້ຕົກລົງກັນ

- ສະເໜີດັດແກ້ແບບແຜນຜັງ ແລະ ມູນຄ່າໂຄງການຢ່າງສົມເຫດສົມຜົນ

- ຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ເກີດຂຶ້ນຍ້ອນການບໍ່ປະຕິບັດສັນຍາ, ປະຕິບັດວຽກບໍ່ຖືກຕ້ອງຕາມແບບແຜນຜັງ, ມາດຖານເຕັກນິກການກໍ່ສ້າງ ແລະ ນຳໃຊ້ວັດສະດຸກໍ່ສ້າງທີ່ໄດ້ຕົກລົງກັນ ຫຼື ຍ້ອນການປະໝາດເລີ່ນເລີ້ໃນການປະຕິບັດວຽກງານ

- ເກັບຮັກສາ ແລະ ມອບບົດວິພາກເສດຖະກິດ-ເຕັກນິກ, ຜົນການວິໄຈ, ແຜນຜັງການກໍ່ສ້າງຕົວຈິງ, ເອກະສານດັດແກ້ການກໍ່ສ້າງ, ບົດບັນທຶກ, ບົດລາຍງານ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງໃຫ້ເຂົ້າຂອງໂຄງການ

- ໄດ້ຮັບຄ່າກໍ່ສ້າງຕາມມູນຄ່າທີ່ໄດ້ກຳນົດໄວ້ໃນສັນຍາຮັບເໝົາກໍ່ສ້າງ

- ປະຕິບັດສິດ ແລະ ພັນທະອື່ນຕາມທີ່ກົດໝາຍ ແລະ ລະບຽບການໄດ້ກຳນົດໄວ້[47].

---

[46]ກົດໝາຍວ່າດ້ວຍການກໍ່ສ້າງ, ສະບັບປີ 2009, ມາດຕາ 41.

[47]ຫາກໍອ້າງ, ມາດຕາ 40.

### 6 ຜູ້ສຳຫຼວດອອກແບບໂຄງການໃນການກໍ່ສ້າງເສັ້ນທາງຢູ່ເມືອງປາກເຊແຂວງຈຳປາສັກ

ຜູ້ສຳຫຼວດອອກແບບໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກແມ່ນໄດ້ມີການປະມູນເອົາບໍລິສັດສຳຫຼວດອອກແບບຕາມລະບຽບການທີ່ກ່ຽວຂ້ອງກັບການປະມູນຊຶ່ງບໍລິສັດທີ່ເປັນຜູ້ຊະນະການປະມູນທີ່ຈະມາເປັນຜູ້ສຳຫຼວດອອກແບບແມ່ນລັດວິສາຫະກິດ ວິສາວະກຳທີ່ປຶກສາຂົວ-ທາງເລກ 20 ຊຶ່ງຜູ້ສຳຫຼວດອອກແບບໄດ້ມີສິດ ແລະ ພັນທະດັ່ງນີ້[48]:

- ເກັບກຳ, ວິໄຈຂໍ້ມູນ ແລະ ວັດສະດຸກໍ່ສ້າງທີ່ຈຳເປັນຢ່າງຄົບຖ້ວນສຳລັບແຕ່ລະປະເພດໂຄງການກໍ່ສ້າງ ເພື່ອເປັນພື້ນຖານໃຫ້ແກ່ການອອກແບບ
- ອອກແບບແຜນຜັງ, ອອກແບບຄິດໄລ່ໂຄງສ້າງວິສາວະກຳ, ແຕ້ມຮູບພາກສ່ວນລະອຽດຂອງໂຄງສ້າງ
- ກຳນົດການນຳໃຊ້ວັດສະດຸກໍ່ສ້າງ, ປະເມີນມູນຄ່າກໍ່ສ້າງ ແລະ ສ້າງແຜນດຳເນີນງານລະອຽດ
- ພິຈາລະນາປັບປຸງຄືນແຜນຜັງ ທີ່ເຫັນວ່າບໍ່ເໝາະສົມຕາມການສະເໜີຂອງເຈົ້າຂອງໂຄງການ
- ຮັບຜິດຊອບຕໍ່ກົດໝາຍ ກ່ຽວກັບຜົນຂອງການສຳຫຼວດ, ອອກແບບ ແລະ ການວິໄຈວັດສະດຸກໍ່ສ້າງຂອງຕົນ[49].

### 1.4.4 ຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ

ພາຍຫຼັງທີ່ໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໄດ້ຮັບການຮັບຮອງ ແລະ ບັນຈຸເຂົ້າແຜນການລົງທຶນຂອງລັດປະຈຳປີແລ້ວ ເຈົ້າຂອງໂຄງການ ກໍ່ຄື ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ ກໍ່ເລີ່ມຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຊຶ່ງປະກອບດ້ວຍຂັ້ນຕອນຕ່າງໆດັ່ງລຸ່ມນີ້:

- ການປະມູນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ
- ການສ້າງສັນຍາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ
- ການດຳເນີນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

---

[48] ກົດໝາຍວ່າດ້ວຍການກໍ່ສ້າງ, ສະບັບປີ 2009, ມາດຕາ 39.

[49] ທາກຳອ້າງ, ມາດຕາ 39.

- ການຕິດຕາມກວດກາການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

- ການມອບຮັບ ແລະ ການນຳໃຊ້ໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

- ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂື້ນຈາກການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ຊຶ່ງຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1 ການປະມູນໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ເຈົ້າຂອງໂຄງການ ຫຼື ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກສ້າງສັນຍາປະຕິບັດໂຄງການລົງທຶນຂອງລັດກັບຜູ້ຮັບເໝົາ, ຜູ້ສະໜອງ ແລະ ຜູ້ໃຫ້ບໍລິການໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ[50].

ໃນການປະມູນໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຊຶ່ງຜູ້ເຂົ້າຮ່ວມແຂ່ງຂັນປະມູນໂຄງການລົງທຶນຂອງລັດປະກອບມີ ນິຕິບຸກຄົນ, ບໍລິສັດ ແລະວິສາຫະກິດ ທີ່ສ້າງຕັ້ງຂຶ້ນໃນ ສປປ ລາວ ໂດຍຖືກຕ້ອງຕາມກົດໝາຍ ແລະ ປະຕິບັດພັນທະດ້ານພາສີ-ອາກອນ ເປັນປົກກະຕິ ແລະ ຄົບຖ້ວນ ສຳລັບບໍລິສັດສາກົນທີ່ສົນ ໃຈ ແລະ ມີຄຸນວຸດທິເໝາະສົມ, ກໍ່ສາມາດເຂົ້າຮ່ວມປະມູນແຂ່ງຂັນໃນການຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ[51].

ກ. ຮູບການປະມູນໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ຮູບການ ການປະມູນມີຢູ່ 4 ຮູບການຄື:ການປະມູນແບບເປີດກວ້າງ, ການປະມູນແບບວົງແຄບ, ການປະມູນດ້ວຍການເຈລະຈາໂດຍກົງ ແລະ ການປະມູນສົມທຽບລາຄາ ຊຶ່ງລາຍລະອຽດແຕ່ລະຮູບການມີດັ່ງນີ້:

- ການປະມູນເປີດກວ້າງຕ້ອງດຳເນີນໄປຕາມຂັ້ນຕອນດັ່ງນີ້:

1) ເອກະສານປະມູນຕ້ອງປະກອບໃຫ້ຄົບຖ້ວນ ແລະ ຊັດເຈນ, ຕ້ອງລະບຸລາຍການສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະ ການບໍລິການ ພ້ອມທັງກຳນົດມາດຕະຖານເຕັກນິກ, ສະຖານທີ່ມອບ-ຮັບສິນຄ້າ, ເວລາສຳເລັດກິດຈະການ, ເງື່ອນໄຂການປະມູນ ແລະ ເງື່ອນໄຂຂອງສັນຍາ, ພ້ອມດ້ວຍມາດຕະຖານ ທີ່ນຳໃຊ້ໃນການປະເມີນການປະມູນ, ເພື່ອໃຫ້ຜູ້ເຂົ້າແຂ່ງຂັນປະມູນຮັບຊາບລ່ວງໜ້າຢ່າງຖືກຕ້ອງ

---

[50]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 49.

[51]ດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004, ມາດຕາ 5.

2) ການປະກາດປະມູນ ຕ້ອງໄດ້ປະກາດຜ່ານສື່ມວນຊົນ ຫຼື ທາງລັດຖະການຢ່າງກວ້າງຂວາງ, ກຳນົດເວລາກະກຽມ ແລະ ສົ່ງຊອງປະມູນຢ່າງໜ້ອຍ 45 ວັນຮອດວັນປິດຮັບເອກະສານປະມູນ

3) ເອກະສານປະມູນທັງໝົດຕ້ອງໄດ້ເປີດທັນທີໂລດພາຍຫຼັງປິດຮັບ, ຕາມວັນເວລາ ແລະ ສະຖານທີ່ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນໂດຍຊ້ອງໜ້າຜູ້ເຂົ້າຮ່ວມແຂ່ງ ຂັນປະມູນ ຫຼື ຜູ້ຕາງໜ້າ

4) ພາຍຫຼັງເປີດຊອງປະມູນແລ້ວ ຜູ້ເຂົ້າແຂ່ງຂັນປະມູນ ຈະບໍ່ສາມາດດັດແກ້ ຫຼື ເພີ່ມເຕີມເອກະສານ ແລະ ຂໍ້ສະເໜີໃດໆໄດ້ອີກ, ນອກຈາກກໍລະນີທີ່ຄະນະກຳມະການປະມູນຕ້ອງການຂໍ້ມູນເພີ່ມເຕີມເທົ່ານັ້ນ, ຂໍ້ມູນເພີ່ມເຕີມດັ່ງກ່າວນີ້ຕ້ອງໄດ້ແຈ້ງເປັນລາຍລັກອັກສອນຫາຜູ້ເຂົ້າແຂ່ງຂັນປະມູນເພື່ອຮັບຊາບນຳ

5) ການພິຈາລະນາ ແລະ ການປະເມີນການປະມູນ ຕ້ອງໄດ້ປະຕິບັດຕາມມາດຖານ ແລະ ເງື່ອນໄຂ ທີ່ໄດ້ລະບຸໄວ້ໃນເອກະສານປະມູນ, ການປະເມີນການປະມູນຕ້ອງໄດ້ຊີ້ແຈງໃຫ້ເຫັນຂໍ້ສະເໜີຕ່າງໆຂອງຜູ້ເຂົ້າແຂ່ງຂັນປະມູນທັງໝົດ ເພດຜົນສະເໜີເອົາຜູ້ຊະນະການປະມູນ ເພື່ອນຳສະເໜີຫາອົງການຈັດຕັ້ງປະຕິບັດໂຄງການຕົກລົງຮັບຮອງເອົາໂດຍສອດຄ່ອງກັບມາດຕາ 36 ຂອງດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບປີ 2004 ທີ່ວ່າ ພາຍຫຼັງການສຳເລັດການປະເມີນການປະມູນແລ້ວ ອົງການຈັດຕັ້ງໂຄງການຕ້ອງໄດ້ຈັດກອງປະຊຸມເພື່ອຮັບຮອງເອົາຜົນການປະມູນ ແລະ ປະກາດຜູ້ຊະນະການປະມູນ ໂດຍມອບໃຫ້ກະຊວງການເງິນເປັນຜູ້ກຳນົດຜູ້ທີ່ມີສິດພິ ຈາລະນາຮັບຮອງເອົາຜົນການປະມູນ ແລະ ປະກາດຜູ້ຊະນະການປະມູນ ໃນກໍລະນີບໍ່ສາມາດຮັບຮອງຜົນການປະມູນໄດ້ນັ້ນ ຜູ້ມີສິດພິຈາລະນາຮັບຮອງຜົນການປະມູນບໍ່ມີສິດດັດແປງ ຫຼື ແນະນຳການປະເມີນຂອງຄະນະກຳມະການປະມູນໄດ້ແຕ່ສາມາດສະເໜີໃຫ້ຄະນະກຳ ມະການທົບທວນຄືນເຖິງສາເຫດທີ່ເຮັດໃຫ້ການປະເມີນການປະມູນນັ້ນບໍ່ຖືກຮັບຮອງ ຖ້າຫາກການປະເມີນການປະມູນດັ່ງກ່າວບໍ່ສາມາດຕົກລົງຮັບຮອງໄດ້ ເຈົ້າຂອງໂຄງການຕ້ອງໄດ້ສົ່ງບົດປະເມີນດັ່ງກ່າວນີ້ຫາອົງການກວດກາລັດຖະບານເພື່ອສະເໜີໃຫ້ກວດກາຄືນໃໝ່.

6) ຖ້າຫາກເຫັນວ່າຜູ້ເຂົ້າແຂ່ງຂັນປະມູນທັງໝົດບໍ່ຕອບສະໜອງໄດ້ຕາມມາດຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃນເອກະສານປະມູນ, ຄະນະກຳມະການປະມູນສາມາດປະກາດຍົກເລີກການປະມູນ ແລະ ດຳເນີນການປະມູນຄືນໃໝ່ໄດ້ ໂດຍສອດຄ່ອງກັບ

ລະບຽບການຈັດຕັ້ງປະຕິບັດຕາມດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບປີ 2004[52].

- ການປະມູນວົງແຄບຕ້ອງດຳເນີນໂດຍສອດຄ່ອງຕາມກຳລະນີດັ່ງລຸ່ມນີ້:

ການປະມູນວົງແຄບແມ່ນການປະມູນສຳລັບມູນຄ່າຂອງສັນຍາບໍ່ສູງ ແລະ ຜູ້ສະໜອງສິນຄ້າ ຫຼືຜູ້ຮັບເໝົາມີຈຳນວນຈຳກັດ ຊຶ່ງຂັ້ນຕອນການປະມູນວົງແຄບແມ່ນດຳເນີນຄືກັບຂັ້ນຕອນການປະມູນເປີດກວ້າງ, ຍົກເວັ້ນຂໍ້ທີ 2ຄື: ບໍ່ມີການປະກາດປະມູນ ຜູ້ຈັດຊື້ ຫຼື ເຈົ້າຂອງໂຄງການຈະສົ່ງໜັງສືປະມູນຫາຜູ້ສະໜອງ ຫຼື ຜູ້ຮັບເໝົາທີ່ເຫັນວ່າມີປະສົບການ ແລະ ຮັບປະກັນໃນການແຂ່ງຂັນດ້ານລາຄາ ຫຼື ເຊີນທັງໝົດຖ້າວ່າຈຳນວນຜູ້ສະໜອງ ຫຼື ຜູ້ຮັບເໝົາມີຈຳນວນຈຳກັດ[53].

- ການປະມູນດ້ວຍການເຈລະຈາໂດຍກົງ ການທີ່ປະມູນດ້ວຍການເຈລະຈາໂດຍກົງສາ ມາດປະຕິບັດໄດ້ ໃນເມື່ອໄດ້ດຳເນີນການປະມູນເປີດກວ້າງ ແລະ ວົງແຄບແລ້ວແຕ່ບໍ່ສຳເລັດ ແລະ ຕ້ອງໄດ້ຮັບການອະນຸຍາດເປັນກໍລະນີສະເພາະ ຈາກກະຊວງ ຫຼື ອົງການຈັດຕັ້ງປະຕິບັດໂຄງການຂັ້ນຕ່າງໆ ໂດຍສອດຄ່ອງກັບເງື່ອນໄຂທີ່ລະບຸໄວ້ໃນລະບຽບການຈັດຕັ້ງປະຕິບັດຂອງດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບປີ 2004[54].

- ການປະມູນສົມທຽບລາຄາ ການປະມູນສົມທຽບລາຄາປະຕິບັດໄດ້ສຳລັບການປະມູນຈັດຊື້ສິນຄ້າທີ່ມີຈຳນວນບໍ່ຫຼາຍ ແລະ ມູນຄ່າບໍ່ສູງ, ການກໍ່ສ້າງ, ສ້ອມແປງຂະໜາດນ້ອຍ ແລະ ການບໍລິການທີ່ມີມູນຄ່າຕ່ຳ, ເຄື່ອງທີ່ຮັບໃຊ້ໃນວຽກບໍລິຫານປະຈຳວັນ ແລະ ເປັນປົກກະຕິເຊັ່ນ ອຸປະກອນ, ເຄື່ອງໃຊ້ຫ້ອງການ, ອຸປະກອນວິຊາສະເພາະທາງດ້ານເຕັກນິກ, ຮັບໃຊ້ຄົ້ນ ຄວ້າ ແລະ ທົດລອງວິທະຍາສາດ, ການປະມູນດ້ວຍຮູບການນີ້ຕ້ອງມີຜູ້ສະເໜີລາຄາເຂົ້າແຂ່ງຂັນຢ່າງໜ້ອຍຈາກ 3 ຜູ້ສະໜອງ ຫຼື ຜູ້ຮັບເໝົາ[55].

ຂ. ຂັ້ນຕອນການປະມູນໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

- ການຄັດເລືອກທີ່ປຶກສາ ຫຼື ຊ່ຽວຊານຕ້ອງດຳເນີນຕາມຂັ້ນຕອນດັ່ງນີ້[56]:

1) ຄັດເລືອກເບື້ອງຕົ້ນເອົາທີ່ປຶກສາ ຫຼື ຊ່ຽວຊານຢ່າງໜ້ອຍ 3 ບໍລິສັດ ຫຼື ນິຕິບຸກຄົນ, ຊຶ່ງຜູ້ຈັດຊື້ ຫຼື ເຈົ້າຂອງໂຄງການເຫັນວ່າມີຄວາມເໝາະສົມກວ່າໝູ່, ສົ່ງໜັງສືເຊີນ

---

[52]ດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004, ມາດຕາ 11.

[53]ທາກໍອ້າງ, ມາດຕາ 12.

[54]ທາກໍອ້າງ, ມາດຕາ 13.

[55]ທາກໍອ້າງ, ມາດຕາ 14.

[56]ທາກໍອ້າງ, ມາດຕາ 15.

ບໍລິສັດທີ່ປຶກສາ ຫຼື ຊ່ຽວຊານນັ້ນ ຕ້ອງລະບຸຈຸດປະສົງ, ເປົ້າໝາຍ, ໜ້າວຽກຂອງທີ່ປຶກສາ ຫຼື ຊ່ຽວຊານ ແລະ ເວລາສຳເລັດໜ້າວຽກ, ວັນເວລາ ແລະ ສະຖານທີ່ສົ່ງຂໍ້ສະເໜີ.

2) ການປະເມີນຂໍ້ສະເໜີຕ້ອງດຳເນີນຕາມສອງວິທີການພື້ນຖານຄື:

- ປະເມີນດ້ານຄຸນນະພາບ ແລະ ການເງິນພ້ອມກັນ
- ປະເມີນດ້ານຄຸນນະພາບກ່ອນ ແລ້ວຈຶ່ງປະເມີນດ້ານການເງິນຕາມຫຼັງ.

3) ສຳລັບການຄັດເລືອກເອົາທີ່ປຶກສາ ຫຼື ຊ່ຽວຊານ ດ້ວຍການເຈລະຈາໂດຍກົງຕ້ອງໄດ້ຮັບການອະນຸຍາດເປັນກໍລະນີສະເພາະຈາກກະຊວງ ຫຼື ອົງການຈັດຕັ້ງປະຕິບັດໂຄງການຂັ້ນຕ່າງໆຢ່າງເຄັ່ງຄັດ.

- ການປະເມີນດ້ານຄຸນນະວຸດທິຂອງຜູ້ເຂົ້າແຂ່ງຂັນປະມູນ

ສຳລັບໂຄງການຂະໜາດໃຫຍ່, ເຕັກນິກຄົບຊຸດ, ມູນຄ່າສູງ, ກ່ອນຈະດຳເນີນການປະມູນແຂ່ງຂັນຕ້ອງໄດ້ປະເມີນຄຸນນະວຸດທິຂອງຜູ້ເຂົ້າແຂ່ງຂັນປະມູນກ່ອນ ການປະເມີນດ້ານຄຸນນະວຸດທິຂອງຜູ້ເຂົ້າແຂ່ງຂັນປະມູນຕ້ອງດຳເນີນຕາາມຮູບການປະມູນເປີດກວ້າງໂດຍລະ ບຸມາດຕະຖານ ແລະ ເງື່ອນໄຂຕ່າງໆ ສຳລັບການປະເມີນ ແລະ ແຈ້ງໃຫ້ທຸກໆບໍລິສັດທີ່ມີຄວາມສົນໃຈຮັບຊາບ ແລະ ຍື່ນເອກະສານເພື່ອໃຫ້ຄະນະກຳມະການປະມູນປະເມີນດ້ານຄຸນນະວຸດທິ ບໍລິສັດໃດທີ່ຕອບສະໜອງຕາມມາດຖານ ແລະ ເງື່ອນໄຂທີ່ກຳນົດໄວ້ໃນເອກະສານການປະເມີນຄຸນນະວຸດທິ ຈຶ່ງເຊີນເຂົ້າຮ່ວມແຂ່ງຂັນການປະມູນດ້ານລາຄາ[57].

- ການປະມູນແບບສອງຂັ້ນຕອນ

ສຳລັບໂຄງການຂະໜາດໃຫຍ່, ມູນຄ່າສູງທີ່ອົງການຈັດຕັ້ງປະຕິບັດໂຄງການບໍ່ມີປະສົບການໃນການກຳນົດມາດຖານເຕັກນິກໄດ້ຊັດເຈນນັ້ນ ຫຼື ການອອກແບບລະອຽດໂຄງການມີມູນຄ່າສູງ ຕ້ອງໄດ້ດຳເນີນການປະມູນແບບສອງຂັ້ນຕອນ. ການປະເມີນແບບສອງຂັ້ນຕອນຕ້ອງປະຕິບັດດັ່ງນີ້ ສະເໜີໃຫ້ບໍລິສັດທີ່ມີຄວາມສົນໃຈຍື່ນຂໍ້ສະເໜີທາງດ້ານເຕັກນິກ ແລະ ວິທີການປະຕິບັດກ່ອນ, ເພື່ອປະເມີນ ແລະ ຮັບຮອງເອົາມາດຕະຖານເຕັກນິກທີ່ເໝາະສົມກ່ອນ, ຫຼັງຈາກນັ້ນຈຶ່ງດຳເນີນການປະມູນແຂ່ງຂັນດ້ານລາຄາ[58].

- ການປະມູນທີ່ນຳໃຊ້ທຶນຊ່ວຍເຫຼືອລ້າ ຫຼື ທຶນກູ້ຢືມຈາກຕ່າງປະເທດ

ຖ້າວ່າສັນຍາລະຫວ່າງລັດຖະບານກັບຜູ້ໃຫ້ທຶນໄດ້ລະບຸກ່ຽວກັບລະບຽບການປະມູນຈັດຊື້ເປັນການສະເພາະແມ່ນໃຫ້ປະຕິບັດຕາມສັນຍານັ້ນ ຫຼື ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນນັ້ນ. ໃນກໍລະນີບໍ່ໄດ້ກຳນົດ ຫຼື ບໍ່ມີຂໍ້ຜູກພັນອື່ນໆແມ່ນໃຫ້ປະຕິບັດຕາມຂໍ້ກຳນົດ

---

[57]ດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004, ມາດຕາ 16.

[58]ຫາກໍອ້າງ, ມາດຕາ 17.

ຂອງດຳ ລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບປີ 2004 ທີ່ກ່າວມາຂ້າງເທິງນີ້ຢ່າງຄົບຖ້ວນ.

- ຜົນການປະມູນມີຜົນໃຊ້ໄດ້

ການປະມູນມີຜົນໃຊ້ໄດ້ຢ່າງໜ້ອຍ 30 ວັນ ໂດຍເລີ່ມຈາກວັນທີ່ເປີດຊອງປະມູນ, ເພື່ອໃຫ້ຄະນະກຳມະການປະມູນມີເວລາພຽງພໍໃນການພິຈາລະນາ ແລະ ປະເມີນການປະມູນ ໂດຍໄດ້ຮັບການເຫັນດີຈາກກະຊວງການເງິນ. ຜູ້ຈັດຊື້ ຫຼື ເຈົ້າຂອງໂຄງການ ຕ້ອງສະເໜີເປັນລາຍລັກອັກສອນຫາຜູ້ເຂົ້າແຂ່ງຂັນປະມູນທັງໝົດ ເພື່ອຢັ້ງຢືນ ແລະ ຕໍ່ໄລຍະເວລາການປະມູນມີຜົນໃຊ້ໄດ້ຕື່ມ[59].

## 2 ການສ້າງສັນຍາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ການສ້າງສັນຍາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ເຈົ້າຂອງໂຄງການກໍ່ຄືພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ ສ້າງສັນຍາປະຕິບັດໂຄງການລົງທຶນຂອງລັດ ກັບຜູ້ຮັບເໝົາ, ຜູ້ສະໜອງ ແລະ ຜູ້ໃຫ້ບໍລິການໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ກ. ສັນຍາສຳຫຼວດ-ອອກແບບ ແລະ ຄຸ້ມຄອງການກໍ່ສ້າງ

ການເລືອກບໍລິສັດສຳຫຼວດອອກແບບ, ການຄັດເລືອກທີ່ປຶກສາການກໍ່ສ້າງໂດຍທົ່ວໄປແລ້ວຕ້ອງມີການປະມູນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ການລົງທຶນຂອງລັດ ໂດຍສະເພາະແມ່ນໂຄງການລົງທຶນຂອງລັດ[60].

ເຈົ້າຂອງໂຄງການຕ້ອງເຮັດສັນຍາສຳຫຼວດອອກແບບ, ຄວບຄຸມການກໍ່ສ້າງກັບບໍລິສັດທີ່ປຶກສາ, ສະຖາປະນິກ ຫຼື ວິສະວະກອນ ຕາມແຕ່ລະໜ້າວຽກຂອງໂຄງການ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ເພື່ອຕິດຕາມ, ກວດກາ ທາງດ້ານວິຊາການ ຢູ່ໃນຂະບວນການກໍ່ສ້າງຢ່າງເປັນປົກກະຕິ ແນໃສ່ຮັບປະກັນໃຫ້ໂຄງ ການກໍ່ສ້າງ ມີຄຸນນະພາບ ແລະ ຖືກຕ້ອງຕາມການອອກແບບ[61].

ສັນຍາການສຳຫຼວດອອກແບບ, ຄວບຄຸມການກໍ່ສ້າງມີເນື້ອໃນຕົ້ນຕໍ່ດັ່ງນີ້:

- ລາຍການໜ້າວຽກຂອງການສຳຫຼວດອອກແບບ, ຕິດຕາມ, ກວດກາ ແລະ ຄວບຄຸມການກໍ່ສ້າງ
- ຄ່າໃຊ້ຈ່າຍ ແລະ ວິທີການຈ່າຍ ໃຫ້ແກ່ຜູ້ສຳຫຼວດອອກແບບ, ຄວບຄຸມກໍ່ສ້າງ

---

[59] ດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004, ມາດຕາ 21.

[60] ກົດໝາຍວ່າດ້ວຍການກໍ່ສ້າງ, ສະບັບປີ 2009, ມາດຕາ 50.

[61] ທາກຳອ້າງ, ມາດຕາ 48.

- ໄລຍະເວລາ ແລະ ແຜນການສຳຫຼວດອອກແບບ, ຄວບຄຸມແຕ່ລະໜ້າວຽກຂອງໂຄງການກໍ່ສ້າງ

- ການລາຍງານຜົນຂອງການຕິດຕາມ, ກວດກາ ແລະ ຄວບຄຸມການກໍ່ສ້າງ

- ການປັບໃໝ ໃນກໍລະນີທີ່ມີການລະເມີດສັນຍາ ຫຼື ບໍ່ປະຕິບັດພັນທະຂອງຕົນຕາມກຳນົດເວລາ

- ການດັດແກ້, ການຍົກເລີກ ຫຼື ສິ້ນສຸດສັນຍາ
- ການແກ້ໄຂຂໍ້ຂັດແຍ່ງ
- ພາສາທີ່ໃຊ້ໃນສັນຍາ[62].

ຂ. ສັນຍາຮັບເໝົາການກໍ່ສ້າງ

ບໍລິສັດທີ່ຈະມາຮັບເໝົາກໍ່ສ້າງໂດຍທົ່ວໄປແລ້ວຕ້ອງມີການປະມູນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການລົງທຶນຂອງລັດ ໂດຍສະເພາະແມ່ນໂຄງການລົງທຶນຂອງລັດ[63].

ພາຍຫຼັງ ທີ່ມີການສຳຫຼວດອອກແບບແລ້ວ ກ່ອນການດຳເນີນການກໍ່ສ້າງ ເຈົ້າຂອງໂຄງການ ແລະ ບໍລິສັດຮັບເໝົາກໍ່ສ້າງ ຕ້ອງເຮັດສັນຍາຮບເໝົາກໍ່ສ້າງນຳກັນ ຕາມເງື່ອນໄຂທີ່ໄດ້ກຳນົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ[64].

ສັນຍາຮັບເໝົາກໍ່ສ້າງມີເນື້ອໃນຕົ້ນຕໍ່ດັ່ງນີ້:

- ເປົ້າໝາຍ, ລາຍການໜ້າວຽກຂອງໂຄງການກໍ່ສ້າງ
- ມູນຄ່າ ແລະ ວິທີການຊຳລະຄ່າ ກໍ່ສ້າງ
- ໄລຍະເວລາ ແລະ ຕາຕາລາງ ດຳເນີນໂຄງການກໍ່ສ້າງ
- ການຈັດຫາວັດສະດຸກໍ່ສ້າງ
- ການກວດກາ, ການຮັບຮອງ ແລະ ການມອບຮັບ ໂຄງການກໍ່ສ້າງ
- ການປັບໃໝ ໃນກໍລະນີທີ່ມີການລະເມີດສັນຍາ ຫຼື ບໍ່ປະຕິບັດພັນທະຂອງຕົນຕາມທີ່ກຳນົດເວລາ
- ໄລຍະເວລາ ແລະ ມູນຄ່າຄ້ຳປະກັນສິ່ງກໍ່ສ້າງ ຕາມລະບຽບກົດໝາຍ
- ການດັດແກ້, ການຍົກເລີກ ຫຼື ການສິ້ນສຸດສັນຍາ
- ການແກ້ໄຂຂໍ້ຂັດແຍ່ງ
- ພາສາທີ່ໃຊ້ໃນສັນຍາ

---

[62]ກົດໝາຍວ່າດ້ວຍການກໍ່ສ້າງ, ສະບັບປີ 2009, ມາດຕາ 49.

[63]ຫາກໍອ້າງ, ມາດຕາ 53.

[64]ຫາກໍອ້າງ, ມາດຕາ 51.

- ກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກກໍ່ສ້າງ[65].

**3 ການດໍາເນີນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ**

ໃນການດໍາເນີນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ ແມ່ນມີໄລຍະທາງ 18 ກິໂລແມັດ ຊຶ່ງເປັນເສັ້ນທາງຫຼັກຂອງແຂວງຈໍາປາສັກ ກໍ່ຄືເສັ້ນທາງເລກທີ 13 ໃນໄລຍະທາງດັ່ງກ່າວໄດ້ມີມູນຄ່າການກໍ່ສ້າງທັງໝົດແມ່ນ 686,727.87 ລ້ານກີບ[66] ແມ່ນຈະໃຊ້ເວລາຢູ່ 2,5 ປີ (30ເດືອນ) ນັບແຕ່ວັນທີ 23 ພຶດສະພາ 2013 ເປັນຕົ້ນໄປ ແລະ ໄລຍະເວລາຄໍ້າປະກັນການເປ່ເພແມ່ນ 1ປີ ນັບແຕ່ມື້ໄດ້ຮັບໃບມອບຮັບຊົ່ວຄາວຈາກເຈົ້າຂອງໂຄງການ[67]. ຊຶ່ງຈະດໍາເນີນການກໍ່ສ້າງຕາມການອອກແບບໜ້າທາງລົດແລ່ນປູດ້ວຍເບຕົງ ໜາ 23 ຊມ, ກວ້າງ 26.9 ມ ປະກອບດ້ວຍ 6 ເລັນ ສໍາລັບລົດໃຫຍ່ ແລະ 2 ເລນສໍາລັບລົດຈັກ, ສາມາດຮັບນໍ້າໜັກໄດ້ 11 ໂຕນ ພ້ອມນັ້ນຍັງປະກອບມີການກໍ່ສ້າງດອນກາງທາງ, ທາງຄົນຍ່າງ, ໄຟຟ້າເຍືອງທາງ, ລະບົບລະບາຍນໍ້າຕາມສອງຂ້າງທາງ ແລະ ວຽກອື່ນໆອີກຈໍານວນໜຶ່ງ[68].

**4 ການຕິດຕາມກວດກາການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ**

ການຕິດຕາມກວດກາການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກແມ່ນການຕິດຕາມກວດກາປົກກະຕິຕໍ່ຜູ້ປະຕິບັດໂຄງການເພື່ອໃຫ້ຮູ້, ເຫັນ ແລະ ກໍາໄດ້ສະພາບການ, ຂໍ້ມູນໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດນັບແຕ່ເລີ່ມຕົ້ນໂຄງການເປັນຕົ້ນໄປ[69].

ກ. ໄລຍະການຕິດຕາມກວດກາ

ໃນການຕິດຕາມກວດກາຈະແບ່ງອອກໄປສາມໄລຍະຄື[70]:

1) ຕິດຕາມກວດກາໄລຍະເລີ່ມຕົ້ນຂອງໂຄງການ

ເມື່ອໂຄງການໄດ້ຮັບການອະນຸມັດໃນໄລຍະເລີ່ມຕົ້ນໂຄງການ ຄະນະຕິດຕາມກວດກາຕ້ອງໄດ້ໃກ້ສິດຕິດແທດກັບເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ,

[65]ກົດໝາຍວ່າດ້ວຍການກໍ່ສ້າງ, ສະບັບປີ 2009, ມາດຕາ 52.

[66]ແຜນການລົງທຶນຂອງລັດສົກປີ 2015-2016 ຂອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ, ສະບັບປີ 2015, ໜ້າ 253.

[67]ສັນຍາລົງທຶນກໍ່ສ້າງ ແລະ ສໍາລະສະສາງໂຄງການກໍ່ສ້າງຂະຫຍາຍທາງເບຕົງຢູ່ເມືອງປາກເຊແຂວງຈໍາປາສັກ ລົງວັນທີ 23 ພຶດສະພາ 2013, ມາດຕາ 3.

[68]ທາກໍອ້າງ, ມາດຕາ 1.

[69]ດໍາລັດວ່າດ້ວຍການຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທົ່ວທີ, ສະບັບເລກທີ 01/ລບ, ລົງວັນທີ 6 ມັງກອນ 2015, ມາດຕາ 2.

[70]ທາກໍອ້າງ, ມາດຕາ 6.

ບໍລິສັດທີ່ປຶກສາໂຄງການ, ຜູ້ຮັບເໝົາໂຄງການ ແລະ ປະຊາຊົນໃນບໍລິເວນທີ່ໂຄງການຕັ້ງຢູ່ ເພື່ອຮູ້ ແລະ ກໍາໄດ້ສະພາບການ, ຂໍ້ມູນ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງກັບໂຄງການ ຊຶ່ງມີລາຍລະອຽດດັ່ງນີ້:

- ເກັບກໍາ ແລະ ສຶກສາຄົ້ນຄວ້າຂໍ້ມູນ, ຫຼັກຖານ ແລະ ເອກະສານຕ່າງໆ ກ່ຽວກັບໂຄງການລົງທຶນຂອງລັດຄື ບົດສະເໜີໂຄງການ ແລະ ສໍາຫຼວດ-ອອກແບບຄິດໄລ່, ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງສັງຄົມ ແລະ ທໍາມະຊາດ, ເອກະສານການປະມູນ, ສັນຍາຮັບເໝົາໂຄງການ ແລະ ເອກະສານສໍາຄັນອື່ນ

- ລົງສະຖານທີ່ກໍ່ສ້າງໂຄງການ, ເກັບກໍາ ແລະ ຄົ້ນຄວ້າບັນດາຂໍ້ມູນ, ຫຼັກຖານທາງສຽງ ແລະ ຄໍາສະເໜີທີ່ພົວພັນເຖິງໂຄງການລົງທຶນຂອງລັດ ຈາກການຈັດຕັ້ງທີ່ກ່ຽວຂ້ອງອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ດໍາລົງຊີວິດຢູ່ໃນຂອບເຂດທີ່ໂຄງການຕັ້ງຢູ່.

2) ຕິດຕາມກວດກາໄລຍະການຈັດຕັ້ງປະຕິບັດໂຄງການຕົວຈິງ

ເມື່ອໂຄງການໄດ້ເລີ່ມມີການຈັດຕັ້ງປະຕິບັດກໍ່ຈະມີການກວດກາ ແລະ ຮັບຮອງເອົາຜົນການປະມູນເອົາບໍລິສັດຕ່າງໆທີ່ຈະມາຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກຊຶ່ງລາຍລະອຽດໃນການຕິດຕາກວດກາການຈັດຕັ້ງປະຕິບັດໂຄງານຕົວຈິງມີດັ່ງນີ້:

- ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ

- ການຈັດຕັ້ງການປະມູນໂຄງການລົງທຶນຂອງລັດ ແລະ ການຮັບຮອງເອົາຜູ້ຊະນະການປະມູນ

- ການປະຕິບັດສັນຍາຮັບເໝົາໂຄງການ ແລະ ການດໍາເນີນງານຕົວຈິງແຕ່ລະໄລຍະຂອງຜູ້ປະຕິບັດໂຄງການເຊັ່ນ ການປະຕິບັດໜ້າທີ່, ຂອບເຂດສິດ ຂອງເຈົ້າຂອງໂຄງການຄະນະຮັບຜິດຊອບໂຄງການ, ທີ່ປຶກສາໂຄງການ ແລະ ຜູ້ຮັບເໝົາໂຄງງການ.

3) ການຕິດຕາມກວດກາໄລຍະສໍາເລັດ ແລະ ກະກຽມມອບຮັບໂຄງການ

ໃນໄລຍະນີ້ຄະນະຕິດຕາມກວດກາການລົງທຶນຂອງລັດຈະຕ້ອງໄດ້ຮ່ວມກັບເຈົ້າຂອງໂຄງການ ແລະ ຄະນະຮັບຜິດຊອບໂຄງການກວດກາການປະຕິບັດໂຄງການກ່ອນການມອບຮັບ ແລະ ການກວດກາໄລຍະດັ່ງກ່າວມີລາຍລະອຽດດັ່ງນີ້:

- ກວດກາຄືນບໍລິມາດວຽກ, ມາດຕະຖານເຕັກນິກ ແລະ ຄຸນນະພາບຂອງໂຄງການຕາມທີ່ໄດ້ກໍານົດໄວ້ໃນສັນຍາຮັບເໝົາໂຄງການ;

- ການຊໍາລະສະສາງມູນຄ່າໂຄງການ;

- ການປະຕິບັດພັນທະຕ່າງໆ.

໒. ຂັ້ນຕອນການດຳເນີນການຕິດຕາມກວດກາ

ຂັ້ນຕອນການດຳເນີນຕິດຕາມກວດກາການລົງທຶນຂອງລັດປະຕິບັດຕາມຫ້າຂັ້ນຕອນ ເຊັ່ນ ການຕົກລົງກວດກາ, ການກະກຽມການກວດກາ, ການດຳເນີນການກວດກາ, ການສະຫຼຸບຜົນຂອງການກວດກາ ແລະ ການລາຍງານຜົນຂອງການກວດກາ ຊຶ່ງລາຍລະອຽດແຕ່ລະຂັ້ນຕອນມີດັ່ງນີ້:

1) ການຕົກລົງກວດກາ

ຜູ້ຕົກລົງມີສິດໃຫ້ກວດກາຕາມແຕ່ກໍລະນີມີ ນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນ, ຫົວໜ້າພະແນກກວດກາລັດແຂວງ, ນະຄອນ, ຫົວໜ້າພະແນກການອ້ອມຂ້າງແຂວງ, ນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ, ຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ[71].

2) ການກະກຽມການກວດກາ

ການກະກຽມການກວດກາໃຫ້ປະຕິບັດດັ່ງນີ້[72]:

- ແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ

- ເກັບກຳຂໍ້ມູນ, ເອກະສານ, ສ້າງແຜນກວດກາໂດຍກຳນົດຈຸດປະສົງ, ເນື້ອໃນການກວດກາ, ຮ່າງຄຳຖາມເຈາະຈີ້ມ, ຮ່າງບົດບັນທຶກ, ກຽມໂຄງຮ່າງບົດລາຍງານເພື່ອໃຫ້ເປົ້າໝາຍລາຍງານ ແລະ ຕາຕາລາງເຄື່ອນໄຫວລະອຽດແຕ່ລະໄລຍະ

- ກະກຽມນິຕິກຳຕ່າງໆທີ່ພົວພັນກັບການກວດກາ, ງົບປະມານ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ທີ່ຈຳເປັນ

- ຈັດຕັ້ງງແນະນຳພະນັກງານທີ່ຈະລົງກວດກາໃຫ້ກຳແໜ້ນຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນຂອງການກວດກາ, ລະບຽບການພາຍໃນຂອງຄະນະກວດກາ ແລະ ແບ່ງຄວາມຮັບຜິດຊອບໃຫ້ແກ່ຄະນະກວດກາແຕ່ລະຄົນ

3) ການດຳເນີນ ແລະ ກຳນົດເວລາໃນການກວດກາ

ການກວດກາວຽກງານການລົງທຶນຕ້ອງດຳເນີນໄປຄື[73]:

- ແຈ້ງຂໍ້ຕົກລົງ ແລະ ແຜນກ່ຽວກັບການກວດກາ ຕໍ່ຫົວໜ້າອົງການຂອງເປົ້າໝາຍຖືກກວດກາ ແລ້ວເກັບກຳຂໍ້ມູນ ແລ້ວແຈ້ງຂໍ້ຕົກລົງ ແລະ ແຜນການໃຫ້ຜູ້ຖືກກວດກາຊາບກ່ອນການດຳເນີນການກວດກາເຈັດວັນ ເວັ້ນເສຍແຕ່ການກວດກາແບບກະທັນຫັນ

---

[71]ກົດໝາຍວ່າດ້ວຍການກວດກາລັດ, ສະບັບປີ 2007, ມາດຕາ 17.

[72]ທາກໍອ້າງ, ມາດຕາ 18.

[73]ທາກໍອ້າງ, ມາດຕາ 19.

- ດຳເນີນການກວດກາຕາມແຜນການ ເປັນຕົ້ນຮັບຟັງການລາຍງານຂອງເປົ້າໝາຍຖືກກວດກາ ພ້ອມທັງເຮັດບົດບັນທຶກການລາຍງານ ແລະ ການມອບຮັບເອກະສານ

- ລາຍງານ ແລະ ຂໍການຊີ້ນຳກ່ຽວກັບການດຳເນີນການກວດກາ ໃນແຕ່ລະໄລຍະຈາກຂັ້ນເທິງຂອງຕົນ

- ເຮັດບົດບັນທຶກການກວດກາ

ກຳນົດເວລາໃນການດຳເນີນການກວດກາມີດັ່ງນີ້[74]:

- ອົງການກວດກາລັດຖະບານບໍ່ໃຫ້ເກີນເກົ້າສິບວັນ ນັບແຕ່ມື້ດຳເນີນການກວດກາເປັນຕົ້ນໄປ, ຖ້າຫາກການກວດກາບໍ່ສຳເລັດກໍ່ສາມາດດຳເນີນຕໍ່ໄປຕື່ມອີກສາມສິບວັນ ໃນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນເປັນພິເສດຊຶ່ງພົວພັນເຖິງຫຼາຍຂະແໜງການ, ຫຼາຍທ້ອງຖິ່ນ ກໍ່ສາມາດຕໍ່ເວລາໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນໜຶ່ງຮ້ອຍແປດສິບວັນ

- ກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ, ພະແນກກວດກາລັດແຂວງ, ນະຄອນບໍ່ໃຫ້ເກີນຫົກສິບວັນ ນັບແຕ່ມື້ດຳເນີນການກວດກາເປັນຕົ້ນໄປ, ໃນກໍລະນີມີຄວາມຫຍຸ້ງຍາກສັບສົນກໍ່ສາມາດຕໍ່ເວລາໄດ້ຕື່ມອີກສາມສິບວັນ

- ຂະແໜງກວດກາລັດຂອງພະແນກອ້ອມຂ້າງແຂວງ, ນະຄອນ, ຫ້ອງການກວດກາລັດເມືອງ, ເທດສະບານບໍ່ໃຫ້ເກີນສາມສິບວັນ ນັບແຕ່ມື້ດຳເນີນການກວດກາເປັນຕົ້ນໄປ ໃນກໍລະນີມີຄວາມຫຍຸ້ງຍາກສັບສົນ ຫຼື ຢູ່ຫ່າງໄກສອກຫຼີກ ກໍ່ສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ສິບຫ້າວັນ.

4) ການສະຫຼຸບຜົນຂອງການກວດກາ

ການສະຫຼຸບຜົນຂອງການກວດຕ້ອງປະຕິບັດດັ່ງນີ້[75]:

- ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ, ບົດບັນທຶກທີ່ໄດ້ກວດກາແລ້ວມາເປັນບົດສະຫຼຸບຜົນຂອງການກວດກາ

- ຕີລາຄາ, ໄຈ້ແຍກໃຫ້ລະອຽດຈະແຈ້ງດ້ານດີ, ດ້ານອ່ອນ, ຄວາມຖືກ, ຄວາມຜິດຂອງເປົ້າໝາຍຖືກກວດກາ ລວມທັງສະເໜີມາດຕະການ ແລະ ວິທີການແກ້ໄຂຕາມລະບຽບກົດໝາຍ

- ຜ່ານຮ່າງບົດສະຫຼຸບພາຍໃນຄະນະກວດກາ ແລ້ວສົ່ງຮ່າງບົດສະຫຼຸບດັ່ງກ່າວໃຫ້ການນຳຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາເພື່ອມີຄຳເຫັນ ແລະ ຢັ້ງຢືນພາຍໃນກຳນົດສິບຫ້າວັນ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ

- ຄະນະກວດກາ, ຫົວໜ້າອົງການ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ລົງລາຍເຊັນໃສ່ບົດສະຫຼຸບ ເພື່ອຢັ້ງຢືນຜົນຂອງການກວດກາ

---

[74] ກົດໝາຍວ່າດ້ວຍການກວດກາລັດ, ສະບັບປີ 2007, ມາດຕາ 20.

[75] ທາກໍອ້າງ, ມາດຕາ 21.

5) ການລາຍງານຜົນຂອງການກວດກາ

ພາຍຫຼັງສຳເລັດການກວດກາແລ້ວ ຄະນະກວດກາຕ້ອງສົ່ງບົດສະຫຼຸບຜົນຂອງການກວດກາໃຫ້ຜູ້ອອກຂໍ້ຕົກລົງກ່ຽວກັບການກວດການັ້ນ ເພື່ອພິຈາລະນາ ກ່ຽວກັບການແກ້ໄຂຜົນຂອງການກວດກາຕາມລະບຽບກົດໝາຍ ແລະ ສົ່ງບົດລາຍງານຜົນຂອງການກວດກາໃຫ້ຂັ້ນເທິງຂອງຕົນ.[76]

**5 ການມອບຮັບ ແລະ ການນຳໃຊ້ໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນ ທາງໃນຕົວເມືອງປາກເຊແຂວງຈຳປາສັກ**

ເມື່ອໂຄງການປະຕິບັດສຳເລັດແລ້ວ ກ່ອນການມອບຮັບຢ່າງເປັນທາງການນັ້ນ ຕ້ອງໄດ້ມີການກວດກາຕາມມາດຕະຖານເຕັກນິກ, ປະລິມານ, ຄຸນນະພາບ ທີ່ກຳນົດໄວ້ໃນເອກະສານໂຄງການ ແລະ ສັນຍາ ພ້ອມທັງດຳເນີນການປະເມີນຜົນໂຄງການ, ແນະນຳການນຳໃຊ້ ຫຼື ມີການທົດລອງນຳໃຊ້ ໃນໄລຍະໜຶ່ງ ສຳລັບບາງໂຄງການ[77].

ສຳລັບການນຳໃຊ້ໂຄງການແມ່ນເຈົ້າຂອງໂຄງການຕ້ອງມອບໂຄງການໃຫ້ຜູ້ຄຸ້ມຄອງໂຄງການ ແລະ ນຳໃຊ້ໃຫ້ສອດຄ່ອງກັບວັດຖຸປະສົງຂອງໂຄງການ, ພາຍຫຼັງການນຳໃຊ້ໂຄງການໄດ້ສອງ-ຫ້າປີ ຕ້ອງໄດ້ມີການປະເມີນຜົນໂຄງການ ເພື່ອຖອດຖອນບົດຮຽນ ແລະ ປັບປຸງການສ້າງໂຄງການລົງທຶນຂອງລັດໃນອະນາຄົດ[78].

**6 ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນ ທາງໃນຕົວເມືອງປາກເຊແຂວງຈຳປາສັກ**

ພາຍຫຼັງທີ່ມີການຕິດຕາມ, ກວດການການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ເມື່ອຄະນະຕິດຕາມກວດກາເຫັນໄດ້ເຖິງຂໍ້ຂັດແຍ່ງທີ່ເກີດກໍ່ຈະມີການແກ້ໄຂຕາມລະບຽບກົດໝາຍທີ່ວາງໄວ້ຢ່າງເຄັ່ງຄັດຊຶ່ງວິທີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກຈະຕ້ອງດຳເນີນຕາມຮູບການດັ່ງນີ້:

1 ການປະນີປານອມ ຫຼື ການໄກ່ເກ່ຍ

ຖ້າຂໍ້ຂັດແຍ່ງທີ່ເກີດຂຶ້ນຊຶ່ງມີສ່ວນພົວພັນກ່ຽວກັບການລົງທຶນຂອງລັດແລ້ວ ຄູ່ກໍລະນີຕ້ອງພະຍາຍາມແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນດ້ວຍການປຶກສາຫາລື ແລະ ປະນີປະນອມກັນເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດນຳກັນ[79].

---

[76]ກົດໝາຍວ່າດ້ວຍການກວດກາລັດ, ສະບັບປີ 2007, ມາດຕາ 22.

[77]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 71.

[78]ທາກໍອ້າງ, ມາດຕາ 73.

[79]ທາກໍອ້າງ, ມາດຕາ 82.

2 ການແກ້ໄຂທາງບໍລິຫານ

ໃນການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະບໍລິຫານ ກ່ຽວກັບການລົງທຶນຂອງລັດເຊັ່ນ ບຸກຄົນ ແລະ ນິຕິບຸກຄົນ ທີ່ເຄື່ອນໄຫວລົງທຶນໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ ໃຫ້ຂະແໜງແຜນການ ແລະ ການລົງທຶນ ປະສານສົມທົບກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນຂັ້ນຂອງຕົນເປັນຜູ້ແກ້ໄຂ, ໃນກໍລະນີຫາກບໍ່ສາມາດແກ້ໄຂໄດ້ນັ້ນ ກໍມີສິດສະເໜີຕໍ່ອົງການຂັ້ນເທິງຖັດຕົນ ເປັນຜູ້ແກ້ໄຂ[80].

3 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ເມື່ອຄູ່ກໍລະນີບໍ່ສາມາດປະນີປານອມກັນ ຫຼື ໄກ່ເກ່ຍກັນຢູ່ຂະແໜງແຜນການ ແລະ ການລົງທຶນໄດ້ ກໍມີສິດຮ້ອງຂໍໃຫ້ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແກ້ໄຂຕາມກົດໝາຍ ແລະ ລະບຽບການບົນພື້ນຖານການເຫັນດີນຳກັນ[81]. ໃນການແກ້ໄຂຂໍ້ຂັດແຍ່ງຢູ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປະຈຳແຂວງຈຳປາສັກນັ້ນ, ຄະນະກຳມະການຕັດສິນກໍ່ຈະທຳການແກ້ໄຂຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສະບັບປີ 2010. ຖ້າຝ່າຍໃດຝ່າຍໜຶ່ງບໍ່ປະຕິບັດຕາມຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດັ່ງກ່າວ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງມີສິດຮ້ອງຂໍໃຫ້ສານບັງຄັບປະຕິບັດຜົນຂອງການຕັດຂໍ້ຂັດແຍ່ງນັ້ນໃຫ້.

4 ການຮ້ອງຟ້ອງຕໍ່ສານປະຊາຊົນ

ເມື່ອຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນບໍ່ໄດ້ຮັບຄວາມຍຸຕິທຳ ຫຼື ໄດ້ຮັບຄວາມເສຍຫາຍເນື່ອງຈາກການລົງທຶນຂອງລັດໃນໂຄງການໃດໜຶ່ງແລ້ວ ກໍ່ມີສິດຮ້ອງຟ້ອງຕໍ່ສານປະຊາຊົນທີ່ມີສິດອຳນາດ, ສານປະຊາຊົນທີ່ມີສິດອຳນາດໃນທີ່ນີ້ແມ່ນໝາຍເຖິງສານເຂດ ຫຼື ສານແຂວງຈຳປາສັກ ເພື່ອທຳການພິຈາລະນາຕັດສິນຕາມກົດໝາຍ ແລະ ລະບຽບການ[82]. ສຳລັບການຮ້ອງຟ້ອງຕໍ່ສານປະຊາຊົນນັ້ນປະກອບໄດ້ດ້ວຍ 10 ຂັ້ນຕອນຄື:

- ການຍື່ນຄຳຮ້ອງຟ້ອງ: ແມ່ນບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຮ້ອງຟ້ອງຕ້ອງຂຽນຄຳຮ້ອງຟ້ອງຕາມແບບພິມຂອງສານ ແລະ ປະກອບເອກະສານທີ່ກ່ຽວຂ້ອງແລ້ວນຳໄປຍື່ນຕໍ່ສານທີ່ມີສິດອຳນາດ
- ການຮັບຄຳຮ້ອງຟ້ອງ: ຄຳຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍສານຈະຕ້ອງໄດ້ຮັບພິຈາລະນາ
- ການເປີດກອງປະຊຸມສານ: ແມ່ນການເປີດປະຊຸມເພື່ອກຳນົດເຫັດການຂອງຄະດີພ້ອມກັນນັ້ນກໍ່ມີການດຳເນີນການກວດສອບເກັບກຳຂໍ້ມູນຫຼັກຖານຕ່າງໆທີ່ກ່ຽວຂ້ອງກັບຄະດີ

---

[80]ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015, ມາດຕາ 83.

[81]ທາກໍອ້າງ, ມາດຕາ 84.

[82]ທາກໍອ້າງ, ມາດຕາ 85.

- ການໄຕ່ສວນຄະດີ: ແມ່ນການດຳເນີນການແກ້ໄຂຄະດີໂດຍໄຕສວນບັນຫາທີ່ພາໃຫ້ມີຂໍ້ຂັດແຍ່ງ

- ການໂຕ້ຖຽງ: ແມ່ນການອອກຄຳຄິດເຫັນທີ່ມີລັກສະນະໂຕ້ແຍ່ງກັນລະຫວ່າງໂຈດກັບຈຳເລີຍ

- ການຖະແຫຼງຄະດີຂອງໄອຍະການ: ຜ່ານການໄຕ່ສວນ ເມື່ອເຫັນວ່າຂໍ້ມູນຫຼັກຖານຄົບຖ້ວນ, ຮອບດ້ານແລ້ວຄະນະສານກໍ່ຈະປິດການໂຕ້ຖຽງ ຖ້າຫາກພະນັກງານໄອຍະການປະຊາຊົນເຂົ້າຮ່ວມກໍ່ສະເໜີໃຫ້ມີຄຳເຫັນ ຫຼື ຖະແຫຼງກ່ຽວກັບຄະດີ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

- ການພິຈາລະນາຕັດສິນຄະດີ: ແມ່ນການປິດປະຊຸມສານຊົ່ວຄາວເພື່ອພິຈາລະນາຕັດສິນຄະດີໃນຫ້ອງປະຊຸມລັບ.

- ການປິດປະຊຸມສານ ແລະ ອ່ານຄຳຄໍຕັດສິນ: ປະທານຄະນະສານຈະເປັນຜູ້ອ່ານຄຳຕັດສິນ ແລະ ກ່າວປິດທີ່ປະຊຸມສານ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

**ອາລຸນນີ ພົງທະດີ** ສຶກສາຜົນກະທົບຂອງການສ້າງທາງໃນເຂດເທດສະບານທີ່ມີຕໍ່ເສດຖະກິດສັງຄົມ ແລະ ສິ່ງແວດລ້ອມໃນເຂດເທດສະບານແຂວງວຽງຈັນ ກໍລະນີສຶກສາ ເມືອງໂພນໂຮງ, ເມືອງວຽງຄຳ ແລະ ເມືອງແກ້ວອຸດົມ ແຂວງວຽງຈັນ ຊຶ່ງຈຸດປະສົງແມ່ນສຶກສາຜົນກະທົບຕໍ່ເສດຖະ ກິດ-ສັງຄົມ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈາກການສ້າງເສັ້ນທາງໃນເຂດເທດສະບານແຂວງວຽງຈັນ, ໃນການສຶກສາຄັ້ງນີ້ແມ່ນການສຶກສາແບບປະລິມານ ແລະ ນຳໃຊ້ສະຖິຕິແບບພັນລະນາ. ຜົນຂອງການສຶກສາເຫັນວ່າການສ້າງທາງໃນເຂດເທດສະບານແຂວງວຽງຈັນແມ່ນໄດ້ເຮັດໃຫ້ມີຄວາມສະດວກສະບາຍໃນການຄົມມະນາຄົມ ແລະ ຫຼຸດຜ່ອນການແອອັດການສັນຈອນໃນເຂດຕົວເມືອງ, ນຳເອົາຄວາມຈະເລີນດ້ານພື້ນຖານໂຄງລ່າງມາສູ່ເຂດເທດສະບານແຂວງວຽງ ໃນດ້ານທີ່ພາກສ່ວນກ່ຽວຂ້ອງຕ້ອງໄດ້ພິຈາລະນາ ແລະ ມີນະ ໂຍບາຍຮອງຮັບໃນການຂຸດຄົ້ນຊັບພະຍາກອນທ້ອງຖິ່ນທີ່ອາດຈະມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການເຂົ້າມາຢູ່ຂອງຊາວຕ່າງປະເທດເພື່ອເຮັດທຸລະກິດຄ້າຂາຍ ແລະ ຄົນໃນພື້ນທີ່ກໍ່ຈະມີການໃຫ້ເຊົ່າຕຶກອາຄານຕໍ່ຄົນຕ່າງປະເທດຫຼາຍຂຶ້ນຊຶ່ງມັນອາດຈະເຮັດໃຫ້ຄົນທ້ອງຖິ່ນບໍ່ມີວຽກເຮັດງານທຳ ແລະ ສຸດທ້າຍແມ່ນເລື່ອງອຸບັດຕິເຫດທີ່ຈະເກີດຂຶ້ນ[83].

[83]ອາລຸນນີ ພົງທະດີ, ຜົນກະທົບຂອງການສ້າງທາງໃນເຂດເທດສະບານທີ່ມີຕໍ່ເສດຖະກິດສັງຄົມ ແລະ ສິ່ງແວດລ້ອມໃນເຂດເທດສະບານແຂວງວຽງຈັນ ກໍລະນີສຶກສາ ເມືອງໂພນໂຮງ, ເມືອງວຽງຄຳ ແລະ ເມືອງ

**ພຸດທະສັກ ຮຸ່ງເຮືອງ** ສຶກສາຜົນກະທົບຂອງໂຄງການສ້າງເສັ້ນທາງ ທີ່ມີຜົນກະທົບຕໍ່ເສດຖະກິດຂອງບ້ານໜອງບົວທອງ ຈຸດປະສົງແມ່ນການສຶກສາກ່ຽວກັບສະພາບເສດຖະກິດໂດຍລວມຂອງບ້ານໜອງບົວທອງ ແລະ ສຶກສາກ່ຽວກັບຜົນກະທົບຂອງໂຄງການສ້າງເສັ້ນທາງທີ່ມີຜົນກະ ທົບຕໍ່ເສດຖະກິດຂອງບ້ານໜອງບົວທອງ ວິທີການສຶກສາໃນຄັ້ງນີ້ຈະສຶກສາຢູ່ສອງວິທີຄື ການສຶກສາແບບປະລິມານ ແລະ ແບບພັນລະນາ. ຜົນການສຶກສາເຫັນວ່າຜົນກະທົບຈາກການກໍ່ ສ້າງເສັ້ນທາງ ແມ່ນກວມເອົາ 9,3% ຂອງຈຳນວນເນື້ອທີ່ດິນທັງໝົດມີ 272,534 ຕາແມັດ ຊຶ່ງຄິດເປັນຈຳນວນເງິນໂດຍອີງຕາມລາຄາຂອງເນື້ອທີ່ດິນແຕ່ລະສະຖານທີ່ຂອງບ້ານໜອງບົວທອງ ແລະ ມີຈຳນວນເນື້ອທີ່ດິນເສຍຫາຍທັງໝົດແມ່ນ 25,342 ຕາແມັດ ລວມເປັນເງິນທັງໝົດ 19,787,250,000 ກີບ ຊຶ່ງຜົນກະທົບຕໍ່ປະຊາຊົນແມ່ນລັດຖະບານບໍ່ໄດ້ຊົດເຊີຍຄ່າເສຍຫາຍໃຫ້ປະຊາຊົນເພາະລັດຖະບານແມ່ນຂໍໃຫ້ຄົວເຮືອນທີ່ຖືກຜົນກະທົບຈາກໂຄງການປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ[84].

---

ແກ້ວອຸດົມ ແຂວງວຽງຈັນ, ວິທະຍານິພົນປະລິນຍາໂທ, ສາຂາເສດຖະສາດພັດທະນາ ແລະ ການວາງແຜນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ປີ 2014, ໜ້າ ii.

[84]ພຸດທະສັກ ຮຸ່ງເຮືອງ, ຜົນກະທົບຂອງໂຄງການສ້າງເສັ້ນທາງ ທີ່ມີຜົນກະທົບຕໍ່ເສດຖະກິດຂອງບ້ານໜອງບົວທອງ, ວິທະຍານິພົນປະລິນຍາໂທ, ສາຂາເສດຖະສາດພັດທະນາ ແລະ ການວາງແຜນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ປີ 2012, ໜ້າ ii.

# ພາກທີ III
# ວິທີ ແລະ ເຄື່ອງມືໃນການຄົ້ນຄວ້າ

## 1. ວິທີການສຶກສາ

ໃນການສຶກສາຄັ້ງນີ້ແມ່ນການສຶກສາກ່ຽວກັບ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ວິທີການສຶກສາແມ່ນຈະສຶກສາ ແບບປະສົມ: ຊຶ່ງການສຶກສາແບບຄຸນນະພາບແມ່ນການສັງລວມແນວຄວາມຄິດທິດສະດີ, ຫຼັກກົດໝາຍຕ່າງໆແລ້ວນຳມາວິເຄາະ ສ່ວນການສຶກສາແບບປະລິມານແມ່ນຈະນຳເອົາຂໍ້ມູນສະຖິຕິກ່ຽວກັບການລົງທຶນຂອງລັດມາສຶກສາເພື່ອເປັນການສະແດງຜົນຄົ້ນຄວ້າເປັນຕົວເລກ ແລະ ໄດ້ຈາກການຢາຍແບບສອບຖາມ ແລະ ນຳຜົນມາວິເຄາະ ແລະ ອ່ານຜົນ.

## 2. ຂອບເຂດດ້ານເນື້ອໃນ, ສະຖານທີ່ ແລະ ເວລາ

- ຂອບເຂດດ້ານເນື້ອໃນ: ການສຶກສາຄັ້ງນີ້ແມ່ນສຶກສາ ຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ , ສຶກສາບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ, ສຶກສາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ
- ຂອບເຂດດ້ານສະຖານທີ່: ແມ່ນຢູ່ໃນຂົງເຂດຂອງກະຊວງ ແຜນການ ແລະ ການລົງທຶນ, ພະແນກແຜນການ ແລະ ການລົງທຶນ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການເງິນ, ພະແນກຍຸຕິທຳ ແລະ ບຸກຄົນທີ່ມີສ່ວນກ່ຽວຂ້ອງສຳລັບການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ.
- ຂອບເຂດດ້ານເວລາ: ການສຶກສາຄັ້ງນີ້ຜູ້ສຶກສາຈະໄດ້ເອົາຂໍ້ມູນກ່ຽວກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກແຕ່ປີ 2014-2016.

## 3. ປະຊາກອນ ແລະ ກຸ່ມຕົວຢ່າງ

### 1 ປະຊາກອນ

ປະຊາກອນທີ່ໃຊ້ໃນຄັ້ງນີ້ ໄດ້ແກ່ຜູ້ບໍລິຫານ ແລະ ບຸກຄະລາກອນທີ່ຮັບຜິດຊອບວຽກງານການລົງທຶນຂອງລັດ ໃນກະຊວງ ແຜນການ ແລະ ການລົງທຶນ ຈຳນວນ 127 ທ່ານ, ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ 50 ທ່ານ, ພະແນກໂຍທາທິການ ແລະ ຂົນສົ່ງ 42 ທ່ານ, ພະແນກການເງິນ 27 ທ່ານ, ບໍລິສັດຮັບເໝົາກໍ່ສ້າງ 37 ທ່ານ.

## 2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ໄດ້ແກ່ຜູ້ບໍລິຫານ ແລະ ບຸກຄະລາກອນພາຍໃນ ກະຊວງແຜນການ ແລະ ການລົງທຶນ , ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ, ພະແນກການເງິນ, ບໍລິສັດຮັບເໝົາກໍ່ສ້າງ ໂດຍຄັດເລືອກຈາກປະຊາກອນທັງໝົດ 283 ທ່ານ ດ້ວຍການນຳໃຊ້ສູດຂອງທ່ານທາໂຣຢາມາເນ

ວິທີຄັດເລືອກເອົາແບບຕົວຢ່າງປະຊາກອນ ແມ່ນໃຊ້ແບບຮູ້ຈຳນວນປະຊາກອນທີ່ແນ່ນອນ ແລ້ວມານຳໃຊ້ສູນຄັດເລືອກຕົວຢ່າງປະຊາກອນຂອງທ່ານ Taro Yamane .

$$\mathbf{n} = \frac{N}{1+Ne^2}$$

n: ກຸ່ມຕົວຢ່າງທີ່ກຳນົດ

N: ແມ່ນຈຳນວນຂອງປະຊາກອນທັງໝົດ

e: ແມ່ນການຄາດເຄື່ອນຂອງກຸ່ມຕົວຢ່າງທີ່ຍອມຮັບໃນການສຶກສາຄັ້ງນີ້

➢ $$n = \frac{N}{1+Ne^2}$$

$$= \frac{283}{1+283(0,05)^2}$$

$= 165,7 \approx 166$ ທ່ານ

ຊຶ່ງລາຍລະອຽດຈຳນວນທີ່ຈະແຈກຢາຍແບບສອບຖາມໃຫ້ແຕ່ລະກຸ່ມຕົວຢ່າງມີດັ່ງນີ້:

| ລ/ດ | ກຸ່ມຕົວຢ່າງ | $\mathbf{n} = \frac{N}{1+Ne^2}$ |
|---|---|---|
| 1 | ກະຊວງແຜນການ ແລະ ການລົງທຶນ | $74,37 \approx 74$ |
| 2 | ພະແນກການເງິນ | $15,81 \approx 16$ |
| 3 | ພະແນກໂຍທາທທິການ ແລະ ຂົນສົ່ງ | $24,59 \approx 25$ |
| 4 | ພະແນກແຜນການ ແລະ ການລົງທຶນ | $29,28 \approx 29$ |
| 5 | ບໍລິສັດຮັບເໝົາກໍ່ສ້າງ | $21,66 \approx 22$ |
| ລວມ | | 166ທ່ານ |

## 4. ວິທີ ແລະ ເຄື່ອງມືເກັບກຳຂໍ້ມູນ

ວິທີເກັບກຳຂໍ້ມູນແມ່ນຊອກຮູ້ ແລະ ຮິບໂຮມເອົາເອກະສານຕ່າງໆ ທີ່ກ່ຽວຂ້ອງກັບເລື່ອງການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຊຶ່ງໄດ້ແກ່ບັນດານິຕິກຳຕ່າງໆເຊັ່ນ ເອກະສານກ່ຽວກັບພັກປະຊາຊົນປະຕິວັດລາວ, ກົດໝາຍ, ດຳລັດ, ປຶ້ມຄູ່ມື ແລະ ອື່ນໆ ນອກຈາກນີ້ຍັງມີປຶ້ມຂຽນແບບຮຽນ, ບົດວິທະຍານິພົນທີ່ກ່ຽວຂ້ອງ ແລ້ວນຳມາຈັດລຽງໃຫ້ເປັນລະບົບ, ລົງມືຂຽນ ແລະ ອະທິບາຍຕາມຫຼັກການ ແລະແບບການຂຽນທີ່ມະຫາວິທະຍາໄລແຫ່ງຊາດກຳນົດໄວ້.

ນອກຈາກນີ້ ຜູ້ຂຽນຍັງໄດ້ນຳ ແບບສອບຖາມ ຈຳນວນ 166 ຊຸດ ແລະ ແບບສຳພາດຈຳນວນ 5 ຊຸດ, ແລ້ວນຳເອົາໄປແຈກຢາຍໃຫ້ພະນັກງານທີ່ກ່ຽວຂ້ອງ, ນັກທຸລະກິດທີ່ກ່ຽວຂ້ອງກັບຫົວບົດວິທະຍານິພົນສະບັບນີ້ ແລ້ວເອົາຜົນສອບຖາມນຳມາວິນິໄສ ແລະວິເຄາະປະເດັນຕ່າງໆ ໂດຍແມ່ນຜູ້ສຶກສາຄົ້ນຄວ້າເອງເປັນຜູ້ລົງໄປເກັບກຳຂໍ້ມູນຢູ່ສະຖານທີ່ທີ່ກ່າວມາ ແລະ ນຳໃຊ້ອຸປະກອນຕ່າງໆຈຳນວນໜຶ່ງຊ່ວຍຕື່ມເຊັ່ນວ່າ ປຶ້ມບັນທຶກ, ບິກຂຽນ,ເຄື່ອງອັດສຽງ ແລະ ປຶ້ມບັນທຶກຈຳນວນໜຶ່ງ ເຊິ່ງຄະແນນຕາມທັດສະນະຄວາມຄິດເຫັນແບ່ງອອກເປັນ 5 ລະດັບ

ຄະແນນ 5 ສະແດງເຖິງລະດັບຫຼາຍສຸດ

ຄະແນນ 4 ສະແດງເຖິງລະດັບຫຼາຍ

ຄະແນນ 3 ສະແດງເຖິງລະດັບປານກາງ

ຄະແນນ 2 ສະແດງເຖິງລະດັບໜ້ອຍ

ຄະແນນ 1 ສະແດງເຖິງລະດັບໜ້ອຍສຸດ

## 5. ວິທີການວິເຄາະຂໍ້ມູນ ແລະ ແປຜົນ

ພາຍຫຼັງທີ່ເກັບກຳຂໍ້ມູນສຳເລັດລົງແລ້ວຜູ້ສຶກສາໄດ້ດຳເນີນການວິເຄາະຂໍ້ມູນທີ່ໄດ້ເກັບກຳມາໂດຍໃຊ້ໂປຣແກຼມຄອມພິວເຕີສຳເລັດຮູບ SPSS ຊຶ່ງມີລາຍລະອຽດດັ່ງນີ້:

- ຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງ ວິເຄາະຂໍ້ມູນໂດຍຫາຄວາມຖີ່ ແລະ ຄິດເປັນສ່ວນຮ້ອຍ
- ຂໍ້ມູນກ່ຽວກັບສະພາບການລົງທຶນຂອງລັດ ແລະ ການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຈະວິເຄາະຂໍ້ມູນໂດຍຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ

ພາຍຫຼັງທີ່ມີການວິເຄາະຂໍ້ມູນທີ່ກ່ຽວຂ້ອງເພື່ອຊອກຫາຜົນຂອງການສຶກສາ ແລະ ຊອກຫາຂໍ້ສະຫຼຸບຂອງການສຶກສາ ພ້ອມທັງມີຂໍ້ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ມີການປັງປຸງ ແລະ ແກ້ໄຂບັນຫານັ້ນໃນອະນາຄົດ

ການແປຜົນວິເຄາະຂໍ້ມູນທີ່ໄດ້ມາຈາກການວັດຄ່າລະດັບທັດສະນະຄວາມຄິດເຫັນຂອງຜູ້ຕອບແບບສອບຖາມ ຊຶ່ງໃຊ້ຄ່າສະເລ່ຍ Mean ແລະຄ່າຜັນປ່ຽນມາດຕະຖານ SD ຂອງຄະແນນເປັນໂຕຊີ້ວັດ ໂດຍກຳນົດເກນສຳລັບການແປຜົນເປັນ 5 ລະດັບດັ່ງນີ້:

ຄ່າສະເລ່ຍ 5.00-4.21 ສະແດງເຖິງລະດັບຫຼາຍສຸດ

ຄ່າສະເລ່ຍ 4.20-3.41 ສະແດງເຖິງລະດັບຫຼາຍ

ຄ່າສະເລ່ຍ 3.40-2.61 ສະແດງເຖິງລະດັບປານກາງ

ຄ່າສະເລ່ຍ 2.60-1.81 ສະແດງເຖິງລະດັບໜ້ອຍ

ຄ່າສະເລ່ຍ 1.80-1.00 ສະແດງເຖິງລະດັບໜ້ອຍສຸດ

# ພາກທີ IV

# ຜົນການຄົ້ນຄວ້າ

## 1. ຜົນຂອງການສຶກສາ

ການຄົ້ນຄວ້າຄັ້ງນີ້ລົງເລິກການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ໂດຍນຳໃຊ້ແບບສອບຖາມ ແລະ ແບບສຳພາດ ເພື່ອເກັບກຳຂໍ້ມູນຈາກກຸ່ມປະຊາກອນຕົວຢ່າງທີ່ກ່ຽວກັບການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຊຶ່ງການເກັບກຳຂໍ້ມູນຜູ້ຄົ້ນຄວ້າໄດ້ແຈກຢາຍແບບສອບຖາມຈຳນວນທັງໝົດ 166 ສະບັບ ແລະ ສາມາດເກັບໄດ້ 166 ແລະ ແບບສຳພາດ 5 ສະບັບສາມາດເກັບໄດ້ 5 ສະບັບ. ຜົນຂອງການວິເຄາະຊຶ່ງມີລາຍລະອຽດດັ່ງນີ້:

### 1.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

**ຕາຕາລາງທີ1 ຈຳນວນຜູ້ຕອບແບບສອບຖາມ ຈຳແນກຕາມເພດ**

| ເພດ | ຈຳນວນ | ສ່ວນຮ້ອຍ(%) |
|---|---|---|
| ຊາຍ | 106 | 63.9 |
| ຍິງ | 60 | 36.1 |
| **ລວມ** | **166** | **100** |

ຈາກຕາຕາລາງທີ1 ຜົນການວິເຄາະຂໍ້ມູນພົບວ່າ ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍເພດຊາຍ ຈຳນວນ 106 ຄົນ ຄິດເປັນສ່ວນຮ້ອຍ 63.9% ແລະ ເພດຍິງ 60 ຄົນຄິດເປັນສ່ວນຮ້ອຍ 36.1%.

ສາເຫດທີ່ຜູ້ຕອບແບບສອບຖາມເພດຊາຍຫຼາຍກ່ອນເພດຍິງແມ່ນເນື່ອງຈາກຜູ້ທີ່ຮັບຜິດຊອບວຽກລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງຢູ່ອົງການຂອງລັດ ແລະ ບໍລິສັດຮັບເໝົາກໍ່ສ້າງສ່ວນຫຼາຍເປັນເພດຊາຍເນື່ອງຈາກວຽກດັ່ງກ່າວເປັນວຽກທີ່ຕ້ອງການວິຊາການທີ່ມີຄວາມອົດທົນ, ມີການຕັດສິນໃຈສູງ ແລະ ເຂັ້ມແຂງສູງ.

**ຕາຕາລາງທີ2 ຈຳນວນຜູ້ຕອບແບບສອບຖາມ ຈຳແນກຕາມອາຍຸ**

| ອາຍຸ | ຈຳນວນ(166) | ສ່ວນຮ້ອຍ(%) |
|---|---|---|
| ອາຍຸ 18-25 | 14 | 8.4 |
| ອາຍຸ 26-35 | 44 | 26.5 |
| ອາຍຸ 36-45 | 65 | 39.2 |
| ອາຍຸ 46-55 | 35 | 21.1 |
| ອາຍຸ 56 ຂື້ນໄປ | 8 | 4.8 |
| **ລວມ** | **166** | **100** |

ຈາກຕາຕາລາງທີ2 ຜົນການວິເຄາະຂໍ້ມູນພົບວ່າ ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍມີອາຍຸ 36-45 ປີ ຈຳນວນ 65 ຄົນ ຄິດເປັນສ່ວນຮ້ອຍ 39.2%, ອາຍຸ 26-35 ປີ ຈຳນວນ 44 ຄົນ ຄິດເປັນສ່ວນຮ້ອຍ 26.5%, ອາຍຸ 46-55 ປີ ຈຳນວນ 35 ຄົນ ຄິດເປັນສ່ວນຮ້ອຍ 21.1%, ອາຍຸ 18-25 ປີ ຈຳນວນ 14 ຄົນ ຄິດເປັນສ່ວນຮ້ອຍ 8.4%, ອາຍຸ 56 ປີ ຂື້ນໄປ ຈຳນວນ 8 ຄົນ ຄິດເປັນສ່ວນຮ້ອຍ 4.8%.

ສາເຫດຜູ້ຕອບແບບສອບຖາມອາຍຸລະຫວ່າງ 36-45 ປີ ມີຈຳນວນຫຼາຍກ່ອນ ຍ້ອນວ່າໄວອາຍຸດັ່ງກ່າວແມ່ນຢູ່ໃນໄວອອກແຮງງານ ແລະ ໃນຍະຜ່ານມາພັກ ແລະ ລັດຖະບານມີນະໂຍບາຍກໍ່ສ້າງພະນັກງານໜຸ່ມນ້ອຍເພື່ອສືບທອດປ່ຽນແທນຈິ່ງເປັນສາເຫດເຮັດໃຫ້ຊ່ວງອາຍຸດັ່ງກ່າວສູງກວ່າຊ່ວງອາຍຸອື່ນ.

**ຕາຕາລາງທີ3 ຈຳນວນຜູ້ຕອບແບບສອງຖາມ ຈຳແນນລະດັບການສຶກສາ**

| **ລະດັບການສຶກສາ** | **ຈຳນວນ(166)** | **ເປນເຊັນ(%)** |
|---|---|---|
| ຊັ້ນສູງ | 11 | 6.6 |
| ປະລິນຍາຕີ | 118 | 71.1 |
| ປະລິນຍາໂທ | 33 | 19.9 |
| ປະລິນຍາເອກ | 4 | 2.4 |
| **ລວມ** | **166** | **100** |

ຈາກຕາຕາລາງທີ3 ຜົນການວິເຄາະຂໍ້ມູນພົບວ່າ ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນມີລະດັບການສຶກສາປະລິນຍາຕີຈຳນວນ 118 ຄົນ ຄິດເປັນສ່ວນຮ້ອຍ 71.1%,

ປະລິນຍາໂທຈຳນວນ 33 ຄົນ ຄິດເປັນສ່ວນຮ້ອຍ 19.9%, ຊັ້ນສູງຈຳນວນ 11 ຄົນ ຄິດເປັນສ່ວນຮ້ອຍ 6.6%, ປະລິນຍາເອກຈຳນວນ 4 ຄົນ ຄິດເປັນສ່ວນຮ້ອຍ 2.4%.

ສາເຫດທີ່ວຸດທິການສຶກສາລະດັບປະລິນຍາຕີມີຈຳນວນຫຼາຍເນື່ອງຈາກປັດຈຸບັນຊັບພະຍາກອນມະນຸດໄດ້ຮັບການພັດທະນາລະດັບການສຶກສາໃຫ້ສູງເພື່ອຮັບໃຊ້ວຽກງານໃຫ້ເໝາະສົມກັບສະພາບຄວາມເປັນຈິງ.

**ຕາຕະລາງທີ4 ຈຳນວນຜູ້ຕອບແບບສອບຖາມ ຈຳແນກຕາມສະຖານທີ່ຜູ້ຕອບແບບສອງຖາມສັງກັດຢູ່**

| ບ່ອນສັງກັດ | ຈຳນວນ(166) | ສ່ວນຮ້ອຍ(%) |
|---|---|---|
| ກະຊວງແຜນການ ແລະ ການລົງທຶນ | 74 | 44.6 |
| ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ | 29 | 17.5 |
| ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ | 25 | 15.1 |
| ພະແນກການເງິນ ແຂວງຈຳປາສັກ | 16 | 9.6 |
| ບໍລິສັດຮັບເໝົາກໍ່ສ້າງ | 22 | 13.3 |
| **ລວມ** | **166** | **100** |

ຈາກຕາຕະລາງທີ4 ຜົນການວິເຄາະຂໍ້ມູນພົບວ່າ ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນຢູ່ກະຊວງແຜນການ ແລະ ການລົງທຶນ ຈຳນວນ 74 ຄົນ ຄິດເປັນສ່ວນຮ້ອຍ 44.6%, ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ ຈຳນວນ 29 ຄົນ ຄິດເປັນສ່ວນຮ້ອຍ 17.5%, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ ຈຳນວນ 25 ຄົນ ຄິດເປັນສ່ວນຮ້ອຍ 15.1%, ພະແນກການເງິນ ແຂວງຈຳປາສັກ ຈຳນວນ 16 ຄົນ ຄິດເປັນສ່ວນຮ້ອຍ 9.6%, ບໍລິສັດຮັບເໝົາກໍ່ສ້າງ ຈຳນວນ 22 ຄົນ ຄິດເປັນສ່ວນຮ້ອຍ 13.3%.

**ຕາຕະລາງທີ5 ຈຳນວນຜູ້ຕອບແບບສອບຖາມ ຈຳແນກຕາມປະສົບການ**

| ປະສົບການເຮັດວຽກ | ຈຳນວນ(166) | ສ່ວນຮ້ອຍ(%) |
|---|---|---|
| ຕ່ຳກວ່າ 2 ປີ | 14 | 8.4 |
| 3-5 ປີ | 41 | 24.7 |
| 6-10 ປີ | 34 | 20.5 |
| 11-20 ປີ | 56 | 33.7 |
| 21 ຂຶ້ນໄປ | 21 | 12.7 |
| **ລວມ** | **166** | **100** |

ຈາກຕາຕະລາງທີ5 ຜົນການວິເຄາະຂໍ້ມູນພົບວ່າ ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍມີປະສົບການເຮັດວຽກລະຫວ່າງ 11-20 ຈຳນວນ 56 ຄົນ ຄິດເປັນສ່ວນຮ້ອຍ 33.7%,

ປະສົບການເຮັດວຽກ 3-5 ປີ ຈຳນວນ 41 ຄົນ ຄິດເປັນສ່ວນຮ້ອຍ 24.7%, ປະສົບການເຮັດວຽກລະ ຫວ່າງ 6-10 ປີ ຈຳນວນ 34 ຄົນ ຄິດເປັນສ່ວນຮ້ອຍ 20.5%, ປະສົບການເຮັດວຽກ 21 ປີຂຶ້ນໄປ ຈຳນວນ 21 ຄົນ ຄິດເປັນສ່ວນຮ້ອຍ 12.7%, ປະສົບການເຮັດວຽກຕ່ຳກວ່າ 2 ປີ ຈຳນວນ 14 ຄົນ ຄິດເປັນສ່ວນຮ້ອຍ 8.4%.

**ຕາຕາລາງທີ6 ຈຳນວນຜູ້ຕອບແບບສອບຖາມ ຈຳແນກຕາມຕຳແໜ່ງງານ**

| ຕຳແໜ່ງ | ຈຳນວນ (166) | ສ່ວນຮ້ອຍ(%) |
|---|---|---|
| ຄະນະກົມ | 6 | 3.6 |
| ຄະນະພະແນກ | 18 | 10.8 |
| ຫົວໜ້າຂະແໜງ | 30 | 18.1 |
| ວິຊາການ | 90 | 54.2 |
| ນັກທຸລະກິດ | 22 | 13.3 |
| **ລວມ** | **166** | **100** |

ຈາກຕາຕາລາງທີ6 ຜົນການວິເຄາະຂໍ້ມູນພົບວ່າ ຈຳນວນຜູ້ຕອບແບບສອບຖາມ ມີຕຳແໜ່ງເປັນຄະນະກົມຈຳນວນ 6 ທ່ານ ຄິດເປັນສ່ວນຮ້ອຍ 3.6%, ຕຳແໜ່ງຄະນະພະແນກຈຳນວນ 18 ທ່ານ ຄິດເປັນສ່ວນຮ້ອຍ 10.8%, ຕຳແໜ່ງຫົວໜ້າຂະແໜງຈຳນວນ 30 ທ່ານ ຄິດເປັນສ່ວນຮ້ອຍ 18.1%, ຕຳແໜ່ງວິຊາການ 90 ທ່ານ ຄິດເປັນສ່ວນຮ້ອຍ 54.2%, ນັກທຸລະກິດ 22 ທ່ານ ຄິດເປັນສ່ວນຮ້ອຍ 13.3%.

## 1.2 ຜົນການວິເຄາະກ່ຽວກັບການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

1.2.1 ຜົນການວິເຄາະດ້ານຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ

$\bar{X}$ ແມ່ນຄ່າສະເລ່ຍ ແລະ SD ແມ່ນຄ່າຜັນປ່ຽນມາດຕະຖານ

ຕາຕາລາງທີ7 ສະແດງ $\bar{X}$ ແລະ SD ດ້ານຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ

| ຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ຫຼັກການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງມີຈຳນວນພຽງພໍ | 3.80 | .847 | ຫຼາຍ |
| 2 | ຄວນປັບປຸງກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | 3.87 | .816 | ຫຼາຍ |
| 3 | ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບ ປຸງປີ 2015 ກຳນົດຂັ້ນຕອນການລົງທຶນຂອງລັດໄວ້ລະອຽດແລ້ວ | 3.67 | .883 | ຫຼາຍ |
| 4 | ຄວນສ້າງນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ເພີ່ມຕື່ມ | 3.67 | 1.047 | ຫຼາຍ |
| **ລວມ** | | **3.75** | **.658** | **ຫຼາຍ** |

ຕາຕາລາງທີ7 ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອງຖາມເຫັນວ່າມີຄວາມເໝາະສົມຫຼາຍທີ່ຄວນປັບປຸງກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ($\bar{X}$ =3.87, SD=.816), ຮອງລົງມາແມ່ນມີຄວາມຄິດເຫັນວ່າຫຼັກການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງມີຈຳນວນພຽງພໍຢູ່ໃນລະດັບຫຼາຍ ($\bar{X}$ =380, SD=.847) ແຕ່ທັດສະນະຄວາມຄິດເຫັນຂອງຜູ້ຕອບແບບສອບຖາມເຫັນວ່າຄວນສ້າງນິຕິກຳລຸ່ມກົດໝາຍທີ່ເປັນລະບຽບການສະເພາະ ຫຼື ຂໍ້ກຳນົດທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ເພີ່ມຕື່ມແມ່ນມີຄວາມເໝາະສົມຫຼາຍ ($\bar{X}$ =3.67, SD=1.047) ແລະ ຜູ້ຕອບແບບສອບຖາມສ່ວນຫຼາຍມີຄວາມຄິດເຫັນວ່າກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015 ກຳນົດຂັ້ນຕອນການລົງທຶນຂອງລັດໄວ້ລະອຽດແລ້ວ ແມ່ນມີຄວາມເໝາະສົມຫຼາຍ ($\bar{X}$ =3.67, SD=.883) ສະນັ້ນ, ຜູ້ຕອບແບບສອບຖາມສ່ວນໃຫຍ່ມີຄວາມຄິດເຫັນຄວນໃຫ້ສ້າງ ແລະ ປັບປຸງບັນດາຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນ

ການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກທີ່ບໍ່ໄດ້ກຳນົດໄວ້ນກົດໝາຍວ່າດ້ວຍລົງທຶນຂອງລັດຊຶ່ງເຫັນວ່າມີຄວາມເໝາະສົມຫຼາຍ ($\bar{X}$ =3.75, SD=.658).

1.2.2 ຜົນການວິເຄາະດ້ານບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ

**ຕາຕາລາງທີ8 ສະແດງຄ່າສະເລ່ຍ ແລະ SD ດ້ານບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການປະມູນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

| ດ້ານບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການປະມູນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ກ່ອນການປະມູນກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ໄດ້ມີການປະກາດໃຫ້ຫຼາຍບໍລິສັດເຂົ້າມາປະມູນ | 1.56 | .719 | ໜ້ອຍສຸດ |
| 2 | ການປະມູນໄດ້ເປີດກວ້າງໃຫ້ແກ່ຫຼາຍບໍລິສັດເຂົ້າຮ່ວມເພື່ອຮັບເໝົາໂຄງການ | 1.55 | .727 | ໜ້ອຍສຸດ |
| 3 | ບໍລິສັດທີ່ມີເງື່ອນໄຂທີ່ຈະຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຈຳນວນພຽງພໍແລ້ວ | 1.27 | .544 | ໜ້ອຍສຸດ |
| 4 | ການປະມູນແບບເປີດກວ້າງເປັນຮູບການທີ່ ເໝາະສົມສຸດໃນການປະມູນຫາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | 4.01 | 1.050 | ຫຼາຍ |
| 5 | ການປະມູນແບບການເຈລະຈາໂດຍກົງເປັນການປະມູນທີ່ເໝາະສົມສຸດໃນຮູບການການປະມູນເອົາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | 2.95 | 1.165 | ປານກາງ |
| 6 | ການປະມູນແບບແບບວົງແຄບເປັນການປະມູນທີ່ເໝາະສົມທີ່ສຸດສຳລັບການປະມູນຫາບໍລິສັດຜູ້ທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | 1.33 | .553 | ໜ້ອຍສຸດ |
| 7 | ການປະມູນແບບສົມທຽບລາຄາເປັນການປະມູນທີ່ເໝາະສົມສຸດໃນການປະມູນເອົາຜູ້ທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | 3.42 | 1.280 | ຫຼາຍ |

| | | | | |
|---|---|---|---|---|
| 8 | ຂັ້ນຕອນການປະເມີນ ຂອງການປະມູນເອົາບໍລິສັດຮັບເໝົາກໍ່ສ້າງແມ່ນດຳເນີນຖືກຕ້ອງຕາມລະບຽບການຢ່າງເຄັ່ງຄັດ | 1.66 | .841 | ໜ້ອຍສຸດ |
| 9 | ການປະມູນກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໄດ້ມີຫຼາຍພາກສ່ວນເຂົ້າຮ່ວມເປັນກຳມະການ | 1.66 | .814 | ໜ້ອຍສຸດ |
| 10 | ຄວນປັບປຸງລະບຽບກ່ຽວກັບຂັ້ນຕອນການປະມູນເພື່ອໃຫ້ມີຄວາມສະດວກ ແລະ ຊັດເຈນຂຶ້ນຕື່ມ | 3.91 | .893 | ຫຼາຍ |
| 11 | ການປະມູນເອົາບໍລິສັດຮັບເໝົາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໄດ້ປະຕິບັດລະບຽບກົດໝາຍກຳນົດແລ້ວ | 3.34 | 1.018 | ປານກາງ |
| **ລວມ** | | **2.42** | **.395** | **ໜ້ອຍ** |

ຈາດຕາຕາລາງທີ8 ຜົນການວິເຄາະຂໍ້ມູນພົບວ່າ ຖ້າເຈົ້າຂອງໂຄງການໄດ້ມີການປະມູນແບບເປີດກວ້າງກໍ່ຈະເປັນການທີ່ເໝາະຫຼາຍໃນການປະມູນຫາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ($\bar{X}$ =4.01, SD=1.050), ຮອງລົງມາແມ່ນຜູ້ຕອບແບບສອບຖາມເຫັນວ່າຄວນປັບປຸງລະບຽບກ່ຽວກັບຂັ້ນຕອນການປະມູນເພື່ອໃຫ້ມີຄວາມສະດວກ ແລະ ຊັດເຈນຂຶ້ນຕື່ມຢູ່ໃນລະດັບຫຼາຍ ($\bar{X}$ =3.91, SD=.893), ການປະມູນແບບສົມທຽບລາຄາຜູ້ຕອບແບບສອບຖາມກໍ່ເຫັນວ່າເປັນການປະມູນທີ່ເໝາະສົມຫຼາຍໃນການປະມູນເອົາຜູ້ທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ($\bar{X}$ =3.42, SD=1.280) ແລະ ຖ້າຫາກກ່ອນການປະມູນກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ບໍ່ໄດ້ມີການປະກາດໃຫ້ຫຼາຍບໍລິສັດເຂົ້າມາປະມູນກໍ່ຈະເຮັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກໄດ້ຮັບປະສິດທິຜົນໜ້ອຍສຸດ ($\bar{X}$ =1.56, SD=.719), ຜູ້ຕອບແບບສອບຖາມມີຄວາມເຫັນຢູ່ໃນລະດັບໜ້ອຍສຸດທີ່ວ່າບໍລິສັດທີ່ມີເງື່ອນໄຂທີ່ຈະຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກຍັງບໍ່ມີຄວາມພຽງພໍ ($\bar{X}$ =1.27, SD=.544) ດັ່ງນັ້ນ, ຜູ້ຕອບແບບສອບຖາມຈຶ່ງມີຄວາມຄິດເຫັນວ່າບໍລິສັດທີ່ມີເງື່ອນໄຂທີ່ຈະຈັດຕັ້ງປະຕິບັດການກໍ່ສ້າງດັ່ງກ່າວມີຄວາມພຽງພໍຢູ່ໃນລະດັບໜ້ອຍສຸດ , ກ່ອນການປະມູນເຈົ້າຂອງໂຄງການໄດ້ມີການປະກາດໃຫ້ບໍລິສັດຮັ[ເໝົາກໍ່ສ້າງຜູ້ທີ່ມີເງື່ອນໄຂເຂົ້າຮ່ວມການປະມູນຢູ່ໃນລະດັບໜ້ອຍ ແລະ ການປະເມີນການປະມູນເປັນໄປຕາມລະບຽບການຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມໃນລະດັບນ້ອຍ ($\bar{X}$ =2.42, SD=.395)

ຕາຕາລາງທີ9 ສະແດງຄ່າສະເລ່ຍ ແລະ SD ດ້ານບັນຫາທີ່ເກີດຂຶ້ນຈາກການສ້າງສັນຍາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ

| ບັນຫາທີ່ເກີດຂຶ້ນຈາກການສ້າງສັນຍາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ການສ້າງສັນຍາສໍາຫຼວດອອກແບບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກມີຄວາມຮັດກຸມສອດຄ່ອງກັບລະບຽບການ | 3.69 | .939 | ຫຼາຍ |
| 2 | ການສ້າງສັນຍາຮັບເໝົາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊມີຄວາມຮັດກຸມ | 3.52 | .906 | ຫຼາຍ |
| 3 | ສັນຍາສໍາຫຼວດ-ອອກແບບ ແລະ ຄຸ້ມຄອງການກໍ່ສ້າງມີຄວາມສໍາຄັນ | 3.95 | 1.024 | ຫຼາຍ |
| 4 | ບັນຫາທີ່ການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກບໍ່ໄດ້ຮັບປະສິດທິຜົນແມ່ນບໍ່ໄດ້ເກີດຂຶ້ນຈາກສັນຍາບໍ່ຮັດກຸມ | 3.45 | 1.087 | ຫຼາຍ |
| 5 | ສັນຍາທີ່ເຮັດຜ່ານມາກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກໄດ້ກໍານົດມາດຕະຖານເຕັກນິກລະອຽດແລ້ວ | 3.46 | 1.042 | ຫຼາຍ |
| 6 | ການສ້າງສັນຍາກ່ຽວກັບກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກຄວນກໍານົດການກວດກາໂຄງການໄວ້ | 3.77 | 1.001 | ຫຼາຍ |
| 7 | ທັງສອງຝ່າຍໄດ້ປະຕິບັດສັນຍາທີ່ໄດ້ກໍານົດໄວ້ແລ້ວ | 2.64 | 1.086 | ປານກາງ |
| **ລວມ** | | **3.50** | **.594** | **ຫຼາຍ** |

ຈາກຕາຕາລາງທີ9 ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອບຖາມເຫັນວ່າສັນຍາສໍາຫຼວດ-ອອກແບບ ແລະ ຄຸ້ມຄອງການກໍ່ສ້າງມີຄວາມສໍາຄັນຫຼາຍ ($\bar{X}$ =3.95, SD = 1.024), ຮອງລົງມາແມ່ນຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍທີ່ການສ້າງສັນຍາກ່ຽວກັບກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກຄວນກໍານົດການກວດກາໂຄງການເອົາໄວ້ໄວ້ ($\bar{X}$ =3.77, SD=1.001), ຜູ້ຕອບແບບສອບຖາມສ່ວນຫຼາຍເຫັນວ່າການສ້າງສັນຍາສໍາຫຼວດອອກແບບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກມີຄວາມຮັດກຸມສອດຄ່ອງກັບລະບຽບການຢູ່ໃນລະດັບຫຼາຍແລ້ວ ($\bar{X}$ =3.69, SD=.939),

ນອກຈາບັນຫາດັ່ງກ່າວຜູ້ຕອບແບບສອບຖາມໄດ້ມີຄວາມຄິດເຫັນໃນລະດັບຫຼາຍທີ່ວ່າບັນຫາທີ່ການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກບໍ່ໄດ້ຮັບປະສິດທິຜົນແມ່ນບໍ່ໄດ້ເກີດຂຶ້ນຈາກສັນຍາບໍ່ຮັດກຸມເນື່ອງຈາກເກີດຈາກບັນຫາອື່ນ ແລະ ຜູ້ຕອບແບບສອບຖາມມີຄວາມຄິດເຫັນໃນລະດັບປານກາງຕໍ່ການປະຕິບັດສັນຍາທັງສອງຝ່າຍກໍ່ຄືເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາກໍ່ສ້າງ ($\bar{X}$ =2.64, SD=.594) ຈາກຜົນການວິເຄາະບັນຫາທີ່ເກີດຈາກສັນຍາແມ່ນມີຄວາມຮັດກຸມ ແລະ ສອດຄ່ອງກັບລະບຽບການຢູ່ໃນລະດັບຫຼາຍ ($\bar{X}$ =3.50, SD=.593).

**ຕາຕາລາງທີ10 ສະແດງຄ່າສະເລ່ຍ ແລະ SD ດ້ານບັນຫາທີ່ເກີດຈາກການດຳເນີນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

| ບັນຫາທີ່ເກີດຈາກການດຳເນີນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ການດຳເນີນການກໍ່ສ້າງເສັ້ນທາງມີໄລຍະເວລາທີ່ສັ້ນເກີນໄປ | 3.38 | .844 | ປານກາງ |
| 2 | ການດຳເນີນການກໍ່ສ້າງເສັ້ນທາງໄດ້ເປັນໄປຕາມມາດຕະ ຖານເຕັກນິກແລ້ວ | 3.41 | .972 | ຫຼາຍ |
| 3 | ແຮງງານ ແລະ ອຸປະກອນທີ່ໃຊ້ເຂົ້າໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ແມ່ນມີພ້ອມ | 3.36 | 1.023 | ປານກາງ |
| 4 | ການກໍ່ສ້າງເສັ້ນທາງບໍ່ມີປະສິດທິພາບເປັນຍ້ອນການດຳເນີນການກໍ່ສ້າງ | 3.58 | .973 | ຫຼາຍ |
| 5 | ວິຊາການຜູ້ຊຳນານງານທີ່ຈະມາດຳເນີນການກໍ່ສ້າງມີຄວາມພຽງພໍໃນການດຳເນີນການກໍ່ສ້າງ | 3.55 | .931 | ຫຼາຍ |
| **ລວມ** | | **3.46** | **.616** | **ຫຼາຍ** |

ຈາກຕາຕາລາງທີ10 ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອບຖາມສ່ວນຫຼາຍເຫັນມີຄວາມຄິດເຫັນໃນລະດັບຫຼາຍວ່າການກໍ່ສ້າງເສັ້ນທາງບໍ່ມີປະສິດທິພາບເປັນຍ້ອນການດຳເນີນການກໍ່ສ້າງຊຶ່ງຢູ່ໃນຊ່ວງຮັບຜິດຊອບຂອງບໍລິສັດຮັບເໝົາກໍ່ສ້າງ ($\bar{X}$ =3.58, SD=.973), ວິຊາການຜູ້ຊຳນານງານທີ່ຈະມາດຳເນີນການກໍ່ສ້າງມີຄວາມພຽງພໍໃນການດຳເນີນການກໍ່ສ້າງ ຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມໃນລະດັບຫຼາຍ ($\bar{X}$ =3.55, SD=.931) ນອກຈາກນັ້ນ, ຍັງເຫັນວ່າໄລຍະເວລາໃນການດຳເນີນການກໍ່ສ້າງເສັ້ນທາງແມ່ນມີຄວາມເໝາະສົມໃນລະດັບປານກາງ ($\bar{X}$ =3.38, SD=.844) ແລະ ມີຄວາມຄິດເຫັນໃນ

ລະດັບປານກາງຕໍ່ຄວາມພຽງພໍຂອງແຮງງານ ແລະ ອຸປະກອນທີ່ໃຊ້ເຂົ້າໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ ($\bar{X}$ =3.36, SD=1.023).

**ຕາຕາລາງທີ11 ສະແດງຄ່າສະເລ່ຍ ແລະ SD ດ້ານບັນຫາທີ່ເກີດຂຶ້ນຈາກການຕິດຕາມກວດກາການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ**

| ບັນຫາທີ່ເກີດຂຶ້ນຈາກການຕິດຕາມກວດກາການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ການຕິດຕາມກວດກາເປັນບັນຫາທີ່ສໍາຄັນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ | 4.03 | .887 | ຫຼາຍ |
| 2 | ການຕິດຕາມກວດກາໄລຍະເລີ່ມຕົ້ນໂຄງການມີຄວາມສໍາຄັນ | 4.07 | .935 | ຫຼາຍ |
| 3 | ທີ່ຜ່ານມາການຕິດຕາມກວດກາໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແມ່ນຍັງປະຕິບັດບໍ່ໄດ້ທົ່ວເຖິງແລ້ວ | 3.52 | 1.099 | ຫຼາຍ |
| 4 | ການຕິດຕາມກວດກາບໍ່ໄດ້ຮັບໝາກຜົນເປັນຍ້ອນວັນເວລາທີ່ກໍານົດໃຫ້ສັ້ນເກີນໄປ | 3.39 | 1.094 | ປານກາງ |
| 5 | ປັດຈຸບັນວິຊາການທີ່ລົງໄປຕິດຕາມກວດກາໂຄງການກໍ່ ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາມີຄວາມພຽງພໍກັບຄວາມຕ້ອງການແລ້ວ | 3.38 | 1.042 | ປານກາງ |
| 6 | ຂັ້ນຕອນການຕິດຕາມກວດກາການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກມີຫຼາຍຂັ້ນຕອນເກີນໄປ | 3.39 | 1.030 | ປານກາງ |
| 7 | ຄວນປັບປຸງຂັ້ນຕອນການຕິດຕາມກວດກາໃຫ້ສັ້ນລົງ | 3.34 | 1.082 | ປານກາງ |
| 8 | ການລົງຕິດຕາມກວດການມາດຕະຖານເຕັກນິກຂອງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊຖືກຕ້ອງຕາມມາດຕະຖານທີ່ໄດ້ກໍານົດແລ້ວ | 3.51 | 1.060 | ຫຼາຍ |
| 9 | ພາຍຫຼັງທີ່ມີການກວດກາແລ້ວຜູ້ປະຕິບັດໂຄງການໄດ້ປະຕິບັດຜົນການກວດກາໄດ້ດີແລ້ວ | 3.43 | 1.013 | ຫຼາຍ |
| 10 | ການທີ່ຜູ້ປະຕິບັດໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈໍາປາສັກບໍ່ປະຕິບັດຕາມຜົນການກວດກາເປັນສາເຫດເຮັດໃຫ້ໂຄງການບໍ່ມີປະສິດທິຜົນ | 3.52 | .886 | ຫຼາຍ |
| **ລວມ** | | **3.56** | **.636** | **ຫຼາຍ** |

ຕາຕາລາງທີ11 ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອບຖາມເຫັນວ່າ ການຕິດຕາມກວດກາໄລຍະເລີ່ມຕົ້ນໂຄງການມີຄວາມສຳຄັນຫຼາຍເພາະເປັນການຕິດຕາມກວດກາກ່ອນການດຳເນີນການກໍ່ສ້າງ ($\bar{X}$ =4.07, SD=.935), ຮອງລົງມາເຫັນວຽກງານຕິດຕາມກວດກາເປັນບັນຫາທີ່ສຳຄັນຫຼາຍໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳສັກ ($\bar{X}$ =4.03, SD=.887) ແລະ ຜູ້ຕອບແບບສອບຖາມຍັງມີຄວາມເຫັນຢູ່ໃນລະດັບຫຼາຍວ່າໄລຍະເວລາຜ່ານມາການຕິດຕາມກວດກາໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແມ່ນຍັງປະຕິບັດບໍ່ທັນໄດ້ທົ່ວເຖິງ ($\bar{X}$ =3.52, SD=1.099) ນອກຈາກນັ້ນ ຜູ້ຕອບແບບສອບຖາມເຫັນວ່າປັດຈຸບັນວິຊາການທີ່ລົງໄປຕິດຕາມກວດກາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາມີຄວາມພຽງພໍກັບຄວາມຕ້ອງການໃນລະດັບປານກາງ ($\bar{X}$ =3.38, SD=1.042), ຂັ້ນຕອນການຕິດຕາມກວດກາການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຫຼາຍຂັ້ນຕອນເກີນໄປ ຊຶ່ງຜູ້ຕອບແບບສອບຖາມມີຄວາມຄິດເຫັນໃນລະດັບປານກາງ ($\bar{X}$ =3.39, SD=1.030) ແລະ ເຫັນດີໃຫ້ປັບປຸງຂັ້ນຕອນການຕິດຕາມກວດກາໃຫ້ສັ້ນລົງຢູ່ໃນລະດັບປານກາງ ($\bar{X}$ =3,34, SD=1.082) ຈາກຜົນການວິເຄາະຂ້າງເທິງເຫັນວ່າບັນຫາສ່ວນຫຼາຍແມ່ນການລົງຕິດຕາມກວດກາຍັງປະຕິບັດບໍ່ທັນໄດ້ທົ່ວເຖິງເປັນສາເຫດເຮັດໃຫ້ການລົງທຶນຂອງລັດບໍ່ໄດ້ຮັບປະສິດທິຜົນຫຼາຍ ($\bar{X}$ =3.56, SD=.636).

**ຕາຕາລາງທີ12 ສະແດງຄ່າສະເລ່ຍ ແລະ SD ດ້ານບັນຫາທີ່ເກີດຈາກການມອບຮັບ ແລະ ການນຳໃຊ້ໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

| ບັນຫາທີ່ເກີດຈາກການມອບຮັບ ແລະ ການນຳໃຊ້ໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ການມອບຮັບໂຄງການທີ່ປະຕິບັດສຳເລັດແລ້ວຄວນມອບຮັບພາຍຫຼັງທົດລອງໃຊ້ໂຄງການໄປໄລຍະໃດໜຶ່ງ | 3.80 | .916 | ຫຼາຍ |
| 2 | ການກວດການມາດຕະຖານເຕັກນິກກ່ອນການມອບຮັບໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຄວນເປັນສິ່ງທີ່ຕ້ອງປະຕິບັດກ່ອນການມອບຮັບໂຄງການ | 4.10 | .868 | ຫຼາຍ |
| 3 | ໄລຍະເວລາໃນການປະເມີນຜົນໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກກຳນົດ2-5ປີ ຕາມກົດໝາຍວ່າດ້ວຍລົງທຶນຂອງລັດສະບັບປີ 2015 ມີຄວາມເໝາະສົມ | 3.93 | .882 | ຫຼາຍ |

| | | | | |
|---|---|---|---|---|
| 4 | ພາຍຫຼັງນຳໃຊ້ໂຄງການ2-5 ປີແລ້ວມີການປັບປຸງໂຄງການແມ່ນຍ້ອນທາງບໍ່ໄດ້ມາດຕະຖານ | 3.77 | .989 | ຫຼາຍ |
| 5 | ຄວນສ້າງນິຕິກຳລຸ່ມກົດໝາຍກ່ຽວກັບພາຍຫຼັງການມອບຮັບໂຄງການກໍ່ສ້າງ | 3.86 | 1.046 | ຫຼາຍ |
| **ລວມ** | | **3.89** | **.689** | **ຫຼາຍ** |

ຈາກຕາຕາລາງທີ12 ຜົນການວິເຄາະພົບວ່າ ຜູ້ຕອບແບບສອບຖາມເຫັນວ່າກ່ອນການມອບຮັບໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງການກວດກາມາດຕະຖານເຕັກນິກແມ່ນມີຄວາມເໝາະສົມຫຼາຍທີ່ຈະເປັນສິ່ງທີ່ຕ້ອງປະຕິບັດກ່ອນການມອບຮັບໂຄງການ ($\bar{X}$ =4.10, SD=.868), ຮອງລົງມາພົບວ່າໄລຍະເວລາໃນການປະເມີນຜົນໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກກຳນົດ 2-5ປີ ຕາມກົດໝາຍວ່າດ້ວຍລົງທຶນຂອງລັດສະບັບປີ 2015 ມີຄວາມເໝາະສົມໃນລະດັບຫຼາຍ ($\bar{X}$ =3.93, SD=.882), ຜູ້ຕອບແບບສອບຖາມເຫັນດີວ່າມີຄວາມເໝາະສົມໃນລະດັບຫຼາຍໃນການສ້າງນິຕິກຳລຸ່ມກົດໝາຍກ່ຽວກັບພາຍຫຼັງການມອບຮັບໂຄງການກໍ່ສ້າງເພື່ອເປັນການມະເມີນ, ຄຸ້ມຄອງ ແລະ ນຳໃຊ້ໂຄງການກໍ່ສ້າງໃຫ້ໄດ້ປະສິດທິພາບ ($\bar{X}$ =3.86, SD=1.046), ການມອບຮັບໂຄງການທີ່ປະຕິບັດສຳເລັດແລ້ວຄວນມອບຮັບພາຍຫຼັງທົດລອງໃຊ້ໂຄງການໄປໄລຍະໃດໜຶ່ງຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມໃນລະດັບຫຼາຍ ($\bar{X}$ =3.80, SD=.916) ແລະ ນອກຈານັ້ນ, ຍັງເຫັນວ່າພາຍຫຼັງນຳໃຊ້ໂຄງການ2-5 ປີແລ້ວມີການປັບ ປຸງໂຄງການແມ່ນຍ້ອນທາງບໍ່ໄດ້ມາດຕະຖານເຫັນວ່າມີຄວາມເໝາະສົມໃນລະດັບຫຼາຍ ($\bar{X}$ =3.77, SD=.989) ໂດຍລວມແລ້ວຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍກ່ຽວກັບລະບຽບຫຼັກການຂອງກົດໝາຍກຳນົດ ກ່ຽວກັບເລື່ອງການມອບຮັບໂຄງການ ແລະ ເຫັນດີຫຼາຍໃຫ້ສ້າງນິຕິກຳລຸ່ມກົດໝາຍເປັນອັນສະເພາະຂອງການມອບຮັບໂຄງການລົງທຶນຂອງລັດ.

**ຕາຕາລາງທີ13 ສະແດງຄ່າສະເລ່ຍ ແລະ SD ດ້ານບັນຫາທີ່ເກີດຈາກການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການລົງທຶນອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

| ບັນຫາທີ່ເກີດຈາກການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການລົງທຶນອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ວິທີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຂອງລັດທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດມີຄວາມເໝາະສົມແລ້ວ | 3.87 | .916 | ຫຼາຍ |

| | | | | |
|---|---|---|---|---|
| 2 | ການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂດ້ວຍການປະນີປານອມ ຫຼື ການໄກ່ເກ່ຍ | 3.63 | 1.012 | ຫຼາຍ |
| 3 | ການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂທາງບໍລິຫານ | 3.38 | 1.164 | ປານກາງ |
| 4 | ການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ | 3.36 | 1.109 | ປານກາງ |
| 5 | ການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂໂດຍການຮ້ອງຟ້ອງຕໍ່ສານປະຊາຊົນ | 2.78 | 1.286 | ປານກາງ |
| **ລວມ** | | **3.40** | **.739** | **ຫຼາຍ** |

ຈາກຕາຕາລາງ13 ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອບຖາມມີຄວາມຄິດເຫັນກ່ຽວກັບວິທີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຂອງລັດທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດມີຄວາມເໝາະສົມໃນລະດັບຫຼາຍ ($\bar{X}$ =3.87, SD=.916), ຮອງລົງມາແມ່ນເຫັນດີຖ້າຫາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກຫາກມີຂໍ້ຂັດແຍ່ງເຫັນດີໃຫ້ແກ້ໄຂດ້ວຍການປະນີປານອມ ຫຼື ໄກ່ເກ່ຍແມ່ນມີຄວາມເໝາຍສົມຫຼາຍ ($\bar{X}$ =3.63, SD=1.012)ເນື່ອງຈາກເປັນວິທີສະດວກ ແລະ ຮັກສາໄດ້ເຖິງມິດຕະພາບຊຶ່ງກັນ ແລະ ກັນ. ນອກຈາກນັ້ນຍັງມີທັດສະນະຕໍ່ການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂໂດຍການຮ້ອງຟ້ອງຕໍ່ສານປະຊາຊົນ ຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມໃນລດັບປານກາງ ເພາະວິທີດັ່ງກ່າວເປັນວິທີການທີ່ຫຍຸ້ງຍາກ ແລະ ລະອຽດອ່ອນ ($\bar{X}$ =2.78, SD=1.286).

1.2.3 ຜົນການວິເຄາະດ້ານຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

**ຕາຕາລາງທີ14 ສະແດງຄ່າສະເລ່ຍ ແລະ SD ດ້ານຂໍ້ສະດວກໃນການຈັດຕັ້ງປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

| **ຂໍ້ສະດວກໃນການຈັດຕັ້ງປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | **ລະດັບຄວາມຄິດເຫັນ** | | |
|---|---|---|---|---|
| | | $\bar{X}$ | **SD** | **ຄວາມໝາຍ** |
| 1 | ການສະໜອງງົບປະມານຕາມການຈັດສັນງົບປະມານຂອງລັດຖະບານເປັນຂໍ້ສະດວກໃນການປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ | 3.84 | .991 | ຫຼາຍ |

| | | | | |
|---|---|---|---|---|
| 2 | ໂຄງການກໍ່ສ້າງດັ່ງກ່າວຈັດຢູ່ໃນບູລິມະສິດຂອງລັດຖະ ບານຈຶ່ງເປັນຂໍ້ສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດໄດ້ດໍາເນີນໄປຢ່າງວອງໄວ | 3.75 | .891 | ຫຼາຍ |
| 3 | ການກໍ່ສ້າງເສັ້ນທາງດັ່ງກ່າວເປັນການພັດທະນາແບບຍືນຍົງຕາມທິດການພັດທະນາແບບຍືນຍົງ ແລະ ສີຂຽວ ຈຶ່ງເຮັດໃຫ້ລັດຖະບານ ຈັດໂຄງການດັ່ງກ່າວເປັນບູລິມະສິດອັນດັບໜຶ່ງ | 3.92 | .791 | ຫຼາຍ |
| 4 | ຍ້ອນປະຊາຊົນໃຫ້ການຮ່ວມືເປັນຢ່າງດີໃນການອໍານວຍຄວາມສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດມີຂໍ້ສະດວກ | 3.94 | .799 | ຫຼາຍ |
| 5 | ຜູ້ປະຕິບັດໂຄງການເອົາໃຈໃສ່ໃນການປະຕິບັດໂຄງການກໍ່ສ້າງຕາມໜ້າທີ່ ທີ່ຖືກມອບໝາຍໃຫ້ຈຶ່ງເຮັດໃຫ້ການລົງ ທຶນຂອງລັດດໍາເນີນໄປຢ່າງສະດວກວ່ອງໄວ | 3.86 | .860 | ຫຼາຍ |
| 6 | ການເອົາໃຈໃສ່ຂອງຄະນະນໍາຂອງແຂວງກໍ່ຄືລັດຖະເປັນສາເຫດເຮັດໃຫ້ການລົງທຶນຂອງລັດດໍາເນີນໄປຢ່າງສະ ດວກ | 3.83 | .934 | ຫຼາຍ |
| **ລວມ** | | **3.86** | **.587** | **ຫຼາຍ** |

ຈາກຕາຕາລາງທີ13 ຜົນການວິເຄາະຂໍ້ມູນພົບວ່າ ທັດສະນະຂອງຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມໃນລະດັບຫຼາຍວ່າປະຊາຊົນໃຫ້ການຮ່ວມືເປັນຢ່າງດີໃນການອໍານວຍຄວາມສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດມີຂໍ້ສະດວກ ($\bar{X}$ =3.94, SD=.799), ຮອງລົງມາເຫັນວ່າການສະໜອງງົບປະມານຕາມການຈັດສັນງົບປະມານຂອງລັດຖະບານເປັນຂໍ້ສະດວກຫຼາຍໃນການປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ ($\bar{X}$ =3.84, SD=.991), ຜູ້ປະຕິບັດໂຄງການເອົາໃຈໃສ່ໃນການປະຕິບັດໂຄງການກໍ່ສ້າງຕາມໜ້າທີ່ ທີ່ຖືກມອບໝາຍໃຫ້ຈຶ່ງເຮັດໃຫ້ການລົງທຶນຂອງລັດດໍາເນີນໄປຢ່າງສະດວກວ່ອງໄວ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍ ($\bar{X}$ =3.86, SD=.860), ຜູ້ຕອບແບບສອບຖາມເຫັນດີຢູ່ໃນລະດັບຫຼາຍຕໍ່ການເອົາໃຈໃສ່ຂອງຄະນະນໍາຂອງແຂວງກໍ່ຄືລັດຖະເປັນສາເຫດເຮັດໃຫ້ການລົງທຶນຂອງລັດດໍາເນີນໄປຢ່າງສະດວກ ($\bar{X}$ =3.83, SD=.934), ໂຄງການກໍ່ສ້າງດັ່ງກ່າວຈັດຢູ່ໃນບູລິມະສິດຂອງລັດຖະບານຈຶ່ງເປັນຂໍ້ສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດໄດ້ດໍາເນີນໄປຢ່າງວອງໄວ ($\bar{X}$ =3.75, SD=.891).

ຕາຕາລາງທີ14 ສະແດງຄ່າສະເລ່ຍ ແລະ SD ດ້ານຂໍ້ຫຍຸ້ງຍາກໃນການປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

| | ຂໍ້ຫຍຸ້ງຍາກໃນການປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ສະພາບດິນຟ້າອາກາດບໍ່ອຳນວຍຄວາມສະດວກເກີດພະຍຸລົມຝົນຈຶ່ງເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນ ທາງພົບຄວາມຫຍຸ້ງຍາກ | 3.68 | 1.003 | ຫຼາຍ |
| 2 | ປະຊາຊົນບາງພື້ນທີ່ບໍ່ໃຫ້ການຮ່ວມມືຈຶ່ງເຮັດໃຫ້ການລົງ ທຶນຂອງລັດໃນການກໍ່ສ້າງເສັ້ນ ທາງພົບຄວາມຫຍຸ້ງຍາກ | 3.42 | .948 | ຫຼາຍ |
| 3 | ການປະສານງານລະຫວ່າງຂະແໜງການດ້ວຍກັນຍັງຂາດການປະສານງານທີ່ລະອຽດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນ ທາງພົບຄວາມຫຍຸ້ງຍາກ | 3.51 | .945 | ຫຼາຍ |
| 4 | ການການປະຕິບັດວິໄນການເງິນຍັງບໍ່ເຂັ້ມງວດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ | 3.63 | 1.040 | ຫຼາຍ |
| 5 | ຄວາມເຂົ້າໃຈແຈ້ງກ່ຽວກັບກົດໝາຍວ່າດ້ວຍການລົງທຶນຂອງລັດຂອງບັນດາຂະແໜງການທີ່ຮັບຜິດຊອບການລົງທຶນຂອງລັດຍັງບໍ່ທັນເລິກຊຶ້ງຈຶ່ງເຮັດໃຫ້ການລົງທຶນດັ່ງກ່າວພົບຄວາມຫຍຸ້ງຍາກ | 3.57 | .999 | ຫຼາຍ |
| **ລວມ** | | **3.56** | **.704** | **ຫຼາຍ** |

ຈາກຕາຕາລາງທີ14 ຜົນການວິເຄາະຂໍ້ມູນພົບວ່າ ທັດສະນະຂອງຜູ້ຕອບແບບສອບຖາມມີຄວາມຄິດເຫັນຢູ່ໃນລະດັບຫຼາຍກ່ຽວກັບສະພາບດິນຟ້າອາກາດບໍ່ອຳນວຍຄວາມສະດວກເກີດພະຍຸລົມຝົນຈຶ່ງເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ($\bar{X}$ =3.86, SD=1.003), ຮອງລົງມາເຫັນວ່າການປະຕິບັດວິໄນການເງິນຍັງບໍ່ເຂັ້ມງວດຂອງຫົວໜ່ວຍງົບປະມານຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກຫຼາຍ ($\bar{X}$ =3.63, SD=1.040), ຄວາມເຂົ້າໃຈແຈ້ງກ່ຽວກັບກົດໝາຍວ່າດ້ວຍການລົງທຶນຂອງລັດຂອງບັນດາຂະແໜງການທີ່ຮັບຜິດຊອບການລົງທຶນຂອງລັດຍັງບໍ່ທັນເລິກເຊິ່ງຈຶ່ງເຮັດໃຫ້ການລົງທຶນດັ່ງກ່າວພົບຄວາມຫຍຸ້ງຍາກ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍ($\bar{X}$ =3.57, SD=.999), ການປະສານງານລະຫວ່າງຂະແໜງການດ້ວຍກັນຍັງຂາດການປະສານງານທີ່ລະອຽດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບ

ຄວາມຫຍຸ້ງຍາກ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍ ($\bar{X}$ =3.51, SD=.945) ແລະ ປະຊາຊົນບາງພື້ນທີ່ໃນຂອບເຂດການກໍ່ສ້າງບໍ່ໃຫ້ການຮ່ວມມືຈຶ່ງເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ຜູ້ຕອບແບບສອບຖາມເຫັນດີເປັນສ່ວນຫຼາຍ ($\bar{X}$ =3.42, SD=.948).

**ຕາຕາລາງ15 ສະແດງຄ່າສະເລ່ຍ ແລະ SD ດ້ານວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ**

| ວິທີແກ້ຂັນບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ | | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\bar{X}$ | SD | ຄວາມໝາຍ |
| 1 | ການເຜີຍແຜ່ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃຫ້ບັນດາຂະແໜງການຮັບຮູ້ ແລະ ເຂົ້າໃຈຢ່າງເລິກຊຶ້ງເປັນວິທີແກ້ໄຂທີ່ດີ | 3.89 | .943 | ຫຼາຍ |
| 2 | ການປະມູນຄວນປະຕິບັດຕາມລະບຽບການຢ່າງເຄັ່ງຄັດເປັນວິທີແກ້ໄຂບັນຫາທີ່ດີ | 3.80 | .923 | ຫຼາຍ |
| 3 | ກ່ອນການປະມູນຄວນປະກາດເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂເຂົ້າມາຈັດຕັ້ງປະຕິບັດໂຄງການ ເພື່ອຫຼີກລ້ຽງບັນຫາທີ່ເກີດຂຶ້ນເປັນວິທີແກ້ໄຂບັນຫາທີ່ດີ | 3.78 | 1.033 | ຫຼາຍ |
| 4 | ຄວນເພີ່ມທະວີວຽກງານຕິດຕາມກວດກາໃຫ້ສູງຂຶ້ນເປັນວິທີແກ້ໄຂບັນຫາທີ່ດີ | 4.34 | .694 | ຫຼາຍສຸດ |
| 5 | ຕ້ອງຍົກສູງສະຕິໃຫ້ວິຊາການທີ່ເຮັດວຽກກວດກາເພື່ອມີຫຼັກໝັ້ນ ແລະ ມີຄວາມອຸ່ນອຽນທຸນຖ່ຽງເປັນວິທີແກ້ໄຂບັນ ຫາທີ່ | 4.30 | .855 | ຫຼາຍສຸດ |
| 6 | ທຸກໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊຄວນໄດ້ຮັບການຕິດຕາມກວດກາແຕ່ຫົວທີເປັນວິທີແກ້ໄຂບັນຫາທີ່ດີ | 4.27 | .840 | ຫຼາຍສຸດ |
| 7 | ການປະຕິບັດວິໄນການເງິນຢ່າງເຄັ່ງຄັດເປັນວິທີແກ້ໄຂບັນຫາທີ່ເກີດຈາກການລົງທຶນຂອງລັດ | 4.22 | .893 | ຫຼາຍສຸດ |
| 8 | ປະຕິບັດວິໄນຕໍ່ຜູ້ເຮັດຜິດວິໄນການເງິນ ເປັນວິທີແກ້ໄຂບັນຫາທີ່ດີ | 4.13 | .891 | ຫຼາຍ |
| 9 | ການປະຕິບັດວິໄນຕໍ່ຜູ້ປະເມີນໂຄງການທີ່ມີມູນຄ່າສູງເກີນຫົວໜ່ວຍລາຄາກາງ ເປັນວິທີແກ້ໄຂບັນຫາທີ່ດີ | 3.99 | .994 | ຫຼາຍ |
| **ລວມ** | | **4.08** | **.642** | **ຫຼາຍ** |

ຈາກຕາຕາລາງທີ15 ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອບຖາມມີທັດສະນະຕໍ່ດ້ານວິທີແກ້ຂັບບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກເຫັນດີໃນລະດັບຫຼາຍສຸດຄວນເພີ່ມທະວີວຽກງານຕິດຕາມກວດກາໃຫ້ສູງຂຶ້ນເປັນວິທີແກ້ໄຂບັນຫາທີ່ດີ ($\bar{X}$ =4.34, SD=.694), ຮອງລົງມາແມ່ນເຫັນດີໃຫ້ຍົກສູງສະຕິດ້ານຕ່າງໆໃຫ້ວິຊາການທີ່ເຮັດວຽກກວດກາເພື່ອມີຫຼັກໝັ້ນ ແລະ ມີຄວາມອຸ່ນອຽນທຸນທ່ຽງເປັນວິທີແກ້ໄຂບັນຫາທີ່ດີ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍສຸດ ($\bar{X}$ =4.30, SD=.855), ທຸກໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກຄວນໄດ້ຮັບການຕິດຕາມກວດກາແຕ່ຫົວທີເປັນວິທີແກ້ໄຂບັນຫາທີ່ດີຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍທີ່ສຸດ ($\bar{X}$ =4.27, SD=.840) ແລະນອກຈາກນັ້ນຍັງເຫັນວ່າຖ້າການປະມູນທາກໄດ້ປະຕິບັດຕາມລະບຽບການຢ່າງເຄັ່ງຄັດກໍ່ເປັນວິທີແກ້ໄຂບັນຫາທີ່ເໝາະສົມຫຼາຍ ($\bar{X}$ =3.80, SD=.923), ຜູ້ຕອບແບບສອບຖາມມີຄວາມຄິດເຫັນວ່າເໝາະສົມໃນລະດັບຫຼາຍກ່ອນການປະມູນຄວນປະກາດເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂເຂົ້າມາຈັດຕັ້ງປະຕິບັດໂຄງການ ເພື່ອຫຼີກລ້ຽງບັນຫາທີ່ເກີດຂຶ້ນເປັນວິທີແກ້ໄຂບັນຫາທີ່ດີ ($\bar{X}$ =3.78, SD=1.033) ຈາກຜົນການວິເຄາະໂດຍລວມຜູ້ຕອບແບບສອບຖາມສ່ວນຫຼາຍເຫັນດີໃນລະດັບຫຼາຍກ່ຽວກັບການປະກາດກ່ອນການປະມູນ ແລະ ການເພີ່ມທະວີວຽກງານກວດກາການລົງທຶນຂອງລັດຂຶ້ນເປັນວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດ ($\bar{X}$ =4.08, SD=.642).

## 1.3 ສັງລວມຄຳເຫັນຈາກການສຳພາດ

ຈາກການສຳພາດຮອງຫົວໜ້າພະແນກການເງິນ ແຂວງຈຳປາສັກ, ຮອງຫົວໜ້າພະແນກປະເມີນຜົນລົງທຶນລັດຂັ້ນທ້ອງຖິ່ນ ກົມປະປະເມີນຜົນ ກະຊວງແຜນການ ແລະ ການລົງທຶນ, ຫົວໜ້າຂະແໜງແຜນການ ພະແນກແຜນການ ແລະ ການລົງທຶນແຂວງຈຳປາສັກ, ຫົວໜ້າຂະແໜງຄຸ້ມຄອງທາງບົກ ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ ແລະ ຮອງອຳນວຍການບໍລິສັດຮັບເໝົາກໍ່ສ້າງ ສາມາດສັງລວມເປັນໝວດຄຳເຫັນດັ່ງນີ້:

ຜູ້ໃຫ້ສຳພາດເຫັນວ່າ "ຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງເຫັນວ່າມີຄວາມເໝາະສົມແລ້ວ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດກໍ່ຄືແຂວງຈຳປາສັກໃນປັດຈຸບັນ ໂດຍສະເພາະທຸກການລົງທຶນຂອງລັດແມ່ນອີງໃສ່ກົດໝາຍວ່າດ້ວຍລົງທຶນຂອງລັດ ສະບັບປັບປຸງປີ 2015 ເປັນຫຼັກ ຊຶ່ງການກຳນົດລະບຽບຫຼັກການ ແລະ ຂັ້ນຕອນການລົງທຶນໄວ້ລະອຽດພໍສົມຄວນແລ້ວ ແລະ ຜູ້ໃຫ້ສຳພາດຍັງມີທັດສະນະວ່າ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປີ 2015 ຍັງມີຄວາມເໝາະສົມໃນສະພາບທີ່ປະເທດກຳລັງພັດທະນາ ໂດຍສະເພາະ ແມ່ນບັນດາຂັ້ນຕອນ

ການເລືອກເຟັ້ນໂຄງການລົງທຶນເພື່ອສຶກສາໂຄງການທີ່ມີປະສິດທິພາບສູງ ເຮັດໃຫ້ມູນຄ່າການລົງທຶນຄຸ້ມຄ່າ ພ້ອມກັນນັ້ນຍັງຮັບປະກັນຄຸນນະພາບຂອງການນຳໃຊ້ ເຮັດໃຫ້ໜີ້ສິນທີ່ເກີດຈາກການລົງທຶນຂອງລັດຫຼຸດໜ້ອຍລົງ ແລະ ຈຳກັດໂຄງການທີ່ພາໃຫ້ເກີດໜີ້ສິນໃໝ່ ສະນັ້ນກົດໝາຍວ່າດ້ວຍການລົງທຶນຂອງລັດຈຶ່ງເປັນບ່ອນອີງໃຫ້ແກ່ການລົງທຶນຂອງລັດໃນປັດຈຸບັນ ສ່ວນກົດໝາຍ ແລະ ນິຕິກຳສະບັບອື່ນທີ່ກ່ຽວຂ້ອງກັບການລົງທຶນຂອງລັດ ຜູ້ໃນສຳພາດມີທັດສະນະຢາກໃຫ້ມີການປັບປຸງໃຫ້ມີຄວາມຮັດກຸມ ແລະ ແທດເໝາະຂຶ້ນຕື່ມ ເພາະບາງນິຕິກຳ ແລະ ດຳລັດທີ່ກ່ຽວຂ້ອງກັບການລົງທຶນຂອງລັດແມ່ນຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງ”[85].

ບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຜູ້ໃຫ້ສຳພາດມີທັດສະນະວ່າ “ບັນຫາທີ່ເກີດຂຶ້ນສ່ວນຫຼາຍ ມີຄວາມແຕກຕ່າງກັນໄປ ຕາມປະເພດ, ຂະໜາດ ແລະ ມູນຄ່າຂອງໂຄງການ ບັນຫາທີ່ເກີດຂຶ້ນແມ່ນເກີດຢູ່ຂັ້ນຕອນການປະມູນໂຄງການບໍ່ທັນມີຄວາມໂປ່ງໃສ ຫຼື ຢູ່ໃນວົງແຄບ ຜູ້ຮັບຜິດຊອບການປະມູນຍັງເອື້ອປະໂຫຍດສ່ວນໂຕເປັນຫຼັກ ຊຶ່ງເຈົ້າຂອງໂຄງການບໍ່ໄດ້ປະກາດການປະມູນຕາມລະບຽບການຂອງຂະແໜງການເງິນວາງອອກ ບາງໂຄງການຈັດຕັ້ງການປະມູນແຕ່ຢູ່ໃນວົງແຄບປະຕິບັດຫົວໜ່ວຍລາຄາບໍ່ເປັນໄປຕາມລະບຽບຫົວໜ່ວຍລາຄາກາງຂອງຂະແໜງໂຍທາທິການ ແລະ ຂົນສົ່ງ. ນອກຈາກຂັ້ນຕອນການປະມູນ ຂັ້ນຕອນການກວດກາກໍ່ເປັນບັນຫາທີ່ພາໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງບໍ່ໄດ້ຮັບປະສິດທິພາບເຊັ່ນດຽວກັນ ເນື່ອງຈາກການກວດກາແຕ່ຫົວທີຍັງເຮັດບໍ່ໄດ້ເທົ່າທີ່ຄວນ ແລະ ການຕິດຕາມ, ກວດກາພາກສະໜາມຂອງເຈົ້າຂອງໂຄງການຍັງບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນ ເຮັດໃຫ້ໂຄງການມີປະສິດທິພາບ ແລະ ຄຸນະພາບຕໍ່າ, ການກວດກາການປະເມີນໂຄງການຂອງຂະແໜງແຜນການຍັງບໍ່ຮັດກຸມເຮັດໃຫ້ໂຄງການມີມູນຄ່າສູງເກີນຫົວໜ່ວຍລາຄາກາງ ສະນັ້ນ, ຜູ້ຕອບແບບສອບຖາມມີທັດສະນະໃຫ້ຂະແໜງການທີ່ກ່ຽວຂ້ອງມີການປະສານງານກັນຢ່າງລະອຽດເປັນອັນໜຶ່ງອັນດຽວກັນ ເພື່ອກຳຈັດບັນຫາດັ່ງກ່າວໃຫ້ໝົດໄປ”[86].

ຂໍ້ສະດວກທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຜູ້ຕອບແບບສຳພາດເຫັນວ່າ ພັກ-ລັດ ກໍ່ຄືອຳນາດການການປົກຄອງແຂວງໄດ້ຊີ້ນຳ ນຳພາຢ່າງໃກ້ຊິດ ໂດຍໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບໂຄງການຢ່າງເປັນລະບົບ ໂດຍຄະນະຮັບຜິດຊອບມີການປະສານງານກັບຂະແໜງການທີ່ກ່ຽວຂ້ອງຢ່າງໃກ້ຊິດ ແລະ ເຈົ້າຂອງໂຄງການເອົາໃຈໃສ່ຊີ້ນຳ ແລະ ຕິດຕາມກວດກາປົກກະຕິ, ວິຊາການ

---

[85]ບົດສຳພາດ ທ່ານ ສຸລິຍາ ນາເຟືອງວິໄລ, ຫົວໜ້າຂະແໜງແຜນການ, ພະແນກແຜນການ ແລະ ການລົງທຶນແຂວງຈຳປາສັກ, ຄັ້ງວັນທີ 11 ທັນວາ 2017.

[86]ສັງລວມບົດສຳພາດ, ຄັ້ງວັນທີ 11 ທັນວາ 2017.

ຝ່າຍເຈົ້າຂອງໂຄງການ ແລະ ບໍລິສັດຮັບເໝົາມີປະສົບການ ນອກຈາກນັ້ນ, ບໍລິສັດຮັບເໝົາ ຍັງມີຖານະການເງິນທີ່ດີອີກດ້ວຍ.

ຂໍ້ຫຍຸ້ງຍາກທີ່ເກີດຂື້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກ ເຊແຂວງຈຳປາສັກ ຜູ້ຕອບແບບສຳພາດໄດ້ໃຫ້ທັດສະນະວ່າ ງົບປະມານຂອງລັດມີຈຳນວນ ຈຳກັດເຮັດໃຫ້ການຊຳລະໜີ້ສິນໂຄງການແກ່ຍາວ, ມູນຄ່າໂຄງການສູງກວ່າຄວາມເປັນຈິງ, ມີສິ່ງກີດຂວາງຫຼວງຫຼາຍໂດຍສະເພາະແມ່ນທີ່ດິນ, ບ້ານເຮືອນ, ສຳນັກງານອົງການ ແລະ ອື່ນໆ ປະຊາຊົນຈຳນວນໜຶ່ງຍັງບໍ່ໃຫ້ຄວາມຮ່ວມມືຢ້ານເສຍຜົນປະໂຫຍດ ຄວາມຕື່ນຕົວຕໍ່ ລະບຽບກົດໝາຍຂອງປະຊາຊົນບໍ່ທັນສູງ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດໂຄງການພົບຄວາມ ຫຍຸ້ງຍາກເທົ່າທີ່ຄວນ.

ຜູ້ຕອບແບບສຳພາດມີທັດສະນະຕໍ່ກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢາກມີ ປະສິດພາບຕອ້ງໄດ້ນຳເອົາແນວທາງນະໂຍບາຍຂອງຂັ້ນເທິງລົງເຜີຍແຜ່ ໃຫ້ທຸກຄົນເຂົ້າໃຈ ກ່ຽວກັບແຜນພັດທະນາເສດຖະກິດສັງຄົມ ທີ່ລັດວາງອອກ, ຂື້ນແຜນງົບປະມານໃຫ້ພຽງພໍ ແລະ ສາມາດຕອບສະໜອງໄດ້, ປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍ ວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍການກໍ່ສ້າງ ແລະ ນິຕິກຳລຸ່ມກົດໝາຍຢ່າງເຂັ້ມງວດ ແລະ ເຈົ້າຂອງໂຄງການຕ້ອງເປັນເຈົ້າການໃນການຕິດຕາມກວດກາການຈັດຕັ້ງປະຕິບັດຂອງ ຜູ້ຮັບເໝົາເລີ່ມແຕ່ຫົວທີ, ກວດກາຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງເພື່ອໃຫ້ໂຄງການໄດ້ຮັບ ປະສິດທິພາບສູງ, ກະຊວງແຜນການ ແລະ ການລົງທຶນຕ້ອງຕິດຕາມກວດກາຢ່າງໃກ້ຊິດ, ປະເມີນຜົນໂຄງການເປັນແຕ່ລະໄລຍະ ໂດຍປະສານສົມທົບກັບຂະແນງການທີ່ກ່ຽວຂ້ອງເກັບ ກຳໄດ້ສະພາບການຂອງການກໍ່ສ້າງ ແລະ ການຊຳລະສະສາງໂຄງການຂອງຂະແໜງການ ເງິນ ແລະ ນອກຈາກນັ້ນເຈົ້າຂອງໂຄງການ ແລະ ບໍລິສັດຮັບເໝົາກໍ່ສ້າງຕ້ອງມີຄວາມໂປ່ງ ໃສໃນການປະຕິບັດລະບຽບກົດໝາຍ ແລະ ຈິງໃຈປະຕິບັດໂຄງການໃຫ້ໄດ້ຮັບຜົນສຳເລັດ ແລະ ມີປະສິດທິພາບສູງ[87].

## 2. ການວິເຄາະຜົນຂອງການສຶກສາ

ຈາກການສຶກສາກ່ຽວກັບ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງ ປາກເຊແຂວງຈຳປາສັກ ຈາກຜົນການສຶກສາທີ່ໄດ້ມາຈາກການວິເຄາະຂໍ້ມູນ ສາມາດນຳມາ ວິເຄາະໄດ້ດັ່ງນີ້:

[87]ສັງລວມບົດສຳພາດ, ຄັ້ງວັນທີ 11 ທັນວາ 2017.

## 2.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນເພດຊາຍ ຈຳນວນ 106 ຄົນ ຄິດເປັນສ່ວນຮ້ອຍ 63.9% ແລະ ເພດຍິງ 60 ຄົນ ຄິດເປັນສ່ວນຮ້ອຍ 36.1%. ກຸ່ມອາຍຸຂອງຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນມີອາຍຸ 36-45 ປີ ຈຳນວນ 65 ຄົນ ຄິດເປັນສ່ວນຮ້ອຍ 39.2.

ລະດັບການສຶກສາຂອງຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນຈົບລະດັບການສຶກສາປະລິນຍາຕີຈຳນວນ 118 ຄົນ ຄິດເປັນສ່ວນຮ້ອຍ 71.1% ຫຼາຍກວ່າຈົບປະລິນຍາໂທ ຈຳນວນ 33 ຄົນ ຄິດເປັນສ່ວນຮ້ອຍ 19.9%.

ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນຢູ່ກະຊວງແຜນການ ແລະ ການລົງທຶນ ຈຳນວນ 74 ຄົນ ຄິດເປັນສ່ວນຮ້ອຍ 44.6%.

ຈຳນວນຜູ້ຕອບແບບສອບຖາມສ່ວນຫຼາຍມີປະສົບການເຮັດວຽກລະຫວ່າງ 11-20 ຈຳນວນ 56 ຄົນ ຄິດເປັນສ່ວນຮ້ອຍ 33.7 ກວມຫຼາຍກວ່າຜູ້ທີ່ມີປະສົບການເຮັດວຽກ 3-5 ປີ ຈຳນວນ 41 ຄົນ ຄິດເປັນສ່ວນຮ້ອຍ 24.7%.

ຈຳນວນຜູ້ຕອບແບບສອບຖາມມີຕຳແໜ່ງເປັນວິຊາການ 90 ທ່ານ ຄິດເປັນສ່ວນຮ້ອຍ 54.2%.

## 2.2 ດ້ານຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ

ຜົນການວິເຄາະເຫັນວ່າຜູ້ຕອບແບບສອງຖາມມີຄວາມຄິດເຫັນວ່າມີຄວາມເໝາະສົມຫຼາຍທີ່ຈະປັບປຸງກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ($\bar{X}$ =3.86, SD=.816) ເພາະປັດຈະບັນລະບຽບດັ່ງກ່າວບາງນິຕິກຳກໍ່ຍັງບໍ່ທັນປັບປຸງໃຫ້ທັນກະສະພາບຄວາມເປັນຈິງຂອງປະເທດ ແລະ ເຫັນວ່າຄວນສ້າງນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກທີ່ບໍ່ໄດ້ບັນຍັດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດຂຶ້ນອີກ ແມ່ນມີຄວາມເໝາຍສົມຫຼາຍເພາະປັດຈຸບັນແມ່ນອີງໃສ່ກົດໝາຍວ່າດ້ວຍການລົງທຶນຂອງລັດພຽງສະບັບດຽວເປັນຫຼັກ ($\bar{X}$ =3.67, SD=1.047) ນອກຈາກນັ້ນ ເຫັນວ່າກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015 ກຳນົດຂັ້ນຕອນການລົງທຶນຂອງລັດໄວ້ລະອຽດແລ້ວແມ່ນມີຄວາມເໝາະສົມຫຼາຍ ($\bar{X}$ =3.67, SD=.883) ເນື່ອງຈາກກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງ ປີ 2015 ໄດ້ມີການຍົກລະດັບຈາກດຳລັດວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດຂຶ້ນເປັນກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບປີ 2009 ແລະ ມີການປັບປຸງມາຈົນສະບັບປັດຈຸບັນ ສະບັບປີ 2015 ໃນການປັບປຸງແຕ່ລະຄັ້ງໄດ້ປັບປຸງຈຸດບົກຜ່ອງ

ຂອງກົດໝາຍຈຶ່ງເຮັດໃຫ້ມີການກຳນົດລະອຽດກ່ຽວກັບຂັ້ນຕອນການລົງທຶນຂອງລັດໄວ້ຢ່າງຊັດເຈນ ຊຶ່ງເຈົ້າໜ້າທີ່ ທີ່ຮັບຜິດຊອບກ່ຽວກັບວຽກງານການລົງທຶນຂອງລັດຢູ່ຂັ້ນສູນກາງໄດ້ມີທັດສະນະຕໍ່ກົດໝາຍວ່າດ້ວຍການລົງທຶນລັດ "ແມ່ນມີຄວາມລະອຽດແລ້ວ ກົງກັນຂ້າມບາງຂະແໜງການຍັງບໍ່ປະຕິບັດຕາມລະບຽບກົດໝາຍກຳນົດຍ້ອນຍັງບໍ່ເຂົ້າ ໃຈຢ່າງຈະແຈ້ງກ່ຽວກັບກົດໝາຍກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍ ຫຼື ນິຕິກຳທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຍັງບໍ່ຮັດກຸມ, ບໍ່ສອດຄ່ອງກັບສະພາບປັດຈຸບັນ ດັ່ງນັ້ນເຈົ້າໜ້າທີ່ທີ່ກ່ຽວຂ້ອງເຫັນວ່າຄວນໂຄສະນາ, ເຜີຍແຜ່ກົດໝາຍວ່າດ້ວຍລົງທຶນຂອງລັດໃຫ້ກວ້າງອອກເພື່ອຮັບປະກັນໃຫ້ພະນັກງານ ແລະ ຜູ້ຮັບຜິດຊອບກ່ຽວກັບໂຄງການລົງທຶນຂອງລັດໃຫ້ເຂົ້າໃຈແຈ້ງ ແລະ ປັບປຸງບັນດາກົດໝາຍ ຫຼື ນິຕິກຳທີ່ກ່ຽວ ຂ້ອງໃຫ້ມີຄວາມຮັດກຸມ ແລະ ສອດຄ່ອງກັນ"[88].

## 2.3 ດ້ານບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ຜົນການວິເຄາະຂໍ້ມູນພົບວ່າ ຂັ້ນຕອນທີ່ເປັນບັນຫາຫຼາຍທີ່ສຸດແມ່ນເກີດຢູ່ຂັ້ນຕອນການປະມູນເນື່ອງຈາກບັນດານິຕິກຳທີ່ກ່ຽວຂ້ອງກັບການປະມູນແມ່ນຍັງບໍ່ຊັດເຈນຄວາມປັບປຸງໃຫ້ມີຄວາມຊັດເຈນຂຶ້ນຕື່ມ ຊຶ່ງຜູ້ຕອບແບບສອບຖາມເຫັນດີຢູ່ໃນລະດັບຫຼາຍ ($\bar{X}$ =3.91, SD=.893), ຜູ້ຕອບແບບສອບຖາມສ່ວນຫຼາຍເຫັນວ່າຖ້າຫາກກ່ອນການປະມູນກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຫາກບໍ່ມີການປະກາດໃຫ້ຫຼາຍບໍລິສັດເຂົ້າມາປະມູນກໍ່ຈະເຮັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກໄດ້ຮັບປະສິດທິຜົນໜ້ອຍສຸດ ($\bar{X}$ =1.56, SD=.719) ຖ້າບໍ່ມີການປະກາດໃຫ້ຫຼາຍບໍລິສັດເຂົ້າຮ່ວມການປະມູນກໍ່ຈະເປັນການຜູກຂາດບໍລິສັດຮັບເໝົາກໍ່ສ້າງພຽງບໍລິສັດດຽວ ຊຶ່ງເປັນສາເຫດໃຫ້ໂຄງການມີມູນຄ່າສູງ ແລະ ບໍ່ມີປະສິດທິຜົນ ແລະ ນອກຈາກນັ້ນຜູ້ຕອບແບບສອບຖາມມີຄວາມເຫັນຢູ່ໃລະດັບໜ້ອຍສຸດວ່າບໍລິສັດທີ່ມີເງື່ອນໄຂທີ່ຈະຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກຍັງມີຄວາມພຽງພໍ ($\bar{X}$ =1.27, SD=.544) ເນື່ອງຈາກບໍລິສັດທີ່ຈະມາຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ ປັດຈຸບັນນິຕິບຸກຄົນທີ່ມີຄວາມສາມາດຈະຈັດຕັ້ງປະຕິບັດມີໜ້ອຍ ເພາະການກຳນົດມາດຕະຖານເຕັກນິກໃນການກໍ່ສ້າງເສັ້ນທາງແມ່ນມີເຕັກນິກສູງຈຶ່ງເປັນເຫດໃຫ້ບໍລິສັດທີ່ມີຄວາມສາມາດຈັດຕັ້ງປະຕິບັດມີໜ້ອຍ ດັ່ງນັ້ນ, ຈຶ່ງເຫັນວ່າບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການປະມູນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກແມ່ນເນື່ອງຈາກບໍລິສັດທີ່ມີ

---

[88]ບົດສຳພາດ ທ່ານ ທອງປັກ ມະຫາທິ່ງ, ຮອງຫົວໜ້າພະແນກປະເມີນຜົນການລົງທຶນລັດຂັ້ນທ້ອງຖິ່ນ, ກົມປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ, ຄັ້ງວັນທີ 11 ທັນວາ 2017.

ເງື່ອນໄຂທີ່ຈະຈັດຕັ້ງປະຕິບັດການກໍ່ສ້າງດັ່ງກ່າວແມ່ນບໍ່ມີຄວາມພຽງພໍ, ກ່ອນການປະມູນເຈົ້າຂອງໂຄງການບໍ່ໄດ້ມີການປະກາດໃຫ້ບໍລິສັດຮັບເໝົາກໍ່ສ້າງຜູ້ທີ່ມີເງື່ອນໄຂເຂົ້າຮ່ວມການປະມູນ ນອກຈາກຜູ້ຕອບແບບສອບຖາມເຫັນວ່າຂັ້ນຕອນການປະມູນເປັນບັນຫາທີ່ເຮັດໃຫ້ການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກບໍ່ໄດ້ຮັບປະສິດທິພາບ ແລະ ຜູ້ຕອບແບບສອຖາມຍັງມີທັດທະນະວ່າວຽກງານກວດກາກໍ່ເປັນອີກບັນຫາໜຶ່ງທີ່ເຮັດໃຫ້ການລົງທຶນຂອງລັດໃນການບໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກເປັນບັນຫາເຮັດໃຫ້ໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງບໍ່ໄດ້ຮັບປະສິດທິຜົນ ຊຶ່ງຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍໃນການຕິດຕາມກວດກາໄລຍະເລີ່ມຕົ້ນໂຄງການເພາະເປັນການຕິດຕາມກວດກາກ່ອນການດໍາເນີນການກໍ່ສ້າງເພື່ອຮັບປະກັນຄວາມສອດຄ່ອງຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ($\bar{X}$ =4.03, SD=.935) ເພາະໃນປັດຈຸບັນພັກ ແລະ ລັດຖະບານໄດ້ເຫັນໄດ້ເຖິງຄວາມສໍາຄັນໃນວຽກງານກວດກາການລົງທຶນຂອງລັດເລີ່ມແຕ່ຫົວທີຈຶ່ງໄດ້ອອກດໍາລັດວ່າດ້ວຍການຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ສະບັບເລກທີ 01/ລບ, ລົງວັນທີ 6 ມັງກອນ 2015 ເພື່ອເຮັດໃຫ້ວຽກງານຕິດຕາມກວດກາດໍາເນີນໄປຢ່າງຖືກຕ້ອງມີຄຸນະພາບ ແລະ ໂປ່ງໃສ ຕໍ່ກັບບັນຫາດັ່ງກ່າວ ຮອງອໍານວຍການບໍລິສັດຮັບເໝົາກໍ່ສ້າງໄດ້ໃຫ້ທັດສະນະວ່າ "ບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈໍາປາສັກແມ່ນມາຈາກການເກັບກໍາຂໍ້ມູນຜົນກະທົບຕ່າງໆຍັງບໍ່ທັນຊັດເຈນໂດຍການຄໍານວນຍັງບໍ່ທັນລະ ອຽດຂອງເຈົ້າຂອງໂຄງການ, ການປະມູນ,ຈັດຊື້-ຈັດຈ້າງຍັງບໍ່ທັນໂປ່ງໃສເທົ່າທີ່ຄວນ ຫຼື ຍັງຢູ່ໃນວົງແຄບບໍ່ມີການປະກາດຢ່າງກວ້າງຂວາງບໍ່ເປັນໄປຕາມລະບຽບຂອງຂະແໜງການເງິນກໍານົດໄວ້, ພາກສ່ວນທີ່ກ່ຽວຂ້ອງຍັງເອື້ອປະໂຫຍດຈາກຜູ້ຮັບເໝົາກໍ່ສ້າງອາໃສຊ່ອງຫວ່າງຕ່າງໆເພື່ອຊອກຜົນປະໂຫຍດ ນອກຈາກນັ້ນ, ການຕິດຕາມກວດກາຍັງປະຕິບັບບໍ່ທັນໄດ້ດີເຖິງຈະມີນິຕິກໍາແນະນໍາໃຫ້ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີກໍ່ຕາມ"[89].

ສ່ວນບັນຫາທີ່ເກີດຈາກຂັ້ນຕອນອື່ນໆຜູ້ຕອບແບບສອບຖາມສ່ວນຫຼາຍເຫັນວ່າຢູ່ໃນລະໜ້ອຍເຊັ່ນ ຜູ້ຕອບແບບສອບຖາມໄດ້ມີຄວາມຄິດເຫັນໃນລະດັບຫຼາຍທີ່ວ່າບັນຫາທີ່ການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກບໍ່ໄດ້ຮັບປະສິດທິຜົນແມ່ນບໍ່ໄດ້ເກີດຂຶ້ນຈາກສັນຍາບໍ່ຮັດກຸມເນື່ອງຈາກເກີດຈາກບັນຫາອື່ນ ($\bar{X}$ =3.45, SD=1.087), ແລະ ບັນຫາທີ່ເກີດຈາກການດໍາເນີນການກໍ່ສ້າງ ແລະ ການມອບຮັບໂຄງການ ຜູ້ຕອບແບບສອບຖາມມີຄວາມຄິດເຫັນໃນລະດັບໜ້ອຍທີ່ຂັ້ນຕອນດັ່ງກ່າວເປັນບັນຫາທີ່ເຮັດໃຫ້ການລົງທຶນຂອງລັດບໍ່ໄດ້ຮັບປະສິດທິຜົນ.

---

[89]ບົດສໍາພາດ ທ່ານ ທອງສຸກ ບົວຄໍາ, ຮອງອໍານວຍການ ບໍລິສັດຊົນລະປະທານຈໍາກັດ, ຄັ້ງວັນທີ 11 ທັນວາ 2017.

## 2.4 ຜົນການວິເຄາະດ້ານຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

ຜົນການວິເຄາະຂໍ້ມູນພົບວ່າ ທັດສະນະຂອງຜູ້ຕອບແບບສອບຖາມເຫັນວ່າປະຊາຊົນໃຫ້ການຮ່ວມມືເປັນຢ່າງດີໃນການອຳນວຍຄວາມສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດມີຂໍ້ສະດວກແມ່ນເຫັນດີຢູ່ໃນລະດັບຫຼາຍ($\bar{X}$ =3.94, SD=.799), ຜົນການວິເຄາະຂໍ້ມູນພົບວ່າ ທັດສະນະຂອງຜູ້ຕອບແບບສອບຖາມມີຄວາມຄິດເຫັນຢູ່ໃນລະດັບຫຼາຍກ່ຽວກັບສະພາບດິນຟ້າອາກາດບໍ່ອຳນວຍຄວາມສະດວກເກີດພະຍຸລົມຝົນຈຶ່ງເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ($\bar{X}$ =3.68, SD=1.003) ເພາະໃນຊຸມປີຜ່ານມາໄດ້ເກີດມີໄພພິບັດທາງທຳມະຊາດຫຼາຍຄັ້ງໂດຍສະເພາະແມ່ນພະຍຸລົມຝົນຈຶ່ງເຮັດໃຫ້ການກໍ່ສ້າງເສັ້ນທາງພົບອຸປະສັກ ແລະ ຜູ້ຕອບແບບສອບຖາມເຫັນວ່າການການປະຕິບັດວິໄນການເງິນຍັງບໍ່ເຂັ້ມງວດຂອງຫົວໜ່ວຍງົບປະມານຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກຫຼາຍ ($\bar{X}$ =3.63, SD=1.040), ການປະສານງານລະຫວ່າງຂະແໜງການດ້ວຍກັນຍັງຂາດການປະສານງານທີ່ລະອຽດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍ ($\bar{X}$ =3.62, SD=.945) ຈາກຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກດັ່ງກ່າວ ຫົວໜ້າຂະແໜງແຜນການ ພະແນກແຜນການ ແລະ ການລົງທຶນແຂວງຈຳປາສັກໃຫ້ທັດສະນະຕໍ່ຂໍ້ດວກວ່າ "ປະຊາຊາຊົນມີຄວາມເອົາໃຈໃສ່ໃຫ້ການຮ່ວມມືເປັນຢ່າງດີ ແລະ ອຳນາດການປົກຄອງຍັງມີຄວາມເອົາໃຈໃສ່ໃນການປະກອບເອກະສານສະເໜີໂຄງການ, ແຕ່ງຕັ້ງຄະນະກຳມະ ການຮັບຜິດຊອບໂຄງການຢ່າງເປັນລະບົບ ແລະ ມີການປະສານງານກັບພະແນກການທີ່ກ່ຽວຂ້ອງຢ່າງໃກ້ຊິດ, ຕໍ່ກັບຂໍ້ຫຍຸ້ງຍາກທ່ານໄດ້ມີທັດສະນະວ່າ ງົບປະມານຂອງລັດມີຈຳນວນຈຳກັດແຕ່ຄວາມຕ້ອງການພັດທະນາສູງ ຈຶ່ງເຮັດໃຫ້ການຊຳລະໜີ້ສິນໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແກ່ຍາວ, ມູນຄ່າຂອງໂຄງການສູງກວ່າຄວາມເປັນຈິງ"[90].

ຜົນການວິເຄາະຂໍ້ມູນພົບວ່າ ຜູ້ຕອບແບບສອບຖາມມີທັດສະນະຕໍ່ດ້ານວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກເຫັນດີໃນລະດັບຫຼາຍສຸດຄວນເພີ່ມທະວີວຽກງານຕິດຕາມກວດກາໃຫ້ສູງຂຶ້ນເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ($\bar{X}$ =4.45, SD=.694) ເພາະການຕິດຕາມກວດກາເປັນວິທີທີ່ດີທີ່ສຸດເພື່ອເຮັດໃຫ້ການລົງທຶນຂອງລັດໄດ້ຮັບປະສິດທິພາບ ແລະ ໂປ່ງໃສ, ຮອງລົງມາແມ່ນເຫັນດີໃຫ້

---

[90]ບົດສຳພາດ ທ່ານ ສຸລິຍາ ບາເພືອງວິໄລ, ຫົວໜ້າຂະແໜງແຜນການ, ພະແນກແຜນການ ແລະ ການລົງທຶນແຂວງຈຳປາສັກ, ຄັ້ງວັນທີ 11 ທັນວາ 2017.

ຍົກສູງສະຕິດ້ານຕ່າງໆໃຫ້ວິຊາການທີ່ເຮັດວຽກກວດກາເພື່ອມີຫຼັກໝັ້ນ ແລະ ມີຄວາມອຸ່ນອຽນ ທຸນຖ່ຽງເປັນວິທີແກ້ໄຂບັນຫາທີ່ດີສຸດ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍສຸດ ($\bar{X}$ =4.30, SD=.855), ທຸກໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກຄວນໄດ້ຮັບການຕິດຕາມກວດກາແຕ່ຫົວທີເປັນວິທີແກ້ໄຂບັນຫາທີ່ດີ ຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍທີ່ສຸດ ($\bar{X}$ =4.23, SD=.840) ນອກຈາກນັ້ນຜູ້ຕອບແບບສອບຖາມຍັງເຫັນວ່າຖ້າການປະມູນຫາກໄດ້ປະຕິບັດຕາມລະບຽບການຢ່າງເຄັ່ງຄັດກໍ່ເປັນວິທີແກ້ໄຂບັນຫາທີ່ດີທີ່ເໝາະສົມຢູ່ໃນລະດັບຫຼາຍ ($\bar{X}$ =3.80, SD=.923), ຜູ້ຕອບແບບສອບຖາມມີຄວາມຄິດເຫັນໃນລະດັບຫຼາຍທີ່ວ່າກ່ອນການປະມູນຄວນປະກາດເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂເຂົ້າມາຈັດຕັ້ງປະຕິບັດໂຄງການ ເພື່ອຫຼີກລ້ຽງບັນຫາທີ່ເກີດຂຶ້ນເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ($\bar{X}$ =3.78, SD=1.033) ຕໍ່ກັບວິທີການແກ້ໄຂບັນຫາດັ່ງກ່າວທ່ານຮອງຫົວໜ້າພະແນກການເງິນແຂວງຈໍາປາສັກໄດ້ໃຫ້ທັດສະນະວ່າ "ຕ້ອງຍົກສູງສະຕິໃຫ້ແກ່ພະນັກງານຢູ່ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງໂຍທາທິການ ແລະ ຂົນສົ່ງ ໃຫ້ມີສະຕິຕໍ່ການປະຕິບັດໜ້າທີ່ຂອງຕົນຢ່າງກົງໄປກົງມາຮັກສາຜົນປະໂຫຍດຂອງລັດເພື່ອຮັບປະກັນເຮັດໃຫ້ການລົງທຶນຂອງລັດໄດ້ຮັບປະສິດທິຜົນ, ຕ້ອງເພີ່ມທະວີທັນລັດແຫ່ງກົດໝາຍໂດຍການປະຕິບັດລະບຽບການເງິນ ແລະ ລະບຽບການປະມູນ, ຈັດຊື້-ຈັດຈ້າງຢ່າງເຂັ້ມງວດ ນອກຈາກນັ້ນຕ້ອງເພີ່ມທະວີວຽກງານຕິດຕາມກວດກາແຕ່ລະໄລຍະໃຫ້ສູງຂຶ້ນ ຮັບປະກັນໂຄງການກໍ່ສ້າງໃຫ້ໄດ້ຮັບປະສິດທິຜົນ ແລະ ສິ່ງສໍາຄັນເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາກໍ່ສ້າງຕ້ອງມີຄວາມໂປ່ງໃສປະຕິບັດຕາມລະບຽບຫຼັກການ ແລະ ກົດໝາຍກໍານົດຢ່າງເຄັ່ງຄັດ"[91].

[91]ບົດສໍາພາດ ທ່ານ ວິຊຽນ ສົມບູນຂັນ, ຮອງຫົວໜ້າພະແນກການເງິນແຂວງຈໍາປາສັກ, ຄັ້ງວັນທີ 11 ທັນວາ 2017.

# ພາກທີV
# ສະຫຼຸບ ແລະ ຂໍ້ສະເໜີ

## I. ສະຫຼຸບ

ການສຶກສາກ່ຽວກັບການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ມີຈຸດປະສົງເພື່ອສຶກສາຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ, ສຶກສາບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກ ແລະ ສຶກສາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຊຶ່ງຜົນຂອງການສຶກສາແມ່ນສາມາດເປັນຂໍ້ມູນໃຫ້ແກ່ບັນດາວິຊາການຜູ້ທີ່ເຮັດໜ້າທີ່ຄຸ້ມຄອງ ແລະ ຮັບຜິດຊອບກ່ຽວວຽກງານການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງ ນອກນັ້ນຍັງຕອບສະໜອງໃຫ້ແກ່ນັກສຶກສາທີ່ສົນໃຈກໍ່ສາມາດນຳໄປເປັນແນວທາງໃນການສຶກສາຄັ້ງຕໍ່ໄປ.

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ມີຈຳນວນ 166 ຄົນ ທີ່ໄດ້ມາຈາກການສຸ່ມຕົວຢ່າງຈາກສູດທາໂຣຢາມາເນ, ສ່ວນເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນເປັນແບບສອບຖາມ ຊຶ່ງແບ່ງອອກເປັນ 2 ຕອນໄດ້ແກ່ ຕອນທີ1 ເປັນແບບສອບຖາມລັກສະນະສ່ວນບຸກຄົນຂອງຜູ້ຕອບແບບສອບຖາມໄດ້ແກ່ ເພດ, ອາຍຸ, ລະດັບການສຶກສາ, ສະຖານທີ່ເຮັດວຽກ, ປະສົບການ, ຕຳແໜ່ງງານ ແລະ ຕອນທີ 2 ແມ່ນແບບສອບຖາມທີ່ມີລັກສະນະຄ່າສະເລ່ຍໂດຍກຳນົດໄລຍະຄະແນນຕາມທັດສະນະຄວາມຄິດເຫັນແບ່ງເປັນ 5 ລະດັບ.

ສຳລັບຜົນຂອງການສຶກສາ ໄດ້ວິເຄາະຂໍ້ມູນດ້ວຍໂປຼແກຣມຄອມພິວເຕີ ໂດຍໃຊ້ໂປຼແກຣມສຳເລັດຮູບ ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ($\bar{X}$), ຄ່າຜັນປ່ຽນມາດຕະຖານ (SD) ຊຶ່ງສາມາດສະຫຼຸບໄດ້ດັ່ງນີ້:

ຄວາມຄິດເຫັນຕໍ່ກັບການປັບປຸງກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກແມ່ນເຫັນດີໃຫ້ປັບປຸງຢູ່ໃນລະດັບຫຼາຍ ($\bar{X}$ =3.86, SD=.816), ຮອງລົງມາແມ່ນມີຄວາມຄິດເຫັນວ່າຫຼັກການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງມີຈຳນວນພຽງພໍໃນລະດັບຫຼາຍ ( $\bar{X}$ =3.80, SD =.847)ແຕ່ເຫັນວ່າຄວນສ້າງນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກເພີ່ມຕື່ມ ແມ່ນມີຄວາມເໝາະສົມຫຼາຍ ($\bar{X}$ =3.67, SD=1.047) ແລະ ຜູ້ຕອບແບບສອບຖາມສ່ວນຫຼາຍມີຄວາມຄິດເຫັນວ່າກົດໝາຍ

ວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງປີ 2015 ກຳນົດຂັ້ນຕອນການລົງທຶນຂອງລັດໄວ້ລະອຽດແລ້ວ ແມ່ນມີຄວາມເໝາະສົມຫຼາຍ ($\bar{X}$ =3.67, SD=.883) ສະນັ້ນ, ຜູ້ຕອບແບບສອບຖາມສ່ວນໃຫຍ່ມີຄວາມຄິດເຫັນຄວນໃຫ້ສ້າງ ແລະ ປັບປຸງບັນດາຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກທີ່ເປັນລະບຽບການສະເພາະທີ່ບໍ່ນອນຢູ່ໃນກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບປັບປຸງປີ 2015 ຊຶ່ງເຫັນວ່າມີຄວາມເໝາະສົມຫຼາຍ($\bar{X}$ =3.75, SD=.658).

ຄວາມຄິດເຫັນກ່ຽວກັບບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກເຫັນວ່າບັນຫາສ່ວນຫຼາຍແມ່ນເກີດຢູ່ຂັ້ນຕອນການປະມູນ ແລະ ຂັ້ນຕອນການຕິດຕາມກວດກາໂຄງການລົງທຶນ ຊຶ່ງການວິເຄາະຂໍ້ມູນພົບວ່າ ຖ້າເຈົ້າຂອງໂຄງການໄດ້ມີການປະມູນແບບເປີດກວ້າງກໍ່ຈະເປັນການທີ່ເໝາະສົມຫຼາຍໃນການປະມູນຫາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ($\bar{X}$ =4.04, SD=1.050), ຮອງລົງມາເຫັນວ່າຄວນປັບປຸງລະບຽບກ່ຽວກັບຂັ້ນຕອນການປະມູນເພື່ອໃຫ້ມີຄວາມສະດວກ ແລະ ຊັດເຈນຂຶ້ນຕື່ມຢູ່ໃນລະດັບຫຼາຍ ($\bar{X}$ =3.91, SD=.893), ດັ່ງນັ້ນ, ຈຶ່ງເຫັນວ່າບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການປະມູນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກແມ່ນເນື່ອງຈາກບໍລິສັດທີ່ມີເງື່ອນໄຂທີ່ຈະຈັດຕັ້ງປະຕິບັດການກໍ່ສ້າງດັ່ງກ່າວແມ່ນບໍ່ມີຄວາມພຽງພໍ, ກ່ອນການປະມູນເຈົ້າຂອງໂຄງການບໍ່ໄດ້ມີການປະກາດໃຫ້ບໍລິສັດຮັບເໝົາກໍ່ສ້າງຜູ້ທີ່ມີເງື່ອນໄຂເຂົ້າຮ່ວມການປະມູນ ແລະ ຜູ້ຕອບແບບສອບຖາມມີຄວາມຄິດເຫັນທີ່ຕ້ອງການປັບປຸງນິຕິກຳທີ່ກ່ຽວກັບການປະມູນເພາະຖ້າບໍ່ປັບປຸງ ກໍ່ຈະເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກໄດ້ຮັບປະສິດທິຜົນໜ້ອຍ ($\bar{X}$ =2.42, SD=.395), ຜູ້ຕອບແບບສອບຖາມສ່ວນຫຼາຍເຫັນວ່າສິ່ງທີ່ກ່ຽວຂ້ອງກັບສັນຍາແມ່ນມີຄວາມຮັດກຸມ ແລະ ສອດຄ່ອງກັບລະບຽບການຢູ່ໃນລະດັບຫຼາຍເຊິ່ງຂັ້ນຕອນດັ່ງກ່າວບໍ່ເປັນບັນຫາທີ່ເຮັດໃຫ້ການລົງທຶນບໍ່ໄດ້ຮັບປະສິດທິພາບ ($\bar{X}$ =3.60, SD=.593) ນອກຈາກນັ້ນຜູ້ຕອບແບບສອບຖາມເຫັນວ່າການຕິດຕາມກວດກາໄລຍະເລີ່ມຕົ້ນໂຄງການມີຄວາມສຳຄັນຫຼາຍເພາະເປັນການຕິດຕາມກວດກາກ່ອນການດຳເນີນການກໍ່ສ້າງ ($\bar{X}$ =4.07, SD=.935) ຮອງລົງມາຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍທີ່ວຽກງານຕິດຕາມກວດກາເປັນບັນຫາທີ່ສຳຄັນຫຼາຍໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳສັກ ($\bar{X}$ =4.03, SD=.887), ແລະ ຜູ້ຕອບແບບສອບຖາມຍັງມີຄວາມເຫັນຢູ່ໃນລະດັບຫຼາຍວ່າໄລຍະເວລາຜ່ານມາການຕິດຕາມກວດກາໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແມ່ນຍັງປະຕິບັດຍັງບໍ່ໄດ້ທົ່ວເຖິງ ($\bar{X}$ =3.52, SD=1.099) ສ່ວນຂັ້ນຕອນອື່ນ

ຜູ້ຕອບແບບສອບຖາມມີຄວາມເຫັນດີຕໍ່ສະພາບການຈັດຕັ້ງປະຕິບັດໃນປັດຈຸບັນ ແລະ ເຫັນວ່າຂັ້ນຕອນດັ່ງກ່າວເປັນສາເຫດພຽງສ່ວນໜ້ອຍທີ່ພາໃຫ້ການກໍ່ສ້າງເສັ້ນທາງບໍ່ໄດ້ຮັບປະສິດພາບສູງ ຊຶ່ງສາເຫດທີ່ພາໃນໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແມ່ນສາມາດສະຫຼຸບໄດ້ວ່າເກີດມາຈາກຂັ້ນຕອນການປະມູນ ແລະ ການຕອນການຕິດຕາມກວດກາຂອງເຈົ້າຂອງໂຄງການ ແລະ ຄະນະຄຸ້ມຄອງໂຄງ ການ.

ທັດສະນະຄວາມຄິດເຫັນກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ ຊຶ່ງຜົນການວິເຄາະຂໍ້ມູນພົບວ່າທັດສະນະຂອງຜູ້ຕອບແບບສອບຖາມເຫັນວ່າປະຊາຊົນໃຫ້ການຮ່ວມມືເປັນຢ່າງດີໃນການອໍານວຍຄວາມສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດມີຂໍ້ສະດວກແມ່ນເຫັນດີຢູ່ໃນລະດັບຫຼາຍ ($\bar{X}$ =3.94, SD=.799), ການປະສານງານລະຫວ່າງຂະແໜງການດ້ວຍກັນຍັງຂາດການປະສານງານທີ່ລະອຽດຈຶ່ງເປັນສາເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍ ($\bar{X}$ =3.52, SD =.945), ຜົນການວິເຄາະຂໍ້ມູນພົບວ່າຜູ້ຕອບແບບສອບຖາມມີທັດສະນະຕໍ່ດ້ານວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກເຫັນດີໃນລະດັບຫຼາຍສຸດຄວນເພີ່ມທະວີວຽກງານຕິດຕາມກວດກາໃຫ້ສູງຂຶ້ນເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ($\bar{X}$ =4.45, SD=.694) ເພາະການຕິດຕາມກວດກາເປັນວິທີທີ່ດີທີ່ສຸດເພື່ອເຮັດໃຫ້ການລົງທຶນຂອງລັດໄດ້ຮັບປະສິດທິພາບ ແລະ ໂປ່ງໃສ, ຮອງລົງມາແມ່ນເຫັນດີໃຫ້ຍົກສູງສະຕິດ້ານຕ່າງໆໃຫ້ວິຊາການທີ່ເຮັດວຽກກວດກາເພື່ອມີຫຼັກໝັ້ນ ແລະ ມີຄວາມອຸ່ນອຽນທຸນທ່ຽງເປັນວິທີແກ້ໄຂບັນຫາທີ່ດີສຸດ ຜູ້ຕອບແບບສອບຖາມເຫັນດີໃນລະດັບຫຼາຍສຸດ ($\bar{X}$ =4.30, SD=.855), ທຸກໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກຄວນໄດ້ຮັບການຕິດຕາມກວດກາແຕ່ຫົວທີເປັນວິທີແກ້ໄຂບັນຫາທີ່ດີຜູ້ຕອບແບບສອບຖາມເຫັນວ່າມີຄວາມເໝາະສົມຫຼາຍທີ່ສຸດ ($\bar{X}$ =4.27, SD=.840) ນອກຈາກນັ້ນຜູ້ຕອບແບບສອບຖາມຍັງເຫັນວ່າຖ້າການປະມູນຫາກໄດ້ປະຕິບັດຕາມລະບຽບການຢ່າງເຄັ່ງຄັດກໍ່ເປັນວິທີແກ້ໄຂບັນຫາທີ່ດີທີ່ເໝາະສົມຢູ່ໃນລະດັບຫຼາຍ ($\bar{X}$ =3.80, SD=.923), ຜູ້ຕອບແບບສອບຖາມມີຄວາມຄິດເຫັນໃນລະດັບຫຼາຍທີ່ວ່າກ່ອນການປະມູນຄວນປະກາດເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂເຂົ້າມາຈັດຕັ້ງປະຕິບັດໂຄງການ ເພື່ອຫຼີກລຽງບັນຫາທີ່ເກີດຂຶ້ນເປັນວິທີແກ້ໄຂບັນຫາທີ່ດີ ($\bar{X}$ =3.78, SD=1.033) ສະນັ້ນວິທີແກ້ໄຂບັນຫາຜູ້ຕອບແບບສອບຖາມເຫັນວ່າຄວນແກ້ໄຂບັນຫາຢູ່ຂັ້ນຕອນການປະມູນຄວນໃຫ້ມີການປະກາດກ່ອນການປະ

ມູນ, ແລະປະມູນແບບເປີດກ້ວາງ ນອກນັ້ນຍັງມີຄວາມຄິດເຫັນໃຫ້ເພີ່ມທະວີວຽກງານຕິດຕາມກວດກາການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃຫ້ສູງຂຶ້ນຮັບປະກັນໃຫ້ໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃຫ້ໄດ້ຮັບປະສິດທິພາບສູງ ຮັບປະກັນໄດ້ເຖິງຄວາມໂປ່ງໃສ ແລະ ຖືກຕ້ອງ.

ຜົນຂອງການສຶກສາເຫັນວ່າເປັນໄປຕາມສົມມຸດຕິຖານທີ່ຕັ້ງໄວ້ໃນລະດັບປານກາງຫາຫຼາຍ ເພາະບັນຫາທີ່ເກີດຈາກການລົງທຶນຂອງລັດແມ່ນເກີດຂຶ້ນຢູ່ຂັ້ນຕອນການປະມູນ ແລະການຕອນການຕິດຕາມກວດກາ ຊຶ່ງພາກສ່ວນທີ່ກ່ຽວຂ້ອງແມ່ນຍັງບໍ່ສາມາດປະຕິບັດໄດ້ດີເທົ່າທີ່ຄວນ ເນື່ອງຈາກບາງຂະແໜງການຍັງບໍ່ມີຄວາມເຂົ້າໃຈແຈ້ງກ່ຽວກັບກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບປັບປຸງປີ 2015 ຢ່າງເລິກເຊິ່ງ ດັ່ງນັ້ນຈຶ່ງເຮັດໃຫ້ການລົງທຶນຂອງລັດໄດ້ພົບກັບບັນຫາພໍສົມຄວນ.

## II. ຂໍ້ສະເໜີ

ຈາກການສຶກສາຄົ້ນຄວ້າວິທະຍານິພົນເລື່ອງ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ

1. ຂໍ້ສະເໜີຕາມຜົນການຄົ້ນຄວ້າ ຜູ້ສຶກສາຄົ້ນຄວ້າສະເໜີວ່າ:

1 ຕາມຜົນການຄົ້ນຄວ້າເຫັນວ່າຄວນບປັບປຸງບັນດານິຕິກຳທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ

2 ການຈັດຕັ້ງການປະມູນຄວນປະຕິບັດຕາມະບຽບການຈັດຊື້-ຈັດຈ້າງຢ່າງເຄັ່ງຄັດ

3 ເພື່ອຮັບປະກັນໃຫ້ໂຄງການລົງທທຶນຂອງລັດໄດ້ຮັບປະສິດທິພາບກ່ອນການປະມູນຕ້ອງໄດ້ມີການປະກາດໃຫ້ຫຼາຍບໍລິສັດເຂົ້າຮ່ວມການປະມູນ

4 ພາກສ່ວນທີ່ກ່ຽວຂຂ້ອງກັບການລົງທຶນຂອງລັດຕ້ອງໄດ້ລົງຕິດຕາມກວດກາໂຄງການລົງທຶນຂອງລັດແຕ່ຫົວທີ

2. ຂໍ້ສະເໜີທົ່ວໄປ

1 ກະຊວງແຜນການ ແລະ ການລົງທຶນຄວນກຳນົດລະອຽດ ກ່ຽວກັບວິທີການຄຸ້ມຄອງການລົງທຶນຂອງລັດຢູ ສປປ ລາວ ເພື່ອເປັນການສະກັດກັ້ນບໍ່ໃຫ້ເກີດມີໂຄງການນອກແຜນ ແລະ ຄວາມສ້າງນິຕິກຳທີ່ເປັນອັນສະເພາະກ່ຽວຂ້ອງກັບການປະມູນເຊັ່ນ ຖ້າໂຄງການໃດບໍ່ມີການປະມູນ ຫຼື ປະມູນແບບວົງແຄບ ລັດຖະບານຈະບໍ່ພິຈາລະນາຊຳລະໜີ້ສິນ ການ

ກໍານົດລັກສະນະນີ້ກໍ່ເພື່ອເປັນການບັງຄັບໃຫ້ບັນດາໂຄງການລົງທຶນຂອງລັດທຸກໂຄງການໄດ້ຮັບການປະມູນ.

2 ກະຊວງແຜນການ ແລະ ການລົງທຶນ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ ກະຊວງ ໂຍທາທິການ ແລະ ຂົນສົ່ງເພື່ອເພີ່ມທະວີຕິດຕາມກວດກາແຕ່ລະໄລຍະເພື່ອຮັບປະກັນໄດ້ເຖິງຂອດການຈັດຕັ້ງປະຕິບັດໂຄງການໃຫ້ມີປະສິດທິພາບ.

3 ເຈົ້າຂອງໂຄງການກໍ່ຄື ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈໍາປາສັກຕ້ອງຕິດຕາມ, ກວດກາ ຢ່າງໃກ້ຊິດຕິດແທດກັບຜູ້ຮັບເໝົາ ແລະ ປະຊາຊົນທີ່ຖືກຜົນກະທົບໂຄງການ ຮັບປະກັນໄດ້ຄວາມຖືກຕ້ອງ ແລະ ສິ່ງກີດຂວາງຕ່າງໆໃຫ້ໝົດໄປ ໂດຍບໍ່ກໍ່ໃຫ້ເກີດຜົນເສຍຫາຍມາສູ່ລັດ ແລະ ປະຊາຊົນ.

4 ສະເໜີໃຫ້ແຕ່ລະຂະແໜງການຂອງລັດທີ່ຮັບຜິດຊອບກ່ຽວກັບວຽກງານລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງມີການປະສານງານກັນຢ່າງກົມກຽວຮອບດ້ານ ແລະ ພາວະວິໄສເພື່ອຮັບປະກັນການປະຕິບັດການລົງທຶນຂອງລັດໃຫ້ໄດ້ຮັບໝາກຜົນ.

5 ສະເໜີໃຫ້ ກົມກວດກາ ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບອົງການກວດກາລັດຖະບານເພື່ອກວດກາຄືນບັນດາໂຄງການທີ່ມີມູນຄ່າສູງເພື່ອສະເໜີສະພາແຫ່ງຊາດພິຈາລະນາປະເມີນໂຄງການລົງທຶນໃໝ່ ແລະ ບັນຈຸເຂົ້າແຜນການລົງທຶນໃນແຕ່ລະສົກປີ.

6 ສະເໜີໃຫ້ຂະແໜງການເງິນປະຕິບັດລະບຽບການເງິນຢ່າງເຂັ້ມງວດກ່ຽວກັບງົບປະມານທີ່ໃຊ້ເຂົ້າໃນການລົງທຶນຂອງລັດໂດຍບໍ່ມີການເຮັດຜິດວິໄນການເງິນນໍາໃຊ້ເງິນຮ່ວງອື່ນມາຊໍາລະແທນ ເບິ່ງຄືນກ່ຽວກັບລະບຽບການຈັດຊື້-ຈັດຈ້າງ ຄວນປັບປຸງໃຫ້ເຂົ້າກັບສະພາບປັດຈຸບັນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

7 ຄວນໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ນິຕິກໍາທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃຫ້ບັນດາຂະແໜງການໄດ້ຮັບຮູ້ ແລະເຂົ້າໃຈແຈ້ງເຖິງເນື້ອໃນຕ່າງໆ ກໍາໄດ້ຫຼັກການ ເພື່ອຮັບປະກັນວຽກງານການລົງທຶນຂອງລັດໃຫ້ໄດ້ຮັບປະສິດທິຜົນ.

ສິ່ງທີ່ກ່າວມາຂ້າງເທິງເປັນຂໍ້ສະເໜີຂອງຜູ້ສຶກສາຄົ້ນຄວ້າ ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກເພື່ອຮັບປະກັນເຮັດໃຫ້ວຽກງານການລົງທຶນຂອງລັດຖືກຕ້ອງຕາມລະບຽບກົດໝາຍ ແລະ ມີຄວາມໂປ່ງໃສ.

# ເອກະສານອ້າງອີງ


ເອກະສານກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ສະບັບປີ 2016.

ລັດຖະທຳມະນູນແຫ່ງ ສປປ ລາວ (ສະບັບປັບປຸງ), ປີ 2015.

ກົດໝາຍວ່າດ້ວຍທາງຫຼວງ (ສະບັບປັບປຸງ), ປີ 2016.

ກົດໝາຍວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ), ປີ 2015.

ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ), ປີ 2015.

ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ), ປີ 2015.

ກົດໝາຍວ່າດ້ວຍການກວດສອບແຫ່ງລັດ, ສະບັບປີ 2012.

ກົດໝາຍວ່າດ້ວຍການກໍ່ສ້າງ ສະບັບປີ 2009.

ກົດໝາຍວ່າດ້ວຍການກວດກາລັດ, ສະບັບປີ 2007.

ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍການຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ, ສະບັບເລກທີ 01/ລບ, ລົງວັນທີ 6 ມັງກອນ 2015.

ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ການຊ່ວຍເຫຼືອທາງການເພື່ອການພັດທະນາ, ສະບັບປີ 2009.

ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບປີ 2004.

ແຜນພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ VIII (ປີ 2016-2020).

ແຜນການລົງທຶນຂອງລັດປະຈຳປີ 2015-2016.

ແຜນພັດທະນາເສດຖະກິດສັງຄົມຂອງແຂວງຈຳປາສັກ 5ປີຄັ້ງທີ VIII (ປີ 2016-2020).

ສາລະບານບັນຊີ-ງົບປະມານແຫ່ງລັດ, ສະບັບປີ 2013.

ຄູ່ມືການອອກແບບເສັ້ນທາງ ກະຊວງໂຍທາທິການ ແລະ ຂົນສົ່ງ, ປີ 1996

ປື້ມສັງລວມຂໍ້ມູນການພັດທະນາເສດຖະກິດ-ສັງຄົມໄລຍະ 40ປີ ຂອງ ສປປ ລາວ, ປີ2015.

ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ 5ປີ ຄັ້ງທີ VII (ປີ 2011-2015)

ສັນຍາລົງທຶນກໍ່ສ້າງ ແລະ ຊຳລະສະສາງ ລະຫວ່າງລັດຖະບານແຫ່ງ ສປປ ລາວ ຕາງໜ້າໂດຍ ແຂວງຈຳປາສັກ ແລະ ກຸ່ມບໍລິສັດຕັງຈຳເລີນ.

ເອກະສານກ່ຽວກັບການສຳຫຼວດອອກແບບຂະຫຍາຍທາງເທດສະບານເມືອງປາກເຊ ແຂວງຈຳປາສັກ.

ຄູ່ມືການຄຸ້ມຄອງການລົງທຶນຂອງລັດ ກົມປະເມີນຜົນ ກະຊວງ ແຜນການ ແລະ ການລົງທຶນ

ປື້ມສະຖິຕິການສຳຫຼວດເສດຖະກິດແຫ່ງຊາດ ສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ.

ປື້ມແຜນການລົງທຶນຂອງລັດປະຈຳສົກປີ 2015-2016 ຂອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ.

ອາລຸນນີ ພົງທະດີ, ຜົນກະທົບຂອງການສ້າງທາງໃນເຂດເທດສະບານທີ່ມີຕໍ່ເສດຖະກິດ ສັງຄົມ ແລະ ສິ່ງແວດລ້ອມໃນເຂດເທດສະບານແຂວງວຽງຈັນ ກໍລະນີສຶກສາ ເມືອງໂພນໂຮງ, ເມືອງວຽງຄຳ ແລະ ເມືອງແກ້ວອຸດົມ ແຂວງວຽງຈັນ, ວິທະຍານິພົນປະລິນຍາໂທ, ສາຂາເສດຖະສາດພັດທະນາ ແລະ ການວາງແຜນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ສະບັບປີ 2014.

ພຸດທະສັກ ຮຸ່ງເຮືອງ, ຜົນກະທົບຂອງໂຄງການສ້າງເສັ້ນທາງ ທີ່ມີຜົນກະທົບຕໍ່ເສດຖະກິດຂອງບ້ານໜອງບົວທອງ, ວິທະຍານິພົນປະລິນຍາໂທ, ສາຂາເສດຖະສາດພັດທະນາ ແລະ ການວາງແຜນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ສະບັບປີ 2012.

ປະທຸມທິບ ຄູນທາລີວົງ, ຜົນກະທົບຂອງການລົງທຶນຂອງພາກລັດຕໍ່ກັບການຂະຫຍາຍຕົວຂອງເສດຖະກິດຢູ່ ສປປ ລາວ, ສາຂສເສດຖະສາດເງິນຕາ ແລະ ການເງິນພາກລັດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ, ສະບັບປີ 2012.

ບົດສຳພາດ ທ່ານຮອງຫົວໜ້າພະແນກການເງິນ ແຂວງຈຳປາສັກ ຄັ້ງວັນທີ 15 ທັນວາ 2017.

ບົດສຳພາດ ທ່ານ ຮອງຫົວໜ້າພະແນກປະເມີນຜົນການລົງທຶນຂອງລັດຂັ້ນທ້ອງຖິ່ນ ກົມປະເມີນຜົນ ກະຊວງແຜນການ ແລະ ການລົງທຶນ ຄັ້ງວັນທີ 5 ທັນວາ 2017.

ບົດສຳພາດ ທ່ານ ຫົວໜ້າ ຂະແໜງແຜນການ ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ ຄັ້ງວັນທີ 12 ທັນວາ 2017.

ບົດສຳພາດ ທ່ານ ຫົວໜ້າຂະແໜງຄຸ້ມຄອງທາງບົກ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ ຄັ້ງວັນທີ 25 ທັນວາ 2017.

ບົດສຳພາດ ທ່ານ  ຮອງຜູ້ອຳນວຍການບໍລິສັດຮັບເໝົາກໍ່ສ້າງ ຄັ້ງວັນທີ 12 ທັນວາ 2017.

# ເອກະສານຊ້ອນທ້າຍ

1 ແບສອບຖາມ

2 ແບບສຳພາດ

# ແບບສອບຖາມເກັບກຳຂໍ້ມູນ ວິທະຍານິພົນເລື່ອງ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ.

ຂ້າພະເຈົ້າ ທ້າວ ໄພວັນ ຊຸນມາລາ ນັກສຶກສາປະລິຍາໂທນິຕິສາດ ສາຂາວິຊາກົດໝາຍທຸລະກິດ ຮຸ່ນI ຂໍຄວາມກະລຸນາຈາກທ່ານຜູ້ຕອບແບບສອບຖາມຊ່ວຍໝາຍຖືກ(✓) ໃສ່ບ່ອນທີ່ກຳນົດໄວ້ທີ່ທ່ານເຫັນວ່າມີຄວາມເປັນຈິງ ເພື່ອເປັນບ່ອນອີງໃຫ້ຂ້າພະເຈົ້າໃນການສຶກສາຄົ້ນຄວ້າຫົວຂໍ້ທີ່ກ່າວມາ.

I. ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

1. ເພດ

☐ ຊາຍ ☐ຍິງ

2. ອາຍຸຂອງຜູ້ຕອບແບບສອບຖາມ

☐ແຕ່ 18-25 ປີ

☐ແຕ່ 26-35 ປີ

☐ແຕ່ 36-45 ປີ

☐ແຕ່ 46-55 ປີ

☐ແຕ່ 56 ປີ ຂຶ້ນໄປ

3. ລະດັບການສຶກສາ

☐ຊັ້ນສູງ

☐ປະລິນຍາຕີ

☐ປະລິນຍາໂທ

☐ປະລິນຍາເອກ

☐ອື່ນໆ..........

4. ສະຖານທີ່ຜູ້ຕອບແບບສອບຖາມສັງກັດ ຫຼື ອາໄສຢູ່

□ກະຊວງແຜນການ ແລະ ການລົງທຶນ

□ພະແນກແຜນການ ແລະ ການລົງທຶນ ແຂວງຈຳປາສັກ

□ພະແນກໂຍທາທິການ ແລະ ຂົນສົ່ງແຂວງຈຳປາສັກ

□ພະແນກການເງິນ ແຂວງຈຳປາສັກ

□ບໍລິສັດຮັບເໝົາກໍ່ສ້າງ

5. ທ່ານມີປະສົບການເຮັດວຽກບ່ອນຕົນສັງກັດຈັກປີ

□ຕໍ່າກວ່າ 2ປີ □3-5 ປີ

□6-10 ປີ □11-20 ປີ

□ຫຼາຍກວ່າ 21ປີ

6. ຕຳແໜ່ງຜູ້ຕອບແບບສອບຖາມ

□ຄະນະກົມ

□ຄະນະພະແນກ

□ຫົວໜ້າຂະແໜງ

□ວິຊາການ

□ນັກທຸລະກິດ

II. ຄໍາຖາມແຕ່ລະຂໍ້ທີ່ກ່ຽວຂ້ອງກັບວິທະຍານິພົນເລື່ອງ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ຂໍຄວາມກະລຸນາຜູ້ຕອບແບບສອບຖາມ ຈົ່ງຊ່ວຍໝາຍ (✓)ໃສ່ບ່ອນທີ່ກຳນົດໄວ້ທີ່ທ່ານເຫັນວ່າມີຄວາມເປັນຈິງຫຼາຍທີ່ສຸດ.

- ຄະແນນ1 ໝາຍເຖິງເຫັນດີລະດັບຫຼາຍສຸດ
- ຄະແນນ2 ໝາຍເຖິງເຫັນດີລະດັບຫຼາຍ
- ຄະແນນ3 ໝາຍເຖິງເຫັນດີລະດັບປານກາງ
- ຄະແນນ4 ໝາຍເຖິງເຫັນດີລະດັບໜ້ອຍ
- ຄະແນນ5 ໝາຍເຖິງເຫັນດີລະດັບໜ້ອຍສຸດ

| ລ/ດ | ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊ ແຂວງຈຳປາສັກ | ລະດັບຄວາມຄິດເຫັນ | | | | |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| **ຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊ ແຂວງຈຳປາສັກ** | | | | | | |
| 1 | ຫຼັກການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງທ່ານຄິດວ່າມີຄວາມພຽບພໍ ທ່ານເຫັນດີໃນລະດັບໃດ? | | | | | |
| 2 | ທ່ານຄິດວ່າຄວນປັບປຸງກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໃນລະດັບໃດ? | | | | | |
| 3 | ທ່ານຄິດວ່າກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບ ປຸງປີ 2015 ກຳນົດຂັ້ນຕອນການລົງທຶນຂອງລັດໄວ້ລະອຽດແລ້ວໃນລະດັບໃດ? | | | | | |
| 4 | ທ່ານຄິດວ່າຄວນສ້າງນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ເພີ່ມຕື່ມໃນລະດັບໃດ? | | | | | |
| **ບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊ ແຂວງຈຳປາສັກ** | | | | | | |
| **1** | **ບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການປະມູນໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊ ແຂວງຈຳປາສັກ** | | | | | |
| | 1) ທ່ານຄິດວ່າກ່ອນການປະມູນກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ໄດ້ມີການປະກາດໃຫ້ຫຼາຍບໍລິສັດເຂົ້າມາປະມູນໃນລະດັບໃດ? | | | | | |
| | 2) ທ່ານຄິດວ່າການປະມູນໄດ້ເປີດກວ້າງໃຫ້ແກ່ຫຼາຍບໍລິສັດເຂົ້າຮ່ວມເພື່ອຮັບເໝົາໂຄງການ ທ່ານເຫັນດີໃນລະດັບໃດ? | | | | | |
| | 3) ທ່ານຄິດວ່າບໍລິສັດທີ່ມີເງື່ອນໄຂທີ່ຈະຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຈຳນວນພຽງພໍແລ້ວ ທ່ານເຫັນດີລະດັບໃດ? | | | | | |
| | 4) ທ່ານຄິດວ່າຮູບການປະມູນແບບເປີດກວ້າງເປັນຮູບການທີ່ ເໝາະສົມສຸດໃນການປະມູນຫາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ທ່ານເຫັນດີລະດັບໃດ? | | | | | |
| | 5) ທ່ານຄິດວ່າການປະມູນແບບການເຈລະຈາໂດຍກົງເປັນການປະມູນທີ່ເໝາະສົມສຸດໃນຮູບການການປະມູນເອົາບໍລິສັດທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ທ່ານເຫັນດີລະດັບໃດ? | | | | | |
| | 6) ທ່ານຄິດວ່າການປະມູນແບບແບບວົງແຄບເປັນການປະມູນທີ່ເໝາະສົມທີ່ສຸດສຳລັບການປະມູນຫາບໍລິສັດຜູ້ທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ທ່ານເຫັນດີລະດັບໃດ? | | | | | |

| | | | | | | |
|---|---|---|---|---|---|---|
| | 7) ທ່ານຄິດວ່າການປະມູນແບບສົມທຽບລາຄາເປັນການປະມູນທີ່ເໝາະສົມສຸດໃນການປະມູນເອົາຜູ້ທີ່ຈະມາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ທ່ານເຫັນດີລະດັບໃດ? | | | | | |
| | 8) ທ່ານຄິດວ່າຂັ້ນຕອນການປະເມີນ ຂອງການປະມູນເອົາບໍລິສັດຮັບເໝົາກໍ່ສ້າງແມ່ນດຳເນີນຖືກຕ້ອງຕາມລະບຽບການຢ່າງເຄັ່ງຄັດ ທ່ານເຫັນດີລະດັບໃດ? | | | | | |
| | 9) ທ່ານຄິດວ່າການປະມູນກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໄດ້ມີຫຼາຍພາກສ່ວນເຂົ້າຮ່ວມເປັນກຳມະການ ທ່ານເຫັນດີລະດັບໃດ? | | | | | |
| | 10) ທ່ານຄິດວ່າຄວນປັບປຸງລະບຽບກ່ຽວກັບຂັ້ນຕອນການປະມູນເພື່ອໃຫ້ມີຄວາມສະດວກ ແລະ ຊັດເຈນຂຶ້ນຕື່ມ ທ່ານເຫັນດີໃນລະດັບໃດ? | | | | | |
| | 11) ທ່ານຄິດວ່າການປະມູນເອົາບໍລິສັດຮັບເໝົາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໄດ້ປະຕິບັດລະບຽບກົດໝາຍກຳນົດແລ້ວ ທ່ານເຫັນດີລະດັບໃດ? | | | | | |
| **2** | **ບັນຫາທີ່ເກີດຂຶ້ນຈາກການສ້າງສັນຍາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | |
| | 1) ທ່ານຄິດວ່າການສ້າງສັນຍາສຳຫຼວດອອກແບບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຄວາມຮັດກຸມສອດຄ່ອງກັບລະບຽບການໃນລະດັບໃດ? | | | | | |
| | 2) ທ່ານຄິດວ່າການສ້າງສັນຍາຮັບເໝົາກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊມີຄວາມຮັດກຸມໃນລະດັບໃດ? | | | | | |
| | 3) ທ່ານຄິດວ່າສັນຍາສຳຫຼວດ-ອອກແບບ ແລະ ຄຸ້ມຄອງການກໍ່ສ້າງມີຄວາມສຳຄັນໃນລະດັບໃດ? | | | | | |
| | 4) ທ່ານຄິດວ່າບັນຫາທີ່ການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກບໍ່ໄດ້ຮັບປະສິດທິຜົນແມ່ນບໍ່ເກີດຂຶ້ນຈາກສັນຍາບໍ່ຮັດກຸມ ທ່ານເຫັນດີໃນລະດັບໃດ? | | | | | |
| | 5) ທ່ານຄິດວ່າສັນຍາທີ່ເຮັດຜ່ານມາກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກໄດ້ກຳນົດມາດຕະຖານເຕັກນິກລະອຽດແລ້ວ ທ່ານເຫັນດີໃນລະດັບໃດ? | | | | | |
| | 6) ທ່ານຄິດວ່າການສ້າງສັນຍາກ່ຽວກັບກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກຄວນກຳນົດການກວດກາໂຄງການໄວ້ ທ່ານເຫັນດີໃນລະດັບໃດ? | | | | | |
| | 7) ທ່ານຄິດວ່າທັງສອງຝ່າຍໄດ້ປະຕິບັດສັນຍາທີ່ໄດ້ກຳນົດໄວ້ແລ້ວ ທ່ານເຫັນດີລະດັບໃດ? | | | | | |
| **3** | **ບັນຫາທີ່ເກີດຈາກການດຳເນີນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | |
| | 1) ທ່ານຄິດວ່າການດຳເນີນການກໍ່ສ້າງເສັ້ນທາງມີໄລຍະເວລາທີ່ສັ້ນເກີນໄປ ທ່ານເຫັນດີໃນລະດັບໃດ? | | | | | |
| | 2) ທ່ານຄິດວ່າການດຳເນີນການກໍ່ສ້າງເສັ້ນທາງໄດ້ເປັນໄປຕາມມາດຕະຖານເຕັກນິກແລ້ວ ທ່ານເຫັນດີໃນລະດັບໃດ? | | | | | |

| | | | | | | |
|---|---|---|---|---|---|---|
| | 3) ທ່ານຄິດວ່າແຮງງານ ແລະ ອຸປະກອນທີ່ໃຊ້ເຂົ້າໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ ແມ່ນມີພ້ອມ ທ່ານເຫັນດີໃນລະດັບໃດ? | | | | | |
| | 4) ທ່ານຄິດວ່າການກໍ່ສ້າງເສັ້ນທາງບໍ່ມີປະສິດທິພາບເປັນຍ້ອນການດຳເນີນການກໍ່ສ້າງ ທ່ານເຫັນດີໃນລະດັບໃດ? | | | | | |
| | 5) ທ່ານຄິດວ່າວິຊາການຜູ້ຊຳນານງານທີ່ຈະມາດຳເນີນການກໍ່ສ້າງມີຄວາມພຽງພໍໃນການດຳເນີນການກໍ່ສ້າງ ທ່ານເຫັນດີໃນລະດັບໃດ? | | | | | |
| **4** | **ບັນຫາທີ່ເກີດຂຶ້ນຈາກການຕິດຕາມກວດກາການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | |
| | 1) ທ່ານຄິດວ່າການຕິດຕາມກວດກາເປັນບັນຫາທີ່ສຳຄັນໃນການກໍ່ສ້າງເສັ້ນທາງໃນຕົວຕົວເມືອງປາກເຊແຂວງຈຳປາສັກ ທ່ານເຫັນດີລະດັບໃດ? | | | | | |
| | 2) ທ່ານຄິດວ່າການຕິດຕາມກວດກາໄລຍະເລີມຕົ້ນໂຄງການມີຄວາມສຳຄັນຫຼາຍ ທ່ານເຫັນດີລະດັບໃດ ? | | | | | |
| | 3) ທ່ານຄິດວ່າທີ່ຜ່ານມາການຕິດຕາມກວດກາໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງແມ່ນຍັງປະຕິບັດບໍ່ໄດ້ທົ່ວເຖິງແລ້ວ ທ່ານເຫັນດີລະດັບໃດ? | | | | | |
| | 4) ທ່ານຄິດວ່າການຕິດຕາມກວດກາບໍ່ໄດ້ຮັບໝາກຜົນເປັນຍ້ອນວັນເວລາທີ່ກຳນົດໃຫ້ສັ້ນເກີນໄປ ທ່ານເຫັນດີລະດັບໃດ? | | | | | |
| | 5) ທ່ານຄິດວ່າປັດຈຸບັນວິຊາການທີ່ລົງໄປຕິດຕາມກວດກາໂຄງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາມີຄວາມພຽງພໍກັບຄວາມຕ້ອງການແລ້ວ ທ່ານເຫັນດີໃນລະດັບໃດ? | | | | | |
| | 6) ທ່ານຄິດວ່າຂັ້ນຕອນການຕິດຕາມກວດກາການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຫຼາຍຂັ້ນຕອນເກີນໄປ ທ່ານເຫັນດີໃນລະດັບໃດ? | | | | | |
| | 7) ທ່ານຄິດວ່າຄວນປັບປຸງຂັ້ນຕອນການຕິດຕາມກວດກາໃຫ້ສັ້ນລົງ ທ່ານເຫັນດີໃນລະດັບໃດ? | | | | | |
| | 8) ທ່ານຄິດວ່າການລົງຕິດຕາມກວດກາມາດຕະຖານເຕັກນິກຂອງການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊຖືກຕ້ອງຕາມມາດຕະຖານທີ່ໄດ້ກຳນົດແລ້ວ ທ່ານເຫັນດີລະດັບໃດ? | | | | | |
| | 9) ທ່ານຄິດວ່າພາຍຫຼັງທີ່ມີການກວດກາແລ້ວຜູ້ປະຕິບັດໂຄການໄດ້ປະຕິບັດຜົນການກວດກາໄດ້ດີແລ້ວ ທ່ານເຫັນດີລະດັບໃດ? | | | | | |
| | 10) ທ່ານຄິດວ່າການທີ່ຜູ້ປະຕິບັດໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊແຂວງຈຳປາສັກບໍ່ປະຕິບັດຕາມຜົນການກວດກາເປັນສາເຫດເຮັດໃຫ້ໂຄງການບໍ່ມີປະສິດທິຜົນ ທ່ານເຫັນດີລະດັບໃດ? | | | | | |
| **5** | **ບັນຫາທີ່ເກີດຈາກການມອບຮັບ ແລະ ການນຳໃຊ້ໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | |

| | | | | | | |
|---|---|---|---|---|---|---|
| | 1) ທ່ານຄິດວ່າການມອບຮັບໂຄງການທີ່ປະຕິບັດສຳເລັດແລ້ວຄວນມອບຮັບພາຍຫຼັງທົດລອງໃຊ້ໂຄງການໄປໄລຍະໃດໜຶ່ງ ທ່ານເຫັນດີໃນລະດັບໃດ? | | | | | |
| | 2) ທ່ານຄິດວ່າການກວດກາມາດຕະຖານເຕັກນິກກ່ອນການມອບຮັບໂຄງການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຄວນເປັນສິ່ງທີ່ຕ້ອງປະຕິບັດກ່ອນການມອບຮັບໂຄງການ ທ່ານເຫັນດີໃນລະດັບໃດ? | | | | | |
| | 3) ທ່ານຄິດວ່າໄລຍະເວລາໃນການປະເມີນຜົນໂຄງການລົງ ທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກກຳນົດ2-5ປີ ຕາມກົດໝາຍວ່າດ້ວຍລົງທຶນຂອງລັດສະບັບປີ 2015 ມີຄວາມເໝາະສົມ ທ່ານເຫັນດີໃນລະດັບໃດ? | | | | | |
| | 4) ທ່ານຄິດວ່າພາຍຫຼັງນຳໃຊ້ໂຄງການ2-5 ປີແລ້ວມີການປັບປຸງໂຄງການແມ່ນຍ້ອນທາງບໍ່ໄດ້ມາດຕະຖານ ທ່ານເຫັນດີໃນລະດັບໃດ? | | | | | |
| | 5) ທ່ານຄິດວ່າຄວນສ້າງນິຕິກຳລຸ່ມກົດໝາຍກ່ຽວກັບພາຍຫຼັງການມອບຮັບໂຄງການກໍ່ສ້າງ ທ່ານເຫັນດີໃນລະດັບໃດ? | | | | | |
| **6** | **ບັນຫາທີ່ເກີດຈາກການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການລົງທຶນອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | |
| | 1) ທ່ານຄິດວ່າວິທີການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຂອງລັດທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການລົງທຶນຂອງລັດມີຄວາມເໝາະສົມແລ້ວ ທ່ານເຫັນດີລະດັບໃດ? | | | | | |
| | 2) ທ່ານຄິດວ່າການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂດ້ວຍການປະນີປານອມ ຫຼື ການໄກ່ເກ່ຍ ທ່ານເຫັນດີລະດັບໃດ? | | | | | |
| | 3) ທ່ານຄິດວ່າການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂທາງບໍລິຫານ ທ່ານເຫັນດີລະດັບໃດ? | | | | | |
| | 4) ທ່ານຄິດວ່າການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທ່ານເຫັນດີລະດັບໃດ? | | | | | |
| | 5) ທ່ານຄິດວ່າການລົງທຶນຂອງລັດເມື່ອເກີດມີຂໍ້ຂັດແຍ່ງຄວນແກ້ໄຂໂດຍການຮ້ອງຟ້ອງຕໍ່ສານປະຊາຊົນ ທ່ານເຫັນດີລະດັບໃດ? | | | | | |
| **ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | | |
| **1** | **ຂໍ້ສະດວກໃນການຈັດຕັ້ງປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກ** | | | | | |
| | 1) ທ່ານຄິດວ່າການສະໜອງງົບປະມານຕາມການຈັດສັນງົບປະມານຂອງລັດຖະບານເປັນຂໍ້ສະດວກໃນການປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງ ທ່ານເຫັນດີໃນລະດັບໃດ? | | | | | |

| | | | | | | |
|---|---|---|---|---|---|---|
| | 2) ທ່ານຄິດວ່າໂຄງການກໍ່ສ້າງດັ່ງກ່າວຈັດຢູ່ໃນບູລິມະສິດຂອງລັດຖະບານຈຶ່ງເປັນຂໍ້ສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດໄດ້ດໍາເນີນໄປຢ່າງວອງໄວ ທ່ານເຫັນດີໃນລະດັບໃດ? | | | | | |
| | 3) ທ່ານຄິດວ່າການກໍ່ສ້າງເສັ້ນທາງດັ່ງກ່າວເປັນການພັດທະນາແບບຍືນຍົງຕາມທິດການພັດທະນາແບບຍືນຍົງ ແລະ ສີຂຽວ ຈຶ່ງເຮັດໃຫ້ລັດຖະບານ ຈັດໂຄງການດັ່ງກ່າວເປັນບູລິມະສິດອັນດັບໜຶ່ງ ທ່ານເຫັນດີໃນລະດັບໃດ? | | | | | |
| | 4) ທ່ານຄິດວ່າຍ້ອນປະຊາຊົນໃຫ້ການຮ່ວມມືເປັນຢ່າງດີໃນການອໍານວຍຄວາມສະດວກເຮັດໃຫ້ການປະຕິບັດການລົງທຶນຂອງລັດມີຂໍ້ສະດວກ ທ່ານເຫັນດີໃນລະດັບໃດ? | | | | | |
| | 5) ທ່ານຄິດວ່າຜູ້ປະຕິບັດໂຄງການເອົາໃຈໃສ່ໃນການປະຕິບັດໂຄງການກໍ່ສ້າງຕາມໜ້າທີ່ ທີ່ຖືກມອບໝາຍໃຫ້ຈຶ່ງເຮັດໃຫ້ການລົງທຶນຂອງລັດດໍາເນີນໄປຢ່າງສະດວກວ່ອງໄວ ທ່ານເຫັນດີໃນລະດັບໃດ? | | | | | |
| | 6) ທ່ານຄິດວ່າການເອົາໃຈໃສ່ຂອງຄະນະນໍາຂອງແຂວງກໍ່ຄືລັດຖະເປັນສາເຫດເຮັດໃຫ້ການລົງທຶນຂອງລັດດໍາເນີນໄປຢ່າງສະດວກ ທ່ານເຫັນດີໃນລະດັບໃດ? | | | | | |
| **2** | **ຂໍ້ຫຍຸ້ງຍາກໃນການປະຕິບັດການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ** | | | | | |
| | 1) ທ່ານຄິດວ່າຍ້ອນສະພາບດິນຟ້າອາກາດບໍ່ອໍານວຍຄວາມສະດວກເກີດພະຍຸລົມຝົນຈຶ່ງເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ທ່ານເຫັນດີໃນລະດັບໃດ? | | | | | |
| | 2) ທ່ານຄິດວ່າຍ້ອນປະຊາຊົນບາງພື້ນທີ່ບໍ່ໃຫ້ການຮ່ວມມືຈຶ່ງເຮັດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນ ທາງພົບຄວາມຫຍຸ້ງຍາກ ທ່ານເຫັນດີໃນລະດັບໃດ? | | | | | |
| | 3) ທ່ານຄິດວ່າຍ້ອນການປະສານງານລະຫວ່າງຂະແໜງການດ້ວຍກັນຍັງຂາດການປະສານງານທີ່ລະອຽດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ທ່ານເຫັນດີໃນລະດັບໃດ? | | | | | |
| | 4) ທ່ານຄິດວ່າຍ້ອນການການປະຕິບັດວິໄນການເງິນຍັງບໍ່ເຂັ້ມງວດຈຶ່ງເປັນເຫດໃຫ້ການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງພົບຄວາມຫຍຸ້ງຍາກ ທ່ານເຫັນດີໃນລະດັບໃດ? | | | | | |
| | 5) ທ່ານຄິດວ່າຍ້ອນຄວາມເຂົ້າໃຈແຈ້ງກ່ຽວກັບກົດໝາຍວ່າດ້ວຍການລົງທຶນຂອງລັດຂອງບັນດາຂະແໜງການທີ່ຮັບຜິດຊອບການລົງທຶນຂອງລັດຍັງບໍ່ທັນເລິກເຊິ່ງຈຶ່ງເຮັດໃຫ້ການລົງທຶນດັ່ງກ່າວພົບຄວາມຫຍຸ້ງຍາກ ທ່ານເຫັນດີໃນລະດັບໃດ? | | | | | |
| **3** | **ວິທີແກ້ຂັ້ນບັນຫາທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກ** | | | | | |
| | 1) ທ່ານຄິດວ່າການເຜີຍແຜ່ກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃຫ້ບັນດາຂະແໜງການຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເປັນວິທີແກ້ໄຂທີ່ດີທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |
| | 2) ທ່ານຄິດວ່າການປະມູນຄວນປະຕິບັດຕາມລະບຽບການຢ່າງເຄັ່ງຄັດເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |

| | | | | | | |
|---|---|---|---|---|---|---|
| | 3) ທ່ານຄິດວ່າກ່ອນການະມູນຄວນປະກາດເພື່ອຊອກຫາບໍລິສັດທີ່ມີເງື່ອນໄຂເຂົ້າມາຈັດຕັ້ງປະຕິບັດໂຄງການ ເພື່ອຫຼີກລ້ຽງບັນຫາທີ່ເກີດຂຶ້ນເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |
| | 4) ທ່ານຄິດວ່າຄວນເພີ່ມທະວີວຽກງານຕິດຕາມກວດກາໃຫ້ສູງຂຶ້ນເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |
| | 5) ທ່ານຄິດວ່າຕ້ອງຍົກສູງສະຕິໃຫ້ວິຊາການທີ່ເຮັດວຽກກວດກາເພື່ອມີຫຼັກໝັ້ນ ແລະ ມີຄວາມອຸ່ນອຽນທຸນຖ່ຽງເປັນວິທີແກ້ໄຂບັນຫາທີ່ດີສຸດ ທ່ານເຫັນດີລະດັບໃດ? | | | | | |
| | 6) ທ່ານຄິດວ່າທຸກໂຄງການລົງທຶນຂອງລັດກ່ຽວກັບການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊຄວນໄດ້ຮັບການຕິດຕາມກວດກາແຕ່ຫົວທີເປັນວິທີແກ້ໄຂບັນຫາທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |
| | 7) ທ່ານຄິດວ່າການປະຕິບັດວິໄນການເງິນຢ່າງເຄັ່ງຄັດເປັນວິທີແກ້ໄຂບັນຫາທີ່ເກີດຈາກການລົງທຶນຂອງລັດ ທ່ານເຫັນດີລະດັບໃດ? | | | | | |
| | 8) ທ່ານຄິດວ່າປະຕິບັດວິໄນຕໍ່ຜູ້ເຮັດຜິດວິໄນການເງິນ ເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |
| | 9) ທ່ານຄິດວ່າການປະຕິບັດວິໄນຕໍ່ຜູ້ປະເມີນໂຄງການທີ່ມີມູນຄ່າສູງເກີນຫົວໜ່ວຍລາຄາກາງ ເປັນວິທີແກ້ໄຂບັນຫາທີ່ດີທີ່ສຸດ ທ່ານເຫັນດີລະດັບໃດ? | | | | | |

III. ທ່ານຄິດວ່າກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງ ປີ2015 ຄວນປັບປຸງ ບັນຫາໃດຕື່ມອີກ?

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

.........................................................................................................................

ຄຳຕອບທີ່ທ່ານຕອບຈະເປັນການໃຫ້ຂໍ້ມູນອັນເປັນປະໂຫຍດ ສຳລັບການສຶກສາຄົ້ນຄວ້າ ວິທະຍານິພົນລະດັບປະລິນຍາໂທຂອງຂ້າພະເຈົ້າ ໂດຍຂ້າພະເຈົ້າຈະນຳໃຊ້ຂໍ້ມູນດັ່ງກ່າວນີ້ເຂົ້າໃນການສຶກສາຄົ້ນຄວ້າ ແລະສັນຍາວ່າຈະເກັບຮັກສາເປັນຄວາມລັບ ເພື່ອກຽດສັກສີ ແລະ ຊື່ສຽງຂອງທ່ານ ທີ່ໃຫ້ຂໍ້ມູນ.

ທ້າຍສຸດນີ້ຂໍໃຫ້ທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີຜົນສຳເລັດໃນໜ້າທີ່ການງານ.

**ຂໍຂອບໃຈ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລແຫ່ງຊາດ

ຄະນະນິຕິສາດ ແລະ ລັດຖະສາດ

## ຄໍາຖາມສໍາພາດ

## ຫົວຂໍ້: ການລົງທຶນຂອງລັດ ໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊ ແຂວງຈໍາປາສັກ

ຊື່ ແລະ ນາມສະກຸນ...........................................................................................................

ຕໍາແໜ່ງ......................................................................................................................

ວັນທີສໍາພາດ................................................................................................................

ໃຫ້ທ່ານຂຽນທັດສະນະຕາມຄວາມຈິງກ່ຽວກັບ ການລົງທຶນຂອງລັດ ສຶກສາການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈໍາປາສັກໃສ່ບ່ອນ (..........) ຕາມແຕ່ລະຫົວຂໍ້ດັ່ງລຸ່ມນີ້:

1. ທ່ານຄິດວ່າ ຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງທີ່ມີຢູ່ມີຄວາມເໝາະສົມ ຫຼື ສອດຄ່ອງແນວໃດ?

   ...............................................................................................................

   ...............................................................................................................

   ...............................................................................................................

   ...............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

2. ທ່ານຄິດວ່າ ບັນຫາທີ່ເກີດຂຶ້ນຈາກຂັ້ນຕອນການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງໃນຕົວເມືອງປາກເຊແຂວງຈຳປາສັກມີຄືແນວໃດ?

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

.............................................................................................................

3. ທ່ານຄິດວ່າ ຂໍ້ສະດວກ, ຂໍ້ຫຍຸ້ງຍາກທີ່ເກີດຂຶ້ນຈາກການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊ ແຂວງຈຳປາສັກມີຫຍັງແນ່?

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

4. ເພື່ອຢາກເຮັດໃຫ້ວຽກງານການລົງທຶນຂອງລັດໃນການກໍ່ສ້າງເສັ້ນທາງຢູ່ຕົວເມືອງປາກເຊ ແຂວງຈຳປາສັກໄດ້ຮັບປະສິດທິຜົນທ່ານຄິດວ່າຄວນເຮັດແນວໃດ?

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

ຄຳຕອບທີ່ທ່ານຕອບຈະເປັນການໃຫ້ຂໍ້ມູນອັນເປັນປະໂຫຍດ ສຳລັບການສຶກສາຄົ້ນຄວ້າວິທະຍານິພົນ ລະດັບປະລິນຍາໂທຂອງຂ້າພະເຈົ້າ ໂດຍຂ້າພະເຈົ້າຈະນຳໃຊ້ຂໍ້ມູນດັ່ງກ່າວນີ້ເຂົ້າໃນການສຶກສາຄົ້ນຄວ້າ ແລະ ສັນຍາວ່າຈະເກັບຮັກສາເປັນຄວາມລັບ ເພື່ອກຽດສັກສີ ແລະ ຊື່ສຽງຂອງທ່ານ ທີ່ໃຫ້ຂໍ້ມູນ.

ທ້າຍສຸດນີ້ຂໍໃຫ້ທ່ານ ຈົ່ງມີພາລານາໄມທີ່ສົມບູນ, ມີຜົນສຳເລັດໃນໜ້າທີ່ການງານ.

**ຂໍຂອບໃຈ**

# ຊີວະປະຫວັດຫຍໍ້ຜູ້ສຶກສາ



- ຊື່ ແລະ ນາມສະກຸນ: ທ້າວ ໄພວັນ ຊຸນມາລາ
- ເກີດເມື່ອວັນທີ: 17 ມີນາ 1993
- ເກີດທີ່: ບ້ານ ແກ້ວສຳພັນ, ເມືອງປາກເຊ ແຂວງຈຳປາສັກ
- ປະຈຸບັນຢູ່ບ້ານ: ບ້ານດອນກອຍ, ເມືອງສີສັດຕະນາກ ແຂວງນະຄອນຫຼວງວຽງຈັນ
- ເບີໂທ: 02023453738
- Email: Eunglt_903@yahoo.com

## ປະຫວັດການສຶກສາ

- ປີ 1999–2004 ສຶກສາທີ່ໂຮງຮຽນປະຖົມສົມບູນສາທິດ, ເມືອງປາກເຊ ແຂວງຈຳປາສັກ
- ປີ 2005–2007 ສຶກສາທີ່ໂຮງຮຽນມັດທະຍົມສາທິດ, ເມືອງປາກເຊແຂວງຈຳປາສັກ
- ປີ 2008–2011 ສຶກສາທີ່ໂຮງຮຽນມັດທະຍົມຕອນປາຍພອນສະຫວັນມິດຕະພາບ ຈຳປາສັກ-ເລີ່ມດົງ, ເມືອງປາກເຊ, ແຂວງຈຳປາສັກ
- ປີ 2011–2015 ສຶກສາປະລິນຍາຕີ ທີ່ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດ ແລະ ລັດຖະສາດພາກວິຊາກົດໝາຍທຸລະກິດ
- ປີ 2016-2017 ສຶກສາ ປະລິນຍາໂທ ທີ່ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດ ແລະ ລັດຖະສາດ ສາຂາວິຊາ ກົດໝາຍທຸລະກິດ

## ປະຫວັດການເຮັດວຽກ

- ປີ 2016-ປັດຈຸບັນ: ເຮັດວຽກຢູ່ ກົມກວດກາ ກະຊວງແຜນການ ແລະ ການລົງທຶນ